ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ

ກອງເລຂາ

ເລກທີ.......37........./ຄຕມຊ.ກລຂ

ນະຄອນຫຼວງວຽງຈັນ, ວັນທີ.19 ກຸມພາ 2024.............

# ບົດສະຫຼຸບ

## ການຈັດຕັ້ງປະຕິບັດວຽກງານຕ້ານການຄ້າມະນຸດ ປະຈຳປີ 2023 ຂອງ ສປປ ລາວ

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການຕ້ານການຄ້າມະນຸດ ສະບັບເລກທີ 245/ນຍ, ລົງວັນທີ 03 ກໍລະກົດ 2018;
- ອີງຕາມ ແຜນງານແຫ່ງຊາດວ່າດ້ວຍການສະກັດກັ້ນ ແລະ ຕ້ານການຄ້າມະນຸດ ໄລຍະ III ແຕ່ປີ 2021-2025 ສະບັບເລກທີ 027/ຄຕມຊ, ລົງວັນທີ 31 ສິງຫາ 2021;
- ອີງຕາມ ແຜນການເຄື່ອນໄຫວວຽກງານຕົວຈິງ ຂອງກອງເລຂາຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ.

ຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ ຂອງ ສປປ ລາວ ໄດ້ທົບທວນ ແລະ ຕີລາຄາຄືນຜົນຂອງການຈັດຕັ້ງປະຕິບັດວຽກງານຕ້ານການຄ້າມະນຸດ ຕາມແຜນງານແຫ່ງຊາດ ແລະ ແຜນການເຄື່ອນໄຫວປະຈຳປີ ຂອງຕົນ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ສາມາດສະຫຼຸບ ແລະ ຕີລາຄາໄດ້ດັ່ງນີ້:

## I. ຕີລາຄາສະພາບການຄ້າມະນຸດ

### 1. ສະພາບການຄ້າມະນຸດຂອງໂລກ ແລະ ພາກພື້ນ

ການຄ້າມະນຸດ ແມ່ນບັນຫາອາຊະຍາກຳຂ້າມຊາດ ທີ່ມີການຈັດຕັ້ງທີ່ຮ້າຍແຮງ ມີຫຼາຍຮູບແບບ, ຫຼາຍວິທີການ, ມີລັກສະນະເຄືອຂ່າຍຂ້າມຊາດ, ມີລັກສະນະສັບສົນ. ຈຸດປະສົງຕົ້ນຕໍ ຂອງການຄ້າມະນຸດ ແມ່ນເພື່ອຂູດຮີດແຮງງານ ແລະ ຂູດຮີດທາງເພດ. ການຄ້າມະນຸດເປັນອາຊະຍາກຳທີ່ຮ້າຍແຮງ ແລະ ມັນສ້າງຜົນກຳໄລມະຫາສານຖັດຈາກການຄ້າຂາຍຢາເສບຕິດ ແລະ ອາວຸດເສິກ ໃຫ້ແກ່ພວກກໍ່ອາຊະຍາກຳ.

ດັ່ງທີ່ພວກເຮົາຮູ້ນຳກັນແລ້ວວ່າ, ແຕ່ລະປີ ໃນທົ່ວໂລກມີຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເປັນຈຳນວນຫຼາຍລ້ານຄົນ (ປະມານ 45,8 ລ້ານຄົນ ໃນນີ້ ມີປະມານ 10 ລ້ານຄົນເປັນເດັກ; 15,4 ລ້ານຄົນ ຖືກບັງຄັບໃຫ້ແຕ່ງງານ; 4,8 ລ້ານຄົນ ຖືກຂູດຮີດທາງເພດ)

### 2. ສະພາບການຄ້າມະນຸດຢູ່ ສປປ ລາວ

ສຳລັບ ສປປ ລາວ ກໍເປັນປະເທດໜຶ່ງໃນບັນດາປະເທດ ທີ່ໄດ້ຮັບຜົນກະທົບຈາກການຄ້າມະນຸດ ເນື່ອງຈາກທີ່ຕັ້ງພູມສັນຖານຂອງປະເທດ ມີຄວາມສະດວກໃນການເດີນທາງເຂົ້າ-ອອກຂອງພົນລະເມືອງລາວ ແລະ ຕ່າງປະເທດ ແລະ ທັງເປັນປະເທດ ທີ່ກຳລັງໄດ້ຮັບການພັດທະນາທາງດ້ານເສດຖະກິດຢ່າງກວ້າງຂວາງ ເຊິ່ງມີຄວາມຮຽກຮ້ອງຕ້ອງການກຳລັງແຮງງານນັບມື້ນັບສູງຂຶ້ນ ແລະ ກໍມີສາເຫດ ເງື່ອນໄຂຕ່າງໆອຳນວຍແກ່ການເກີດຂຶ້ນຂອງອາຊະຍາກຳຄ້າມະນຸດ (ຄວາມທຸກຍາກ, ການຂາດສະຕິລະວັງຕົວ, ຄວາມບໍ່ເຂົ້າໃຈຕໍ່ລະບຽບກົດໝາຍ, ຄວາມຮັບຮູ້ຕໍ່ສະພາບການຄ້າມະນຸດຍັງຈຳກັດຂອງປະຊາຊົນ).

ໃນໄລຍະ 01 ປີ ຜ່ານມາ ໄດ້ພົບເຫັນການຄ້າມະນຸດ ທີ່ເກີດຂຶ້ນຢູ່ປະເທດເຮົາປະກອບມີ ການຫຼອກລວງຜູ້ຖືກເຄາະຮ້າຍຄົນລາວໄປຕ່າງປະເທດ ຫຼື ຫຼອກລວງຄົນຕ່າງປະເທດເຂົ້າມາປະເທດລາວ ເພື່ອບັງຄັບແຮງງານ ແລະ ບັງຄັບທາງເພດ, ພ້ອມນັ້ນຍັງມີການຄ້າມະນຸດໃນຮູບແບບຖ່າຍທອດສົດເປືອຍກາຍ ແລະ ຮ່ວມເພດກັນ ອອກສື່ສັງຄົມອອນລາຍ.

ສະພາບການຄ້າມະນຸດທີ່ພົ້ນເດັ່ນ ໃນປີ 2023 ແມ່ນພວກຄົນບໍ່ດີໄດ້ມີການຕົວະຍົວະຫຼອກລວງຜ່ານທາງສື່ສັງຄົມອອນລາຍ ເຮັດໃຫ້ບັນດາໄວໜຸ່ມຍິງ-ຊາຍ ພາກັນຫຼົງໄຫຼ ໄປອອກແຮງງານ, ໄປແຕ່ງງານ, ໄປທ່ອງທ່ຽວ ແລ້ວຖືກບັງຄັບຂູດຮີດແຮງງານ, ໃຫ້ຂາຍບໍລິການທາງເພດ, ຖືກຮຽກຄ່າໄຖ່.

**II. ການຈັດຕັ້ງປະຕິບັດວຽກງານຕ້ານການຄ້າມະນຸດ ໃນໄລຍະ 01 ປີຜ່ານມາ**

**1. ດ້ານດີພົ້ນງານທີ່ພົ້ນເດັ່ນ:**

1.1. **ດ້ານວຽກງານນະໂຍບາຍ**

ບັນດາຂະແໜງການທີ່ຮັບຜິດຊອບວຽກງານຕ້ານການຄ້າມະນຸດ ໄດ້ຄົ້ນຄວ້າທິດທາງແຜນການ ແລະ ກຳນົດນະໂຍບາຍ ເພື່ອຕອບຕ້ານການຄ້າມະນຸດ ອອກດ້ວຍຫຼາຍວິທີການ ຄື:

**1.1.1** **ຂະແໜງການປ້ອງກັນຄວາມສະຫງົບ** ໄດ້ຈັດກອງປະຊຸມສະຫຼຸບການຈັດຕັ້ງປະຕິບັດວຽກງານຕ້ານການຄ້າມະນຸດ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງຄະນະກຳມະການຕ້ານການຄ້າມະນຸດ ໃນວັນທີ 17 ມັງກອນ 2023 ທີ່ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ ມີຜູ້ເຂົ້າຮ່ວມ 134 ຄົນ, ຍິງ 18 ຄົນ; ໄດ້ສຳເລັດການຮ່າງບົດສະຫຼຸບການຈັດຕັ້ງປະຕິບັດວຽກງານຕ້ານການຄ້າມະນຸດ ປະຈຳປີ 2022 ແລະ ໄດ້ສົ່ງບົດລາຍງານໃຫ້ສາກົນ ເພື່ອນຳໃຊ້ເປັນຂໍ້ມູນໃນການຈັດອັນດັບວຽກງານຕ້ານການຄ້າມະນຸດ ຢູ່ໃນທົ່ວໂລກ ເຊິ່ງໃນປີ 2022 ສປປ ລາວ ແມ່ນໄດ້ຖືກຈັດຢູ່ໃນອັນດັບ 02 (Tier 2) ຄືກັບປີທີ່ຜ່ານ ເຊິ່ງຖືວ່າຍັງຢູ່ອັນດັບທີ່ດີຖ້າທຽບໃສ່ບັນດາປະເທດເພື່ອນມິດໃກ້ຄຽງ ແລະ ໃນອາຊຽນ; ໄດ້ຈັດກອງປະຊຸມປຶກສາຫາລືຜ່ານບົດການເຄື່ອນໄຫວຂອງຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ ໃນວັນທີ 14 ມິຖຸນາ 2023 ທີ່ກົມໃຫຍ່ຕຳຫຼວດ ມີຜູ້ເຂົ້າຮ່ວມ 23 ຄົນ, ຍິງ 08 ຄົນ; ໄດ້ຕິດຕາມຄະນະທ່ານຮອງນາຍົກລັດຖະມົນຕີ, ປະທານຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ ມອບ-ຮັບສູນຮັບຕ້ອນຊົ່ວຄາວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ 08 ແຂວງພາກເໜືອ ໃນວັນທີ 03 ພຶດສະພາ 2023 ທີ່ແຂວງຫຼວງນ້ຳທາ ແລະ ໄດ້ຕິດຕາມຄະນະທ່ານຮອງນາຍົກລັດຖະມົນຕີ, ປະທານຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ ປະກາດການຈັດຕັ້ງ ກອງບັນຊາການປ້ອງກັນຄວາມສະຫງົບ ເຂດເສດຖະກິດພິເສດສາມຫຼ່ຽມຄຳ ວັນທີ 05 ພຶດສະພາ 2023 ທີ່ແຂວງບໍ່ແກ້ວ; ສຳເລັດການຈັດກອງປະຊຸມສະເໜີແນວຄວາມຄິດເພື່ອປະກອບຄຳເຫັນໃສ່ບາງມາດຕາກົດໝາຍຕ້ານການຄ້າມະນຸດ ໃນວັນທີ 28 ກຸມພາ 2023 ທີ່ກົມໃຫຍ່ຕຳຫຼວດ ມີຜູ້ເຂົ້າຮ່ວມ 12 ຄົນ, ຍິງ 05 ຄົນ; ໄດ້ສຳເລັດການຈັດກອງປະຊຸມສະລຸບການຈັດຕັ້ງປະຕິບັດວຽກງານຕ້ານການຄ້າມະນຸດ ປະຈຳປີ 2023 ແລະ ທິດທາງແຜນການ ປີ 2024 ຂອງຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ ໃນວັນທີ 14 ທັນວາ 2023 ທີ່ ສະໂມສອນ ກະຊວງປ້ອງກັນຄວາມສະຫງົບ (ສະໜາມມ້າ) ນະຄອນຫຼວງວຽງຈັນ ມີຜູ້ເຂົ້າຮ່ວມ 139 ຄົນ, ຍິງ 21 ຄົນ.

**1.1.2** **ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ** ໄດ້ສຳເລັດການສ້າງກົດໝາຍວ່າດ້ວຍການຈັດຫາງານ ພ້ອມທັງໄດ້ຮັບການປະກາດນຳໃຊ້ ຈາກປະທານປະເທດ ແຫ່ງ ສປປ ລາວ ໂດຍລັດຖະດຳລັດ ປະກາດໃຊ້ກົດໝາຍວ່າດ້ວຍການຈັດຫາງານ ສະບັບເລກທີ 093/ປປທ ລົງວັນທີ 30 ສິງຫາ 2023; ໄດ້ສຳເລັດຮ່າງຂໍ້ຕົກລົງວ່າດ້ວຍການຈັດສົ່ງແຮງງານລາວໄປເຮັດວຽກຕາມລະດູການຢູ່ ສ.ເກົາຫຼີ ພ້ອມທັງໄດ້ສະເໜີຕໍ່ຄະນະນຳກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ ເພື່ອພິຈາລະນາ;

**1.1.3** **ສູນກາງສະຫະພັນແມ່ຍິງລາວ** ໄດ້ສຳເລັດການສ້າງຄູ່ມືຄູຝຶກອົບຮົມຄູ່ມືການປົກປ້ອງ, ຊ່ວຍເຫຼືອ ແລະ ສົ່ງຕໍ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ; ໄດ້ສຳເລັດການຮ່າງຄູ່ມືການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກການຄ້າມະນຸດກັບຄືນສູ່ຄອບຄົວ ແລະ ສັງຄົມ; ໄດ້ຮ່າງຄູ່ມືມາດຕະຖານຕໍ່າສຸດໃນການປົກປ້ອງ ແລະ ຊ່ວຍ ເຫຼືອຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ສຳລັບສູນ ພັກເຊົາ;

**1.1.4** **ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ** ໄດ້ເຂົ້າຮ່ວມຕິດຕາມທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ, ປະທານຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ ເຄື່ອນໄຫວວຽກງານຢູ່ເຂດເສດຖະກິດພິເສດສາມຫຼ່ຽມຄຳ, ພ້ອມທັງໄດ້ເຮັດບົດບັນທຶກ, ບົດລາຍງານ ແລະ ແຈ້ງການ ຕໍ່ທິດຊີ້ນຳຂອງຂັ້ນເທິງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານຄຸ້ມຄອງເຂດເສດຖະກິດ

ພິເສດສາມຫຼ່ຽມຄຳ. ພ້ອມກັນນີ້, ໄດ້ເຂົ້າຮ່ວມຮ່າງ ແລະ ປັບປຸງກົດໝາຍ ວ່າດ້ວຍການຈັດຫາງານ ຮ່ວມກັບຂະແໜງການກ່ຽວຂ້ອງ ແລ້ວນຳເອົາຮ່າງກົດໝາຍດັ່ງກ່າວ ເຂົ້າພິຈາລະນາໃນກອງປະຊຸມລັດຖະບານ ແລະ ໄດ້ຮ່າງນຳສົ່ງໃຫ້ສະພາແຫ່ງຊາດ ເພື່ອພິຈາລະນາ ແລະ ໄດ້ຕິດຕາມທາງສຽງຂອງສັງຄົມຜ່ານສື່ສັງຄົມອອນລາຍ ແລະ ຮັບຄຳສະເໜີຂອງປະຊາຊົນ ຜ່ານສາຍດ່ວນ ຂອງລັດຖະບານ (1516) ທີ່ກ່ຽວຂ້ອງກັບການຄ້າມະນຸດ ເປັນຕົ້ນ ກຸ່ມຄົນບໍ່ດີໄດ້ເອົາເດັກນ້ອຍມາເຕັ້ນໂຊ ແລະ ອັດວີດີໂອທີ່ມີເນື້ອໃນລາມົກອານາຈານ ລົງສື່ສັງຄົມອອນລາຍ, ການເຮັດໄປວຽກຂອງແຮງງານລາວ ຢູ່ເຂດເສດຖະກິດພິເສດສາມຫຼ່ຽມຄຳພ້ອມທັງສົ່ງຄຳສະເໜີໃຫ້ຂະແໜງການ ແລະ ທ້ອງຖິ່ນ ກ່ຽວຂ້ອງກວດກາແກ້ໄຂ ແລະ ຕອບ ທສມຍ ເພື່ອແຈ້ງໃຫ້ສັງ ຄົມຮັບຊາບ ຜ່ານເວັບໄຊຂອງລັດຖະບານ ກ່ຽວກັບການແກ້ໄຂບັນຫາດັ່ງກ່າວ;

1.1.5 **ຂະແໜງການຍຸຕິທຳ** ສຳເລັດການປັບປຸງກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກປັດຈຸບັນ ກົດໝາຍດັ່ງກ່າວ ສະພາແຫ່ງຊາດ ໄດ້ຮັບຮອງ ແລະ ປະທານປະເທດປະກາດໃຊ້ແລ້ວ ໃນວັນທີ 30 ສິງຫາ 2023; ສຳເລັດການປັບປຸງຮ່າງຄຳແນະນຳ ກ່ຽວກັບການຜັນຂະຫຍາຍດຳລັດ ວ່າດ້ວຍການໂຄສະນາເຜີຍແຜ່ນິຕິກຳ; ໄດ້ສຳເລັດປັບປຸງເນື້ອໃນ ຮ່າງຄຳແນະນຳ ກ່ຽວກັບການຜັນຂະຫຍາຍ ດຳລັດວ່າດ້ວຍການໂຄສະນາເຜີຍແຜ່ນິຕິກຳ; ສຳເລັດການຂຽນປຶ້ມຄູ່ມືເຫຼັ້ມ 04 ແລະ ເຫຼັ້ມ 05 ເພື່ອຮັບໃຊ້ວຽກງານໂຄສະນາເຜີຍແຜ່ກົດໝາຍ; ໄດ້ສ້າງຮ່າງໃບປະເມີນຜົນຄວາມຮູ້ທາງດ້ານກົດໝາຍໃຫ້ພົນລະເມືອງ ກ່ຽວກັບວຽກງານຕ້ານການຄ້າມະນຸດ ແລະ ວຽກງານອື່ນໆ; ສ້າງຮ່າງເກັບກຳສະຖິຕິການໂຄສະນາເຜີຍແຜ່ກົດໝາຍ ຂອງບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ແລະ ທ້ອງຖິ່ນເປັນລະບົບອອນລາຍ;

1.1.6 **ຂະແໜງການສາທາລະນະສຸກ** ໄດ້ຈັດກອງປະຊຸມຄົບຄະນະກຳມະການຕ້ານການຄ້າມະນຸດ ແລະ ສະຫຼຸບການເຄື່ອນໄຫວວຽກງານຕ້ານການຄ້າມະນຸດ ປະຈຳປີ 2022 ແລະ ທິດທາງແຜນການ ປີ 2023 ໃນວັນທີ 10 ກຸມພາ 2023 ທີ່ແຂວງວຽງຈັນ ມີຜູ້ເຂົ້າຮ່ວມ 62 ຄົນ, ຍິງ 26 ຄົນ;

1.1.7 **ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ** ໄດ້ຈັດກອງປະຊຸມສະຫຼຸບຖອດຖອນບົດຮຽນການຈັດຕັ້ງປະຕິບັດວຽກງານຕ້ານການຄ້າມະນຸດ ປີ 2022 ໃນວັນທີ 30 ເມສາ 2023 ທີ່ແຂວງວຽງຈັນ ມີຜູ້ເຂົ້າຮ່ວມ 85 ຄົນ, ຍິງ 43 ຄົນ; ສຳເລັດໃນການສ້າງກົດໝາຍວ່າດ້ວຍເຍົາວະຊົນລາວ ຊຶ່ງໄດ້ຮັບຮອງໃນກອງປະຊຸມສະໄໝສາມັນ ຄັ້ງທີ 05 ຂອງສະພາແຫ່ງຊາດ ຊຸດທີ IX;

1.1.8 **ສູນກາງສະຫະພັນກຳມະບານລາວ** ໄດ້ຈັດກອງປະຊຸມຖອດຖອນບົດຮຽນການຈັດຕັ້ງປະຕິບັດວຽກງານຕ້ານການຄ້າມະນຸດ ປະຈຳປີ 2022 ໃນວັນທີ 06 ກຸມພາ 2023 ທີ່ແຂວງວຽງຈັນ ມີຜູ້ເຂົ້າຮ່ວມ 43 ຄົນ, ຍິງ 17 ຄົນ;

1.1.9 **ຂະແໜງການປ້ອງກັນປະເທດ** ຈັດກອງປະຊຸມປຶກສາຫາລືກ່ຽວກັບວຽກງານຕ້ານການຄ້າມະນຸດ ໃນວັນທີ 18 ມັງກອນ 2023 ທີ່ນະຄອນຫຼວງວຽງຈັນ ມີຜູ້ເຂົ້າຮ່ວມ 25 ຄົນ, ຍິງ 06 ຄົນ;

1.1.10 **ນອກຈາກນີ້, ບັນດາຄະນະກຳມະການຕ້ານການຄ້າມະນຸດ ແຂວງ ແລະ ນະຄອນຫຼວງວຽງຈັນໄດ້ຈັດຕັ້ງປະຕິບັດບັນດາກິດຈະກຳຕ່າງໆຄື:**

1.1.11 ໄດ້ຈັດກອງປະຊຸມສະຫຼຸບປີວຽກງານຕ້ານການຄ້າມະນຸດ, ກອງປະຊຸມແລກປ່ຽນບົດຮຽນທາງດ້ານວິຊາການ, ກອງປະຊຸມທາບທາມການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ ແລະ ກົດໝາຍວ່າດ້ວຍສະຫະພັນແມ່ຍິງ ແລະ ກອງປະຊຸມຄະນະກຳມະການປົກປ້ອງ ແລະ ຊ່ວຍເຫຼືອເດັກ ມີຜູ້ເຂົ້າຮ່ວມ 567 ຄົນ, ຍິງ 151 ຄົນ; ພ້ອມນັ້ນ ກໍ່ໄດ້ລົງຕິດຕາມ, ຊຸກຍູ້ ການຈັດຕັ້ງປະຕິບັດວຽກງານຕ້ານການຄ້າມະນຸດ ໃຫ້ບັນດາເມືອງ ມີຜູ້ເຂົ້າຮ່ວມ 234 ຄົນ, ຍິງ 72 ຄົນ.

1.2. <u>ດ້ານວຽກງານການປ້ອງກັນ</u>

ບັນດາຂະແໜງການຮັບຜິດຊອບວຽກງານຕ້ານການຄ້າມະນຸດ ຂອງຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ, ແຂວງ, ນະຄອນຫຼວງວຽງຈັນ ແລະ ບັນດາຂະແໜງການທີ່ກ່ຽວຂ້ອງ ໄດ້ສຸມໃສ່ເຮັດວຽກງານປ້ອງກັນດ້ວຍຫຼາຍຮູບແບບ ຊຶ່ງສະແດງອອກຄື:

**1.2.1** **ຂະແໜງການປ້ອງກັນຄວາມສະຫງົບ** ໄດ້ຜະລິດຂ່າວອອກອາກາດທາງໂທລະພາບ ປກສ ລາຍການປະຊາຮ່ວມໃຈຕ້ານໄພການຄ້າມະນຸດ ທຸກວັນເສົາ ຫາ ວັນອາທິດ ເວລາ 10:00-10:30 ໄດ້ 57 ຄັ້ງ; ຜະລິດວິທະຍຸ ປກສ ອອກອາກາດ ເວລາ 07:30-08:30 ໂມງ ທຸກວັນເສົາ ຫາ ວັນອາທິດ ທາງຄື້ນວິທະຍຸ FM 101,5 MHz ໄດ້ 84 ຄັ້ງ ແລະ ອອກອາກາດທາງວິທະຍຸກອງທັບ ໄດ້ 370 ຄັ້ງ; ໄດ້ນໍາເອົາຂໍ້ມູນບັນດາການເຄື່ອນໄຫວວຽກງານຕ້ານການຄ້າມະນຸດ, ໂຄສະນາສັ້ນ, ລະຄອນ, ນິຕິກໍາ ແລະ ອື່ນໆທີ່ກ່ຽວຂ້ອງ ລົງເຜີຍແຜ່ໃນເວັບໄຊ້ທາງການ ຂອງຄະນະກໍາມະການຕ້ານການຄ້າມະນຸດລະດັບຊາດ (laosncatip.gov.la), ລົງທາງ ເຟດບຸກ ມີຜູ້ຕິດຕາມ 5,029 ຄົນ, ຊ່ອງຢູທູບ ມີຜູ້ຕິດຕາມ 20,840 ຄົນ, ຕິກຕອກ ມີຜູ້ຕິດຕາມ 10,100 ຄົນ ແລະ ໄດ້ເອົາຂ່າວການເຄື່ອນໄຫວວຽກງານຕ້ານການຄ້າມະນຸດ ລົງເວັບໄຊ ຈໍານວນ 15 ຂ່າວ; ໄດ້ຈັດກອງປະຊຸມຜ່ານເນື້ອໃນສະປອດໂຄສະນາ ຕ້ານການຄ້າມະນຸດ 10 ເລື່ອງ ໃນວັນທີ 08 ມິຖຸນາ 2023 ທີ່ກົມໃຫຍ່ຕໍາຫຼວດ ມີຜູ້ເຂົ້າຮ່ວມທັງໝົດ 19 ຄົນ, ຍິງ 06 ຄົນ; ໄດ້ເກັບກໍາຂໍ້ມູນ ຂອງພົນລະເມືອງລາວທີ່ໄປແຕ່ງດອງກັບຄົນຕ່າງປະເທດ ທີ່ມີເອກະສານຖືກຕ້ອງມີຈໍານວນ 168 ຄົນ, ເປັນຍິງທັງໝົດ; ໄດ້ໂຈະການເດີນທາງຂອງພົນລະເມືອງລາວທີ່ນໍາໃຊ້ວີຊ່າທ່ອງທ່ຽວ ຈະເດີນທາງອອກປະເທດ ມີຈໍານວນ 26 ຄົນ, ເປັນຍິງໝົດ; ຮັບພົນລະເມືອງລາວທີ່ຖືກສົ່ງກັບມາຈາກ ສປ ຈີນ ຈໍານວນ 11 ຄົນ, ຍິງທັງໝົດ, ສາເຫດສົ່ງກັບແມ່ນຖືກຕົວະຍົວະໄປແຕ່ງດອງ, ຢູ່ເກີນກໍານົດ, ຈໍານວນໜຶ່ງຖືກປະຕິເສດບໍ່ຄົບເງື່ອນໄຂເຂົ້າປະເທດ; ໄດ້ຮັບໜັງສືສະເໜີ ຈາກກອງບັນຊາການເຂດເສດຖະກິດພິເສດສາມຫຼ່ຽມຄໍາ ຈໍານວນ 07 ສະບັບເລື່ອງ: ນໍາສົ່ງຄົນຕ່າງປະເທດທີ່ຖືກສົງໃສວ່າ ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນນັ້ນ ມີຈໍານວນ 36 ຄົນ, ຍິງ 06 ຄົນ, ມີ 05 ສັນຊາດ: ສັນຊາດຈີນ ມີ 13 ຄົນ, ຍິງ 01 ຄົນ, ສັນຊາດຟີລິບປິນ 08 ຄົນ, ຍິງ 03 ຄົນ, ສັນຊາດຫວຽດນາມ ມີ 05 ຄົນ, ເປັນຊາຍທັງໝົດ, ສັນຊາດຕູນິເຊຍ ມີ 04 ຄົນ, ຍິງ 02 ຄົນ, ສັນຊາດເກົາຫຼີໃຕ້ 01 ຄົນ; ໄດ້ຈັດຝຶກອົບຮົມວຽກງານວິຊາສະເພາະກວດຄົນເຂົ້າ-ອອກ ສປປ ລາວ ຕິດພັນກັບວຽກງານປ້ອງກັນຕ້ານ ແລະ ສະກັດກັ້ນຂະບວນການຄ້າມະນຸດ ຈໍານວນ 02 ຄັ້ງ ໃນວັນທີ 18 ກໍລະກົດ 2023 ທີ່ນະຄອນຫຼວງວຽງຈັນ ແລະ ວັນທີ 11 ກັນຍາ 2023 ດ່ານສາກົນ ຂົວມິດຕະພາບລາວ-ໄທ ແຫ່ງທີ 01 ມີຜູ້ເຂົ້າຮ່ວມ 115 ຄົນ, ຍິງ 46 ຄົນ; ຈັດຝຶກອົບຮົມວຽກງານຂ່າວສານທາງໂທລະພາບວິທະຍຸວຽກງານສໍານວນ-ສໍາເນົາ ແລະ ສິ່ງຟ້ອງໃຫ້ພະນັກງານກົມຕໍາຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດ ໃນວັນທີ 04-08 ກັນຍາ 2023 ທີ່ ແຂວງ ວຽງຈັນ ມີຜູ້ເຂົ້າຮ່ວມ 33 ຄົນ, ຍິງ 12 ຄົນ; ລົງໂຄສະນາເຜີຍແຜ່ຜົນຮ້າຍຂອງການຄ້າມະນຸດ ຢູ່ 05 ຈຸດຄື: ຄິວລົດໂດຍສານສາຍເໜືອ, ສາຍໃຕ້, ຂົວມິດຕະພາບລາວ-ໄທແຫ່ງທີ 01, ສະຖານີລົດໄຟລາວ-ຈີນ ນະຄອນຫຼວງວຽງຈັນ ແລະ ກົມກົງສູນກະຊວງການຕ່າງປະເທດ ໃນວັນທີ 25-27 ກໍລະກົດ 2023; ສໍາເລັດການລົງມອບປ້າຍໂຄສະນາວຽກງານຕ້ານການຄ້າມະນຸດ ໃຫ້ບັນດາແຂວງໄດ້ 07 ແຂວງ ໃນວັນທີ 14-19 ສິງຫາ 2023 ທີ່ແຂວງ ບໍລິຄໍາໄຊ, ສະຫວັນນະເຂດ ແລະ ຈໍາປາສັກ ໃນວັນທີ 11-15 ກັນຍາ 2023 ທີ່ແຂວງ ໄຊຍະບູລີ, ອຸດົມໄຊ, ຫຼວງນໍ້າທາ ແລະ ບໍ່ແກ້ວ; ໄດ້ສໍາເລັດການສ້າງສະປອດໂປໂໝດລະນຶກວັນສາກົນຕ້ານການຄ້າມະນຸດ ວັນທີ 30 ກໍລະກົດ 2023; ສໍາເລັດສ້າງສະປ໋ອດໂຄສະນາວຽກງານສະກັດກັ້ນ ແລະ ຕ້ານການຄ້າມະນຸດ ຈໍານວນ 03 ເລື່ອງຄື: ເຕັ້ນໂຊເປືອຍ, ດອກໄມ້ເຊີຍຊົມ ແລະ ເງິນກ້ອນສຸດທ້າຍ; ສໍາເລັດການປັບປຸງເນື້ອໃນຫົວໂຄສະນາຕ້ານການຄ້າມະນຸດ (ສະປອດ) ຈໍານວນ 10 ເລື່ອງ ທັນໄດ້ລືມກັນ, ແຕ່ງດອງແອບແຝງ, ຄິດໄປເອງ, ໃຈງ່າຍ, ສອງເອື້ອຍນ້ອງ, ຮັບລ້ຽງ, ນະຣົກຕ່າງແດນ, ຖືພາແທນ, ສະຕິ ແລະ ຄິດກ່ອນຕັດສິນໃຈ; ສໍາເລັດການປັບປຸງຄູ່ມືຝຶກອົບຮົມການດໍາເນີນຄະດີຄ້າມະນຸດ ແລະ ການກໍານົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ;

**1.2.2** **ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ** ໄດ້ແຕ່ງຕັ້ງຄະນະຮັບຜິດຊອບຈໍານວນ 07 ທ່ານ (ຊາຍ) ໄປປະຈໍາຢູ່ເຂດເສດຖະກິດພິເສດສາມລ່ຽມຄໍາ ເພື່ອຮັບຜິດຊອບການຂຶ້ນທະບຽນແຮງງານລາວ ແລະ ແຮງງານຕ່າງປະເທດຕາມວາລະແຫ່ງຊາດ ຊຶ່ງນັບແຕ່ເດືອນກັນຍາ 2022 ມາເຖິງປັດຈຸບັນ ແມ່ນຍັງບໍ່ສາມາດຂຶ້ນທະບຽນແຮງງານໄດ້ ເນື່ອງຈາກຄະນະຄຸ້ມຄອງເຂດ ແລະ ສະພາບໍລິຫານເຂດ ຍັງບໍ່ມອບວຽກການຂຶ້ນທະບຽນ ແລະ ອອກບັດອະນຸຍາດເຮັດວຽກໃຫ້ຄະນະຮັບຜິດຊອບເທື່ອ; ໄດ້ໂຄສະນາຜ່ານທາງຂ່າວສານກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເພື່ອໃຫ້ແຮງງານ ແລະ ສັງຄົມ ມີຄວາມເຂົ້າໃຈຫຼາຍຂຶ້ນກ່ຽວ

ກັບຂັ້ນຕອນການໄປເຮັດວຽກຢູ່ຕ່າງປະເທດແບບຖືກຕ້ອງຕາມກົດໝາຍ; ໄດ້ຈັດຝຶກອົບຮົມສ້າງຄວາມເຂັ້ມແຂງໃຫ້ ພະນັກງານ-ລັດຖະກອນ ກ່ຽວກັບເຄື່ອນຍ້າຍແຮງງານແບບປອດໄພ ວັນທີ 26-27 ມິຖຸນາ 2023 ທີ່ ແຂວງວຽງຈັນ ມີຜູ້ເຂົ້າຮ່ວມ 40 ຄົນ, ຍິງ 13 ຄົນ; ໄດ້ຈັດກອງປະຊຸມສຳມະນາການຍົກສູງຄຸນນະພາບການບໍລິການຈັດຫາງານ ຂອງວິສາຫະກິດບໍລິການຈັດຫາງານໃນຂອບເຂດທົ່ວປະເທດ ໃນວັນທີ 21 ສິງຫາ 2023 ທີ່ ນະຄອນຫຼວງວຽງຈັນ ມີຜູ້ເຂົ້າຮ່ວມ 68 ຄົນ, ຍິງ 30 ຄົນ; ໄດ້ຈັດກອງປະຊຸມປຶກສາຫາລືການຂຶ້ນທະບຽນໃຫ້ແຮງງານຕ່າງປະເທດ ໃນເຂດເສດຖະກິດພິເສດສາມຫຼ່ຽມຄຳ ແລະ ວາງແຜນຕິດຕາມ, ຊຸກຍູ້ ແລະ ກວດກາການນຳໃຊ້ແຮງງານ ຢູ່ບັນດາຫົວໜ່ວຍແຮງງານ ໃນວັນທີ 18 ຕຸລາ 2023 ທີ່ ສະພາບໍລິຫານເຂດເສດຖະກິດພິເສດສາມຫຼ່ຽມຄຳ ມີຜູ້ເຂົ້າຮ່ວມ 14 ຄົນ, ຍິງ 0 ຄົນ; ໄດ້ເຊັນບົດບັນທຶກຄວາມເຂົ້າໃຈວ່າດ້ວຍ ການຮ່ວມມືຈັດຕັ້ງປະຕິບັດວຽກງານຄຸ້ມຄອງການໂອນເງິນຂ້າມແດນຂອງແຮງງານລາວຢູ່ຕ່າງປະເທດ ແລະ ແຮງງານຕ່າງປະເທດຢູ່ ສປປ ລາວ ຮ່ວມກັບທະນາຄານ ແຫ່ງຊາດລາວ ໃນວັນທີ 25 ຕຸລາ 2023;

1.2.3 **ສູນກາງສະຫະພັນແມ່ຍິງລາວ** ຈັດກອງປະຊຸມປຶກສາຫາລືວຽກງານໂຄສະນາປູກຈິດສຳນຶກກ່ຽວກັບກົນໄກການ ຮັບແຈ້ງຄວາມ, ບົດລາຍງານ, ຄຳຮ້ອງທຸກ ແລະ ການຮັບມືຊ່ວຍເຫຼືອແບບຮີບດ່ວນເພື່ອຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ຈາກການຂູດຮີດທາງເພດ, ຄວາມຮຸນແຮງ ແລະ ການຄ້າມະນຸດ ໃນວັນທີ 27-29 ມິຖຸນາ 2023 ທີ່ແຂວງວຽງຈັນ ມີຜູ້ເຂົ້າຮ່ວມ 46 ຄົນ, ຍິງ 27 ຄົນ;

1.2.4 **ຂະແໜງການ ການຕ່າງປະເທດ** ໄດ້ຈັດຝຶກອົບຮົມ ກ່ຽວກັບ ວຽກງານການຕ້ານການຄ້າມະນຸດ ໃຫ້ແກ່ພະນັກງານກະຊວງການຕ່າງປະເທດ, ຄະນະພົວພັນການຕ່າງປະເທດສູນກາງພັກ ແລະ ບາງກະຊວງທີ່ກ່ຽວຂ້ອງ ທີ່ໄດ້ຖືກແຕ່ງຕັ້ງ ຫຼື ເປັນເປົ້າໝາຍຈະຖືກແຕ່ງຕັ້ງໄປປະຈຳຢູ່ ສຳນັກງານຜູ້ຕາງໜ້າ ແຫ່ງ ສປປ ລາວ ປະຈຳຢູ່ຕ່າງປະເທດ, ໃນວັນທີ 09-10 ກຸມພາ 2023, ທີ່ ກະຊວງການຕ່າງປະເທດ ມີຜູ້ເຂົ້າຮ່ວມ 125 ຄົນ, ຍິງ 67 ຄົນ; ໄດ້ຈັດກອງປະຊຸມເຜີຍແຜ່ ກ່ຽວກັບການຈັດຕັ້ງປະຕິບັດສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ, ກົດໝາຍ ແລະ ນິຕິກຳພາຍໃນທີ່ກ່ຽວຂ້ອງກັບວຽກງານຕ້ານການຄ້າມະນຸດ ໃຫ້ແກ່ຊາວໜຸ່ມກະຊວງການຕ່າງປະເທດ ແລະ ບາງຂະແໜງການທີ່ກ່ຽວຂ້ອງ ວັນທີ 23-24 ກຸມພາ 2023, ທີ່ ກະຊວງການຕ່າງປະເທດ ມີຜູ້ເຂົ້າຮ່ວມ 245 ຄົນ, ຍິງ 126 ຄົນ;

1.2.5 **ຂະແໜງການຍຸຕິທຳ** ໄດ້ໂຄສະນາເຜີຍແຜ່ກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ສະປອດ ກ່ຽວກັບການສະກັດກັ້ນຕ້ານການຄ້າມະນຸດ ແລະ ນິຕິກຳອື່ນໆ ຜ່ານໂທລະພາບ ຂອງກະຊວງ ປກສ 48 ຄັ້ງ; ໄດ້ນຳເອົາເນື້ອໃນຂອງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍໂດຍສະເພາະ ແມ່ນກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ພາກທີ I, II, ແລະ III ບາງມາດຕາ ເຊັ່ນ: ນິຍາມ, ການຕ້ານ, ອົງປະກອບ, ການປ້ອງກັນ, ການຊ່ວຍເຫຼືອກ່ຽວກັບການຄ້າມະນຸດ, ແລະ ສະປອດ ກ່ຽວກັບຕ້ານການຄ້າມະນຸດ ເຜີຍແຜ່ຜ່ານທາງວິທະຍຸກະຈາຍສຽງແຫ່ງຊາດລາວ, ລາຍການຄວາມຮູ້ທາງດ້ານກົດໝາຍ ທາງລະບົບ FM 103.7 MKz ເວລາ 14:30 ຫາ 15:00 ພາກພາສາລາວ ອອກອາກາດທຸກໆ ວັນຈັນ, ວັນພຸດ ແລະ ວັນສຸກ ໄດ້ 144 ຄັ້ງ ໃນນັ້ນເນື້ອໃນກ່ຽວກັບການຕ້ານການຄ້າມະນຸດ ຈຳນວນ 24 ຄັ້ງ, ພາກພາສາມົ້ງ ໃນລະບົບ AM 92.0 MKz ທຸກໆວັນເສົາ ເວລາ 12:30 ຫາ 13:00 ໄດ້ 72 ຄັ້ງ; ເນື້ອໃນກ່ຽວກັບການຕ້ານການຄ້າມນຸດ ໄດ້ 08 ຄັ້ງ ແລະ ພາກພາສາກຶມມຸ ໃນລະບົບ AM 560 MKHz ອອກອາກາດທຸກໆ ວັນເສົາ ເວລາ 14:30-15:00 ໂມງ ໄດ້ 48 ຄັ້ງ ເນື້ອໃນກ່ຽວກັບການຕ້ານການຄ້າມະນຸດ ໄດ້ 08 ຄັ້ງ; ໄດ້ຈັດກອງປະຊຸມຝຶກອົບຮົມກົດໝາຍ ແລະ ນິຕິກຳທີ່ກ່ຽວກັບວຽກງານຕ້ານການຄ້າມະນຸດ ໃຫ້ພະນັກງານພະແນກຍຸຕິທຳ ວັນທີ 06-08 ກຸມພາ 2023 ທີ່ແຂວງຜົ້ງສາລີ ມີຜູ້ເຂົ້າຮ່ວມ 44 ຄົນ, ຍິງ 13 ຄົນ; ໄດ້ອອກໃບຢັ້ງຢືນການເອົາເດັກໄປເປັນລູກລ້ຽງຂອງຄົນຕ່າງປະເທດ ທັງໝົດ 08 ສະບັບ ຄື: ສັນຊາດ ອາເມລິກາ 02 ສະບັບ, ຍີ່ປຸ່ນ 01 ສະບັບ, ຝຣັ່ງ 03 ສະບັບ; ອອດສເຕຣເລັຍ 01 ສະບັບ ແລະ ການາດາ 01 ສະບັບ; ໄດ້ຈັດກອງປະຊຸມຮ່ວມກັບຄະນະຮັບຜິດຊອບພິຈາລະນາການເອົາເດັກໄປເປັນລູກລ້ຽງຂັ້ນສູນກາງ ກ່ຽວກັບການສຳນວນຄຳຮ້ອງຂໍເອົາເດັກໄປເປັນລູກລ້ຽງຂອງຄົນຕ່າງປະເທດ 01 ສຳນວນ ແລະ ຂໍ້ມູນເດັກ 01 ສຳນວນ ໃນວັນທີ 04 ເມສາ 2023 ມີຜູ້ເຂົ້າຮ່ວມ 11 ຄົນ, ຍິງ 02 ຄົນ; ໄດ້ລົງໂຄສະນາເຜີຍແຜ່ກົດໝາຍ ແລະ ນິຕິກຳຕ່າງໆ

ໃຫ້ແກ່ພະນັກງານ ໃນວັນທີ 26-30 ມິຖຸນາ 2023 ທີ່ແຂວງບໍ່ແກ້ວ ມີຜູ້ເຂົ້າຮ່ວມ 43 ຄົນ, ຍິງ 19 ຄົນ; ໄດ້ຈັດກອງປະຊຸມຜະລິດສື່ໂຄສະນາກົດໝາຍ ວ່າດ້ວຍການຟື້ນຟູ ແລະ ລົ້ມລະລາຍ ຂອງວິສາຫະກິດ ໃນວັນທີ 19-23 ມິຖຸນາ 2023 ທີ່ແຂວງວຽງຈັນ ມີຜູ້ເຂົ້າຮ່ວມ 24 ຄົນ, ຍິງ 10 ຄົນ; ໄດ້ລົງເຜີຍແຜ່ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ກ່ຽວກັບຄະດີຄ້າມະນຸດ ໃຫ້ແກ່ພະນັກງານ ແລະ ປະຊາຊົນ ໃນວັນທີ 09 ມິຖຸນາ 2023 ທີ່ແຂວງວຽງຈັນ ມີຜູ້ເຂົ້າຮ່ວມ 140 ຄົນ, ຍິງ 44 ຄົນ; ຈັດກອງປະຊຸມຄະນະຮັບຜິດຊອບກະກຽມປະເມີນຜົນ ຄວາມຮູ້ທາງດ້ານກົດໝາຍ ຂອງພົນລະເມືອງ ໃນວັນທີ 22-23 ສິງຫາ 2023 ທີ່ແຂວງວຽງຈັນ ມີຜູ້ເຂົ້າຮ່ວມ 27 ຄົນ, ຍິງ 09 ຄົນ; ຈັດກອງປະຊຸມຝຶກອົບຮົມ ວຽກງານຈົດໝາຍທາງລັດຖະການ ໃຫ້ແກ່ຜູ້ປະສານງານ ກ່ຽວກັບການເຜີຍແຜ່ນິຕິກຳ ຂັ້ນແຂວງ ລົງເວບໄຊຈົດໝາຍເຫດທາງລັດຖະການ ແລະ ການເຜີຍແຜ່ໃຫ້ປະຊາຊົນບັນດາເຜົ່າຮັບຮູ້ວິທີການຊອກຄາວໂຫຼດເອົາກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຢູ່ໃນເວບໄຊດັ່ງກ່າວ 08 ແຂວງ ພາກເໜືອ ໃນວັນທີ 19-22 ມິຖຸນາ 2023 ທີ່ແຂວງວຽງຈັນ ແລະ 06 ແຂວງພາກກາງໃນວັນທີ 04-08 ກັນຍາ 2023 ບໍລິຄຳໄຊ ມີຜູ້ເຂົ້າຮ່ວມທັງໝົດ 91 ຄົນ, ຍິງ 32 ຄົນ; ໄດ້ສຳເລັດການຄົ້ນຄວ້າສຳນວນຄຳຮ້ອງຂໍການເອົາເດັກໄປເປັນລູກລ້ຽງຂອງຄົນຕ່າງປະເທດໄດ້ທັງໝົດ 02 ສຳນວນ ມີສັນຊາດ ຍີ່ປຸ່ນ ແລະ ສັນຊາດ ການາດາ; ຈັດກອງປະຊຸມຄະນະຮັບຜິດຊອບປັບປຸງດຳລັດວ່າດ້ວຍການເອົາເດັກໄປເປັນລູກລ້ຽງ ເພື່ອປຶກສາຫາລື ແລະ ກະກຽມຄວາມພ້ອມໃນການປັບປຸງດຳລັດກັ່ງກ່າວ ໃນວັນທີ 24 ສິງຫາ 2023 ທີ່ກະຊວງຍຸຕິທຳ ມີຜູ້ເຂົ້າຮ່ວມ 18 ຄົນ, ຍິງ 03 ຄົນ; ໄດ້ເຂົ້າຮ່ວມກອງປະຊຸມໂຕະມົນກ່ຽວກັບການຊ່ວຍເຫຼືອທາງດ້ານກົດໝາຍ ແລະ ຈິດອາສາທາງດ້ານກົດໝາຍ ຄັ້ງທີ 16 ວັນທີ 23 ສິງຫາ 2023 ທີ່ນະຄອນຫຼວງວຽງຈັນ ມີຜູ້ເຂົ້າຮ່ວມ 46 ຄົນ, ຍິງ 15 ຄົນ, ມີຜູ້ມາຂໍການຊ່ວຍເຫຼືອທາງດ້ານກົດໝາຍ ທັງໝົດ 1,924 ຄົນ; ລົງໂຄສະນາເຜີຍແຜ່ກົດໝາຍ ແລະ ນິຕິກຳ ທີ່ຕິດພັນກັບ 02 ວາລະແຫ່ງຊາດ ຈຳນວນ 03 ຄັ້ງ ວັນທີ 27 ມັງກອນ 2023 ທີ່ວິທະຍາຄານກົມມະດຳ; ວັນທີ 26-30 ມິຖຸນາ 2023 ໃຫ້ຂັ້ນແຂວງ ແລະ ຂັ້ນເມືອງ ທີ່ແຂວງ ບໍ່ແກ້ວ ມີຜູ້ເຂົ້າຮ່ວມທັງໝົດ 339 ຄົນ, ຍິງ 120 ຄົນ; ລົງຊຸກຍູ້ວຽກງານໂຄສະນາເຜີຍແຜ່ກົດໝາຍ ຢູ່ຂັ້ນສູນກາງ (ກະຊວງສຶກສາທິການ ແລະ ກິລາ) ວັນທີ 04 ພຶດສະພາ 2023 ແລະ ຝຶກອົບຮົມວຽກງານໂຄສະນາເຜີຍແຜ່ກົດໝາຍໃຫ້ພະນັກ ຂະແໜງຍຸຕິທຳ, ພະແນກການ ແລະ ບັນດາຫ້ອງການຍຸຕິທຳເມືອງ ຂອງແຂວງ ຄຳມ່ວນ ວັນທີ 02-06 ຕຸລາ 2023 ມີຜູ້ເຂົ້າຮ່ວມ 23 ຄົນ, ຍິງ 08 ຄົນ.

1.2.6 **ຂະແໜງການສຶກສາທິການ ແລະ ກິລາ** ໄດ້ສຳເລັດການຈັດກອງປະຊຸມ ຝຶກອົບຮົມການນຳໃຊ້ປຶ້ມອ່ານເສີມ ແລະ ຄູ່ມືແນະນຳການສອນການຕ້ານການຄ້າມະນຸດ ຊັ້ນມັດທະຍົມສຶກສາຕອນຕົ້ນ ແລະ ຕອນປາຍ ໃຫ້ແກ່ຄູສອນວິຊາສຶກສາພົນລະເມືອງທົ່ວແຂວງ ຈຳນວນ 02 ຄັ້ງ: ວັນທີ 16-19 ມັງກອນ 2023 ທີ່ແຂວງບໍ່ແກ້ວ ແລະ ວັນທີ 20-23 ມີນາ 2023 ທີ່ແຂວງເຊກອງ ມີຜູ້ເຂົ້າຮ່ວມທັງໝົດ 252 ຄົນ, ຍິງ 50 ຄົນ;

1.2.7 **ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ** ໄດ້ສຳເລັດການຈັດຝຶກອົບຮົມການສ້າງສື່ໂຄສະນາ, ຜະລິດຕະພັນສື່ມວນຊົນ ໃຫ້ຂະແໜງການຖະແຫຼງຂ່າວ ແລະ ວັດທະນະທຳ ວັນທີ 04-06 ມັງກອນ 2023 ທີ່ແຂວງເຊກອງ ມີຜູ້ເຂົ້າຮ່ວມ 54 ຄົນ, ຍິງ 29 ຄົນ;

1.2.8 **ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ** ໄດ້ລົງໂຄສະນາເຜີຍແຜ່ວຽກງານຕ້ານການຄ້າມະນຸດ ຢູ່ 03 ສະຖາບັນການສຶກສາ ມະຫາວິທະຍາໄລແຫ່ງຊາດ, ວິທະຍາໄລສ້າງຄູດົງຄຳຊ້າງ, ວິທະຍາໄລຊັບພະວິຊາ ໃນວັນທີ 06-09 ມີນາ 2023 ແລະ ໂຄສະນາໃຫ້ກັບຊາວໜຸ່ມ-ເຍົາວະຊົນ ເນື່ອງໃນໂອກາດລະນຶກວັນສາກົນເພື່ອຕ້ານການຄ້າມະນຸດ ແລະ ສະເຫຼີມສະຫຼອງວັນໄວໜຸ່ມສາກົນ ໃນວັນທີ 10 ສິງຫາ 2023 ທີ່ສູນການຄ້າລາວໄອເຕັກ ມີຜູ້ເຂົ້າຮ່ວມ 1,079 ຄົນ; ໄດ້ຈັດຝຶກອົບຮົມສ້າງເຄືອຄ່າຍໃຫ້ພະນັກງານນຳພາ, ຊາວໜຸ່ມ-ເຍົາວະຊົນ ໃຫ້ເປັນນັກໂຄສະນາວຽກງານຕ້ານການຄ້າມະນຸດ 04 ແຂວງ ໃນວັນທີ 27-31 ມີນາ 2023 ທີ່ແຂວງໄຊຍະບູລີ, ວັນທີ 08-13 ພຶດສະພາ 2023 ທີ່ແຂວງສະຫວັນນະເຂດ, ວັນທີ 12-19 ມິຖຸນາ 2023 ທີ່ແຂວງບໍ່ແກ້ວ ແລະ ວັນທີ 21-22 ມິຖຸນາ 2023 ທີ່ແຂວງຫຼວງນ້ຳທາ ມີຜູ້ເຂົ້າຮ່ວມ 319 ຄົນ, ຍິງ 195 ຄົນ; ໄດ້ລົງໂຄສະນາເຜີຍແຜ່ຜົນຮ້າຍຂອງການຕ້ານການຄ້າມະນຸດ ໃຫ້ກັບຄູອາຈານ ແລະ ເຍົາວະຊົນ ເພື່ອກະກຽມ

ວັນລະນຶກວັນສາກົນຕ້ານການຄ້າມະນຸດ ປະຈຳປີ 2023 ວັນທີ 14 ມິຖຸນາ 2023 ທີ່ໂຮງຮຽນປະຖົມບ້ານໂຄກແຮ ເມືອງສັງທອງ ມີຜູ້ເຂົ້າຮ່ວມ 70 ຄົນ, ຍິງ 50 ຄົນ;

1.2.9 **ສູນກາງສະຫະພັນກຳມະບານລາວ** ໄດ້ຈັດກອງປະຊຸມກ່ຽວກັບບົດສອນໃຫ້ຄູຝຶກທີ່ຈະລົງໂຄສະນາວຽກງານການເຄື່ອນຍ້າຍແຮງງານແບບປອດໄພ ບໍ່ຕົກເປັນເຫຍື່ອຂອງການຄ້າມະນຸດ ວັນທີ 24 ສິງຫາ 2023 ທີ່ນະຄອນຫຼວງວຽງຈັນ ມີຜູ້ເຂົ້າຮ່ວມ 22 ຄົນ, ຍິງ 09 ຄົນ; ໄດ້ຈັດຝຶກອົບຮົມຄູຝຶກວຽກງານການເຄື່ອນຍ້າຍແຮງງານແບບປອດໄພ ບໍ່ຕົກເປັນເຫຍື່ອຂອງການຄ້າມະນຸດ ວັນທີ 31 ສິງຫາ 2023 ທີ່ນະຄອນຫຼວງວຽງຈັນ ມີຜູ້ເຂົ້າຮ່ວມ 22 ຄົນ, ຍິງ 09 ຄົນ; ໄດ້ພິມໂປດເຕີ ສະຕິກເກີ້ ຂະໜາດ A4 ການເຄື່ອນຍ້າຍແຮງງານທີ່ປອດໄພ ຈຳນວນ 400 ແຜ່ນ, ພິມຖົງຜ້າຍ ຈຳນວນ 500 ຖົງ, ພິມປ້າຍລົງໂຮງງານ, ພິມປ້າຍລົງບ້ານ ແລະ ປ້າຍຈັດຝຶກອົບຮົມ, ລຳໂພງ 01 ອັນ, ຄອມພິວເຕີໂນດບຸກ 01 ອັນ, LCD ໂປເຈັກເຕີ 01 ອັນ ເພື່ອຮັບໃຊ້ເຂົ້າໃນການລົງໂຄສະນາການເຄື່ອນຍ້າຍແຮງງານທີ່ປອດໄພ ບໍ່ຕົກເປັນເຫຍື່ອຂອງການຄ້າມະນຸດ; ໄດ້ລົງໂຄສະນາການເຄື່ອນຍ້າຍແຮງງານແບບປອດໄພ ບໍ່ຕົກເປັນເຫຍື່ອຂອງການຄ້າມະນຸດ ຈຳນວນ 16 ຄັ້ງ ໃນວັນທີ 25 ກັນຍາ 2023 ຫາ 21 ຕຸລາ 2023 ໄດ້ 16 ໂຮງງານ ໃນນະຄອນຫຼວງວຽງຈັນ ມີຜູ້ເຂົ້າຮ່ວມທັງໝົດ 3,501 ຄົນ, ຍິງ 3,038 ຄົນ; ໄດ້ຈັດຝຶກອົບຮົມທັກສະການໂຄສະນາໃຫ້ຄວາມຮູ້ປະຊາຊົນເພື່ອສົ່ງເສີມການເດີນທາງທີ່ປອດໄພໂຄງການປົກປ້ອງແມ່ຍິງ ແລະ ເດັກນ້ອຍຈາກການຕ້ານການຄ້າມະນຸດ ໃນວັນທີ 27-29 ມີນາ 2023 ທີ່ສະຖາບັນພັດທະນາກຳມະບານລາວ ມີຜູ້ເຂົ້າຮ່ວມທັງໝົດ 37 ຄົນ, ຍິງ 15 ຄົນ; ໄດ້ຈັດຝຶກເອົບຮົມວຽກງານປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງສະມາຊິກກຳມະບານຜູ້ອອກແຮງງານໃຫ້ແກ່ຄະນະກຳມະບານທີ່ປະຈຳຢູ່ຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດຂັ້ນສູນກາງ ແລະ ນະຄອນຫຼວງວຽງຈັນ ໃນວັນທີ 12-13 ມິຖຸນາ 2023 ມີຜູ້ເຂົ້າຮ່ວມທັງໝົດ 51 ຄົນ, ຍິງ 16 ຄົນ.

1.2.10 **ຂະແໜງການປ້ອງກັນປະເທດ** ໄດ້ເອົາລາຍການປະຊາຮ່ວມໃຈຕ້ານໄພການຄ້າມະນຸດ ເພື່ອອອກທາງຄື້ນວິທະຍຸກະຈາຍສຽງ ກອງທັບປະຊາຊົນລາວ FM 99,7 MHz ວັນຈັນ ຫາ ວັນອາທິດ ເວລາ 20:00-2:30 ໂມງ (ພິເສດວັນເສົາ ຫາ ວັນອາທິດຈະອອກອາກາດ ຕອນເຊົ້າເວລາ 10:00-10:30 ໂມງ ແລະ ຕອນແລງ ເວລາ 21:30-22:00 ໂມງ) ຈັດລາຍການໄດ້ 231 ລາຍການ, ອອກອາກາດ (224 ຊົ່ວໂມງ); ເປີດສະປອດໂຄສະນາຕ້ານການຄ້າມະນຸດ ຈຳນວນ 1,066 ຄັ້ງ ແລະ ເປີດເພງກ່ຽວກັບການຕ້ານການຄ້າມະນຸດ ຈຳນວນ 975 ຄັ້ງ; ອອກຂ່າວໄດ້ 278 ຂ່າວ; ໄດ້ສ້າງຄວາມເຂັ້ມແຂງວຽກງານຕ້ານການຄ້າມະນຸດ ໃຫ້ແກ່ນາຍ ແລະ ພົນທະຫານ ກອງບັນຊາການທະຫານແຂວງຄຳມ່ວນ ໃນວັນທີ 05-06 ກຸມພາ 2023 ແລະ ວັນທີ 25-26 ພຶດສະພາ 2023 ແຂວງອຸດົມໄຊ, ບໍ່ແກ້ວ ແລະ ແຂວງຫຼວງນ້ຳທາ ມີຜູ້ເຂົ້າຮ່ວມ 357 ຄົນ, ຍິງ 157 ຄົນ;

1.2.11 **ຄະນະກຳມະການຕ້ານການຄ້າມະນຸດ ແຂວງ ແລະ ນະຄອນຫຼວງວຽງຈັນ ໄດ້ຈັດກິດຈະກຳ ເພື່ອສະກັດກັ້ນ ແລະ ຕ້ານການຄ້າມະນຸດຄື:**

1.2.12 ໄດ້ຈັດກິດຈະກຳລະນຶກເຖິງວັນສາກົນເພື່ອຕ້ານການຄ້າມະນຸດ ປະຈຳປີ 2023 ມີຜູ້ເຂົ້າຮ່ວມທັງໝົດ 2,141 ຄົນ, ຍິງ 707 ຄົນ;

1.2.13 ໄດ້ລົງໂຄສະນາຢູ່ບັນດາບ້ານ, ໂຮງຮຽນມັດທະຍົມ, ມະຫາວິທະຍາໄລ, ຫົວໜ່ວຍແຮງງານ, ສະຖາບັນຕ່າງໆ ແລະ ພື້ນທີ່ລຽບຕາມເຂດຊາຍແດນ ໄດ້ທັງໝົດ 1,484 ຄັ້ງ, ມີຜູ້ເຂົ້າຮ່ວມ 200,566 ຄົນ, ຍິງ 106,517 ຄົນ. ພ້ອມທັງໄດ້ແຈກປຶ້ມປະມວນກົດໝາຍອາຍາ 413 ຫົວ, ແຈກປຶ້ມໂຄສະນາໃຫ້ແກ່ຄະນະປົກປ້ອງເດັກ 35 ຫົວ, ແຈກປຶ້ມອ່ານເສີມ ແລະ ຄູ່ມືແນະນຳການສອນວຽກງານຕ້ານການຄ້າມະນຸດ ຈຳນວນ 6,560 ຫົວ;

1.2.14 ໄດ້ຕິດປ້າຍໂຄສະນາຜົນຮ້າຍຂອງການຄ້າມະນຸດ ຢູ່ຕາມຈຸດໂຮງຮຽນ, ຊຸມຊົນ ແລະ ຕາມເທດສະບານເມືອງ ຈຳນວນ 08 ຈຸດ;

1.2.15 ໄດ້ໂຄສະນາຜ່ານໂທລະພາບ, ວິທະຍຸກະຈ່າຍສຽງ, ໂທລະໂຄງຂອງແຂວງ, ເມືອງ ແລະ ບ້ານ ໄດ້ 1,130 ຄັ້ງ;

1.2.16 ໄດ້ຈັດຝຶກອົບຮົມສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ບໍລິຫານການສຶກສາ, ຄະນະແກ້ໄຂຂໍ້ຂັດແຍງຂັ້ນບ້ານ, ວຽກງານສິດທິເດັກ ແລະ ບົດບາດ-ຍິງຊາຍ, ການເຄື່ອນຍ້າຍແຮງງານແບບປອດໄພ ແລະ ການຕ້ານການຄ້າມະນຸດ ໄດ້ 32 ຄັ້ງ ມີຜູ້ເຂົ້າຮ່ວມ 2,350 ຄົນ, ຍິງ 1,024 ຄົນ.

1.3. <u>ດ້ານວຽກງານການດຳເນີນຄະດີ ແລະ ບັງຄັບໃຊ້ກົດໝາຍ</u>

ບັນດາຂະແໜງການດຳເນີນຄະດີ ແລະ ບັງຄັບໃຊ້ກົດໝາຍຕາມຂະບວນການຍຸຕິທຳ ໄດ້ສຸມໃສ່ດຳເນີນ ແລະ ແກ້ໄຂຄະດີຄ້າມະນຸດ ຢ່າງເຂັ້ມງວດ.

**1.3.1.** **ເຈົ້າໜ້າທີ່ຕຳຫຼວດ** ໃນ 01 ປີຜ່ານມາ ໄດ້ດຳເນີນຄະດີຂໍ້ຫາຄ້າມະນຸດ ທັງໝົດ 45 ເລື່ອງ, ມີຜູ້ຖືກຫາ 98 ຄົນ, ຍິງ 47 ຄົນ, ຄົນຕ່າງປະເທດ 38 ຄົນ, ຍິງ 05 ຄົນ, ຜູ້ຖືກເຄາະຮ້າຍ 136 ຄົນ, ຍິງ 121 ຄົນ, ອາຍຸຕ່ຳກວ່າ 18 ປີ 95 ຄົນ, ຍິງ 95 ຄົນ. ໃນນີ້ ຄະດີເຂົ້າໃໝ່ 35 ເລື່ອງ, ມີຜູ້ຖືກຫາ 77 ຄົນ, ຍິງ 39 ຄົນ, ຕ່າງປະເທດ 25 ຄົນ, ຍິງ 04 ຄົນ, ຜູ້ຖືກເຄາະຮ້າຍ 104 ຄົນ, ຍິງ 101 ຄົນ, ອາຍຸຕ່ຳກວ່າ 18 ປີ 75 ຄົນ, ຍິງ 75 ຄົນ, ດຳເນີນສຳເລັດ 39 ເລື່ອງ, ຜູ້ຖືກຫາ 88 ຄົນ, ຍິງ 43 ຄົນ, ຕ່າງປະເທດ 33 ຄົນ, ຍິງ 04 ຄົນ, ຜູ້ຖືກເຄາະຮ້າຍ 128 ຄົນ, ຍິງ 115 ຄົນ, ອາຍຸຕ່ຳກວ່າ 18 ປີ 91 ຄົນ, ຍິງ 91 ຄົນ, ໃນນີ້ ໄດ້ສົ່ງໄອຍະການ 33 ເລື່ອງ, ຜູ້ຖືກຫາ 80 ຄົນ, ຍິງ 39 ຄົນ, ຕ່າງປະເທດ 30 ຄົນ, ຍິງ 04 ຄົນ, ຜູ້ຖືກເຄາະຮ້າຍ 113 ຄົນ, ຍິງ 100 ຄົນ, ອາຍຸຕ່ຳກວ່າ 18 ປີ 80 ຄົນ, ຍິງ 80 ຄົນ, ໂຈະ 04 ເລື່ອງ, ຜູ້ຖືກຫາ 05 ຄົນ, ຍິງ 04 ຄົນ, ຄົນຕ່າງປະເທດ 00 ຄົນ, ໄດ້ຊັດມ້ຽນ 02 ເລື່ອງ, ຜູ້ຖືກຫາ 03 ຄົນ, ຍິງ 00 ຄົນ, ຜູ້ຖືກຫາຕ່າງປະເທດ 03 ຄົນ, ຍິງ 00 ຄົນ, ພວມດຳເນີນ 06 ເລື່ອງ;

**1.3.2.** **ອົງການໄອຍະການປະຊາຊົນ** ໃນປີ 2023 ໄດ້ດຳເນີນຄະດີສຳເລັດສັ່ງຟ້ອງຂຶ້ນສານ ຈຳນວນ 11 ເລື່ອງ, ຜູ້ຖືກຫາ 12 ຄົນ, ຍິງ 10 ຄົນ, ຜູ້ຖືກເຄາະຮ້າຍ 23 ຄົນ, ຍິງ 23 ຄົນ, ອາຍຸຕ່ຳກວ່າ 18 ປີ 23 ຄົນ, ຍິງ 23 ຄົນ, ກຳລັງຄົ້ນຄວ້າ 10 ເລື່ອງ, ໄດ້ສົ່ງຄືນໃຫ້ເຈົ້າໜ້າທີ່ 03 ເລື່ອງ;

**1.3.3.** **ສານປະຊາຊົນທົ່ວປະເທດ** ມີຄະດີຄ້າງມາແຕ່ປີ 2022 ຈຳນວນ 02 ເລື່ອງ, ຜູ້ຖືກຫາ 03 ຄົນ, ຍິງ 02 ຄົນ, ຜູ້ຖືກເຄາະຮ້າຍ 03 ຄົນ, ຍິງ 03 ຄົນ, ອາຍຸຕ່ຳກວ່າ 18 ປີ 03 ຄົນ, ຍິງ 03 ຄົນ, ໄດ້ຮັບສຳນວນຄະດີເຂົ້າໃໝ່ ໃນປີ 2023 ຈຳນວນ 11 ເລື່ອງ, ຜູ້ຖືກຫາ 12 ຄົນ, ຍິງ 10 ຄົນ, ຜູ້ຖືກເຄາະຮ້າຍ 23 ຄົນ, ຍິງ 23 ຄົນ, ອາຍຸຕ່ຳກວ່າ 18 ປີ 23 ຄົນ, ຍິງ 23 ຄົນ, ຄະດີທັງໝົດ 13 ເລື່ອງ, ໄດ້ສຳເລັດການຕັດສິນຄະດີຄ້າມະນຸດ ໄດ້ທັງໝົດ 11 ເລື່ອງ, ຜູ້ຖືກຫາ 11 ຄົນ, ຍິງ 10 ຄົນ, ຄົນຕ່າງປະເທດ 04 ຄົນ, ຍິງ 02 ຄົນ, ຜູ້ຖືກເຄາະຮ້າຍ 25 ຄົນ, ຍິງ 23 ຄົນ, ອາຍຸຕ່ຳກວ່າ 18 ປີ 23 ຄົນ, ຍິງ 14 ຄົນ, ໂທດສູງສຸດ ແມ່ນ 16 ປີ 06 ເດືອນ ແລະ ປັບໃໝ ສູງສຸດ 107.000.000 ກີບ, ປະຈຸບັນ ຍັງຄ້າງ 02 ເລື່ອງ;

1.4. <u>ດ້ານການປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍ</u>

**1.4.1.** **ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ** ສຳເລັດກອງປະຊຸມປຶກສາຫາລື ກ່ຽວກັບການດຳເນີນມາດຕະການຕໍ່ ບໍລິສັດ ທ່ອງທ່ຽວລາວ ຈຳກັດ, ບໍລິສັດ ອຳມະລາມະຫາອຸດ ອະສັງຫາລິມະຊັບ ຈຳກັດ ແລະ ບໍລິສັດ ເອັດສເຊີວິດ ຈຳກັດ ແລະ ນິຕິບຸກຄົນທີ່ເຄື່ອນໄຫວຕົວະຍົວະເອົາແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ໃນວັນທີ 21 ກຸມພາ 2023 ມີຜູ້ເຂົ້າຮ່ວມ 09 ຄົນ, ຍິງ 02 ຄົນ; ປະສານກັບກົມຕຳຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດ ກ່ຽວກັບຄວາມຄືບໜ້າການດຳເນີນມາດຕະການຕໍ່ກັບບຸກຄົນ ແລະ ນິຕິບຸກທີ່ເຄື່ອນໄຫວຕົວະຍົວະເອົາແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ.

**1.4.2.** **ສູນກາງສະຫະພັນແມ່ຍິງລາວ** ໄດ້ສະໜອງການຊ່ວຍເຫຼືອອັນຈຳເປັນ 05 ດ້ານ ແກ່ຜູ້ຖືກເຄາະຮ້າຍເຊັ່ນ: ສະຖານທີ່ພັກເຊົາທີ່ປອດໄພຊົ່ວຄາວ (ລວມມີອາຫານ, ເຄື່ອງນຸ່ງຫົ່ມ, ເຄື່ອງໃຊ້ສອຍອັນຈຳເປັນ, ການບຳບັດຟື້ນຟູທາງດ້ານແນວຄິດຈິດໃຈ), ການຊ່ວຍເຫຼືອດ້ານກົດໝາຍ, ດ້ານການແພດ, ການສຶກສາ ແລະ ຝຶກອົບຮົມວິຊາຊີບ, ການສົ່ງກັບຄືນສູ່ຄອບຄົວ ແລະ ສັງຄົມ, ນັບແຕ່ເດືອນ ມັງກອນ ຫາ ເດືອນ ທັນວາ 2023 ມີຜູ້ຖືກເຄາະຮ້າຍ ແລະ ກຸ່ມສ່ຽງຈາກການຄ້າມະນຸດ ເຂົ້າມາບຳບັດຟື້ນຟູໃນສູນ ຈຳນວນ 135 ຄົນ, ຍິງ 122 ຄົນ, ມີຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈຳນວນ 132 ຄົນ, ຍິງ 119 ຄົນ, ອາຍຸຕ່ຳກວ່າ 18 ປີ 112 ຄົນ, ຍິງ 108 ຄົນ ແລະ ກຸ່ມສ່ຽງຈາກການຄ້າມະນຸດ ຈຳນວນ 03 ຄົນ, ຍິງ 03 ຄົນ, ໃນນັ້ນ ໄດ້

ຮັບຜູ້ຖືກເຄາະຮ້າຍທີ່ເປັນຄົນລາວມາຈາກຕ່າງປະເທດ ຈຳນວນ 16 ຄົນ, ຍິງ 15 ຄົນ (ຮັບຈາກ ສປຈີນ 04 ຄົນ ເປັນຍິງທັງໝົດ ແລະ ຈາກຣາຊະອານາຈັກໄທ 12 ຄົນ, ຍິງ 11 ຄົນ); ໄດ້ຊ່ວຍຜູ້ຖືກເຄາະຮ້າຍທີ່ເປັນຄົນຕ່າງປະເທດ ຢູ່ ສປປ ລາວ ຈຳນວນ 08 ຄົນ, ຍິງ 05 ຄົນ, (ສັນຊາດມາເລເຊຍ 01 ຄົນ ເປັນຍິງ, ຫວຽດນາມ 02 ຄົນເປັນຍິງ, ອູການດາ 01 ຄົນ, ອະຟິກາ 01 ຄົນ, ສີລັງກາ 01 ຄົນ, ລັດເຊຍ 02 ເປັນຍິງ), ໄດ້ນຳສົ່ງຜູ້ຖືກເຄາະຮ້າຍກັບຄືນສູ່ຄອບຄົວ ແລະ ສັງຄົມ 104 ຄົນ, ຍິງ 95 ຄົນ,. ນຳສົ່ງຜູ້ທີ່ມີຄວາມສ່ຽງ ຈຳນວນ 03 ຄົນ, ຍິງ 03 ຄົນ, (ໃນນີ້ເປັນຄົນຕ່າງປະເທດ 07 ຄົນ, ຍິງ 04 ຄົນ), ປັດຈຸບັນມີຜູ້ຖືກເຄາະຮ້າຍພັກເຊົາຢູ່ສູນ ຈຳນວນ 28 ຄົນ, ຍິງ 27 ຄົນ, ໃນນັ້ນ ເປັນຜູ້ຖືກເຄາະຮ້າຍສັນຊາດຕ່າງປະເທດ ຈຳນວນ 01 ຄົນ, ໄດ້ນຳພາຜູ້ຖືກເຄາະຮ້າຍໄປກວດສຸຂະພາບຢູ່ໂຮງໝໍ ຈຳນວນ 21 ຄັ້ງ ມີຜູ້ຖືກເຄາະຮ້າຍ 111 ຄົນ, ຍິງ 101 ຄົນ, ໄດ້ຕິດຕາມຜູ້ຖືກເຄາະຮ້າຍທີ່ສົ່ງກັບຄືນສູ່ຄອບຄົວ ແລະ ສັງຄົມ ໄດ້ຈຳນວນ 103 ຄົນ, ຍິງ 84 ຄົນ; ໄດ້ສະໜອງການການຝຶກອົບຮົມວິຊາຊີບໄລຍະສັ້ນກ່ຽວກັບການເຮັດເຂົ້າໜົມ, ເຮັດນ້ຳເຕົ້າຮູ້, ເສັ້ນເຂົ້າປຽກ ແລະ ອື່ນໆ ຢູ່ໃນສູນ ຈຳນວນ 06 ຄັ້ງ, ມີຜູ້ເຂົ້າຮ່ວມ 97 ຄົນ, ຍິງ 88 ຄົນ. ສຳລັບການສຶກສາແມ່ນ ໄດ້ສະໜອງອຸປະກອນການສຶກສາ ແລະ ເຄື່ອງນຸ່ງນັກຮຽນຈຳນວນໜຶ່ງ ໃຫ້ແກ່ຜູ້ຖືກເຄາະຮ້າຍ ຈຳນວນ 09 ຄົນ; ປະສານງານກັບກະຊວງສາທາລະນະສຸກ ກ່ຽວກັບການກວດ, ປິ່ນປົວ ແລະ ຢັ້ງຢືນສຸຂະພາບ ຂອງຜູ້ຖືກເຄາະຮ້າຍ ຈຳນວນ 363 ຄັ້ງ. ນອກນັ້ນ, ຍັງເຮັດໜ້າທີ່ໃຫ້ຄຳປຶກສາທາງດ້ານກົດໝາຍ, ດ້ານຈິດໃຈ ແລະ ດ້ານສຸຂະພາບໂດຍບໍ່ເສຍຄ່າແກ່ແມ່ຍິງ-ເດັກນ້ອຍ ທີ່ມີບັນຫາ ແລະ ຜູ້ຖືກເຄາະຮ້າຍທີ່ພັກເຊົາຢູ່ສູນ. ຊຶ່ງການບໍລິການໃຫ້ຄຳປຶກສາແມ່ນມີ 02 ຮູບແບບຄື: ໃຫ້ຄຳປຶກສາຊຶ່ງໜ້າ (ຢູ່ສູນ) ແລະ ໃຫ້ຄຳປຶກສາທາງໂທລະສັບ (ສາຍດ່ວນ 1362). ນັບແຕ່ເດືອນ ມັງກອນ ຫາ ເດືອນ ທັນວາ 2023 ສາມາດບໍລິການໃຫ້ຄຳປຶກສາດ້ານກົດໝາຍແກ່ແມ່ຍິງ-ເດັກນ້ອຍ ສະເພາະບັນຫາການຄ້າມະນຸດ 17 ຄົນ, ຍິງ 12 ຄົນ, ຈຳນວນ 17 ເລື່ອງ, ລວມການບໍລິການໃຫ້ຄຳປຶກສາທັງໝົດ ຈຳນວນ 36 ຄັ້ງ (ເປັນການໃຫ້ຄຳປຶກສາທາງສາຍດ່ວນທັງໝົດ); ສຳລັບສູນຮັບຕ້ອນຊົ່ວຄາວພາກເໜືອ ແຂວງຫຼວງນ້ຳທາ ໃນ 01 ປີ ຜ່ານມາມີຜູ້ຖືກເຄາະຮ້າຍ ແລະ ຜູ້ທີ່ມີຄວາມສ່ຽງຈາກການຄ້າມະນຸດ ເຂົ້າມາບຳບັດຟື້ນຟູຢູ່ສູນ ຈຳນວນ 23 ຄົນ, ຍິງ 16 ຄົນ (ໃນນັ້ນ, ມີຜູ້ຖືກເຄາະຮ້າຍທີ່ສົ່ງໃຫ້ສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ ຈຳນວນ 04 ຄົນ, ເປັນຍິງທັງໝົດ); ໄດ້ຮ່ວມກັບເຈົ້າໜ້າທີ່ຕຳຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດ ສຳພາດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ຜູ້ທີ່ມີຄວາມສ່ຽງ ຈຳນວນ 96 ຄັ້ງ, ລວມ 96 ຄົນ, ຍິງ 95 ຄົນ, ອາຍຸຕ່ຳກວ່າ 18 ປີ 92 ຄົນ, ພ້ອມທັງລົງລາຍເຊັນໃນຖານະເປັນຜູ້ປົກປ້ອງຜູ້ຖືກເຄາະຮ້າຍ ຈຳນວນ 96 ຄົນ, ຍິງ 95 ຄົນ. ປັດຈຸບັນກຳລັງດຳເນີນຢູ່ຂັ້ນເຈົ້າໜ້າທີ່ຕຳຫຼວດ, ໄດ້ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຕິດຕາມ, ຊຸກຍູ້ການດຳເນີນຄະດີຄ້າມະນຸດ ກໍ່ຄືການປົກປ້ອງຊ່ວຍເຫຼືອຜູ້ຖືກເຄາະຮ້າຍສະເພາະບັນຫາການຄ້າມະນຸດ ຈຳນວນ 59 ຄັ້ງ; ນອກນັ້ນ ຍັງໄດ້ສຳເລັດການຈັດກອງປະຊຸມຜ່ານຮ່າງຄູ່ມືຄູຝຶກອົບຮົມຄູ່ມືການປົກປ້ອງ, ຊ່ວຍເຫຼືອ ແລະ ສົ່ງຕໍ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍພື້ນຖານ ຮ່ວມກັບພາກສ່ວນກ່ຽວຂ້ອງ ຈຳນວນ 02 ຄັ້ງຄື: ໃນວັນທີ 31 ມີນາ 2023 ທີ່ ສປມດ ແລະ ໃນວັນທີ 09 ພຶດສະພາ 2023 ທີ່ ໂຮງແຮມທາດຫຼວງດໍ ມີຜູ້ເຂົ້າຮ່ວມ 40 ຄົນ, ຍິງ 25 ຄົນ; ໄດ້ໃຫ້ຄວາມຮູ້ພື້ນຖານທາງດ້ານກົດໝາຍແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ພາຍໃນສູນ 05 ຄັ້ງ: ວັນທີ 24 ກຸມພາ 2023, ວັນທີ 27 ກຸມພາ 2023, ວັນທີ 22-23 ມີນາ 2023 ແລະ ວັນທີ 07 ເມສາ 2033 ມີຜູ້ຖືກເຄາະຮ້າຍ 47 ເທື່ອຄົນ, ຍິງ 46 ຄົນ; ໄດ້ຈັດກອງປະຊຸມຮ່າງຄູ່ມືມາດຕະຖານຕ່ຳສຸດໃນການປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ສຳລັບສູນ ພັກເຊົາຕ່າງໆ ໃນວັນທີ 11 ພຶດສະພາ 2023 ມີຜູ້ເຂົ້າຮ່ວມ 12 ຄົນ, ຍິງ 10 ຄົນ ທີ່ ໂຮງແຮມແກຣນວຽງຈັນ; ໄດ້ຈັດກອງປະຊຸມປຶກສາຫາລືໂຄງຮ່າງການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກການຄ້າມະນຸດກັບຄືນສູ່ສັງຄົມພາຍໃນສູນ ວັນທີ 22 ມິຖຸນາ 2023 ຜ່ານທາງອອນລາຍ, ມີຜູ້ເຂົ້າຮ່ວມທັງໝົດ 06 ຄົນ (ຍິງທັງໝົດ); ໄດ້ຕ້ອນຮັບແຂກຈາກພາກສ່ວນທີ່ກ່ຽວຂ້ອງມາຢ້ຽມຢາມ ແລະ ທັດສະນະສຶກສາຢູ່ສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ ຈຳນວນ 09 ຄັ້ງຄື: ຕ້ອນຮັບ ແລະ ເຮັດວຽກຮ່ວມກັບຊ່ຽວຊານ ຈາກສະຖານທູດອາເມລິກາ ປະຈຳ ສປປ ລາວ ໃນວັນທີ 15 ກຸມພາ 2023 ແລະ ໃນວັນທີ 16 ມີນາ 2023, ຈາກອົງການ UNICEF ພາກພື້ນ ໃນວັນທີ 10 ພຶດສະພາ 2023 ແລະ ວັນທີ 19 ມິຖຸນາ 2023; ຄະນະ

ຝຶກອົບຮົມຈິດຕະສັງຄົມ ວັນທີ 20 ມິຖຸນາ 2023, ຄະນະສະຫະພັນແມ່ຍິງກະຊວງການຕ່າງປະເທດ ວັນທີ 21 ກໍລະກົດ 2023, ຄະນະນັກສຶກສາປະລິນຍາໂທ ຈາກກະຊວງສາທາລະນະສຸກ ວັນທີ 14 ສິງຫາ 2023, ແຂກອົງການຢູນີເຊັບມາຈາກພາກພື້ນ ໃນວັນທີ 30 ສິງຫາ 2023 ມີຜູ້ເຂົ້າຮ່ວມ 145 ຄົນ, ຍິງ 82 ຄົນ; ໄດ້ເຂົ້າຮ່ວມເປັນຜູ້ປົກປ້ອງໃນການເກັບກຳຕົວຢ່າງເພື່ອກວດ DNA ຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ກໍລະນີອຸ້ມບຸນ (ທ້າວ ສິນໄຊ ບຸນຊູຊ່ວຍ) ໃນວັນທີ 27 ເມສາ 2023 ແລະ ເດັກທີ່ເກີດຈາກການອຸ້ມບຸນ ຈຳນວນ **06** ຄົນ ໃນວັນທີ **22** ເມສາ **2023** ທີ່ ກົມນິຕິວິທະຍາ; ໄດ້ຈັດກອງປະຊຸມແລກປ່ຽນບົດຮຽນ ຫຼັງການຝຶກອົບຮົມການກຳນົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຮ່ວມກັບເຈົ້າໜ້າທີ່ຂັ້ນສູນກາງ, ແຂວງ ແລະ ເມືອງເປົ້າໝາຍ ໃນວັນທີ 21 ພຶດສະພາ 2023 ທີ່ ແຂວງຈຳປາສັກ ມີຜູ້ເຂົ້າຮ່ວມ 60 ຄົນ, ຍິງ 32 ຄົນ; ໄດ້ຈັດກອງປະຊຸມທົບທວນບັນດານິຕິກຳ ພ້ອມທັງເຜີຍແຜ່ຄູ່ມືການກຳນົດຕົວ, ການປົກປ້ອງ ຊ່ວຍ ເຫຼືອ ແລະ ການສົ່ງຕໍ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃຫ້ແກ່ສະຫະພັນແມ່ຍິງ ແລະ ປກສ ຂອງ ແຂວງ ບໍ່ແກ້ວ, ຫຼວງນ້ຳທາ, ສະຫວັນນະເຂດ, ອັດຕະປື ໃນວັນທີ 10-12 ພຶດສະພາ 2023 ທີ່ ແຂວງວຽງຈັນ ມີຜູ້ເຂົ້າຮ່ວມ 17 ຄົນ, ຍິງ 12 ຄົນ ແລະ ຝຶກອົບຮົມການກຳນົດຕົວ, ການປົກປ້ອງ, ຊ່ວຍເຫຼືອ ແລະ ການສົ່ງຕໍ່ຜູ້ຖືກເຄາະຮ້າຍ ໃຫ້ພາກສ່ວນທີ່ກ່ຽວຂ້ອງຂັ້ນແຂວງ ແລະ ຂັ້ນເມືອງ ແຂວງ ອຸດົມໄຊ ວັນທີ 05-09 ມິຖຸນາ 2023 ແລະ ວັນທີ 13-15 ມິຖຸນາ 2023 ທີ່ແຂວງ ຫົວພັນ ມີຜູ້ເຂົ້າຮ່ວມ 122 ຄົນ, ຍິງ 59 ຄົນ; ໄດ້ຈັດກອງປະຊຸມກ່ຽວກັບການຄຸ້ມຄອງ, ການປົກປ້ອງ, ຊ່ວຍເຫຼືອ ແລະ ການສົ່ງຕໍ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ວັນທີ 25-26 ກໍລະກົດ 2023 ທີ່ໂຮງແຮມ ລາວພຣາຊາ ມີຜູ້ເຂົ້າຮ່ວມ 50 ຄົນ, ຍິງ 30 ຄົນ; ຈັດກອງປະຊຸມຝຶກອົບຮົມ ການຢຸດຕິການແຕ່ງດອງກ່ອນໄວອັນຄວນຂອງເດັກ, ຈິດຕະສັງຄົມ, ການກຳນົດຕົວ, ການປົກປ້ອງ, ຊ່ວຍເຫຼືອ ແລະ ສົ່ງຕໍ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈຳນວນ 03 ຄັ້ງ ໃຫ້ແກ່ສະຫະພັນແມ່ຍິງຂັ້ນເມືອງ ແລະ ຂັ້ນແຂວງ 03 ແຂວງ ໃນວັນທີ 14-18 ສິງຫາ 2023 ແຂວງບໍ່ແກ້ວ, ໃນວັນທີ 21-25 ສິງຫາ 2023 ທີ່ແຂວງຊຽງຂວາງ, ໃນວັນທີ 04-08 ກັນຍາ 2023 ທີ່ແຂວງຫຼວງພະບາງ, ມີຜູ້ເຂົ້າຮ່ວມທັງໝົດ 153 ຄົນ, ຍິງ 130 ຄົນ; ຮັບຕ້ອນ ແລະ ເຮັດວຽກກັບແຂກຈາກກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ ທີ່ມາສຳພາດຫົວໜ້າສູນ ແລະ ຖ່າຍທຳສາລະຄະດີກ່ຽວກັບວຽກງານຂອງສູນ ໃນວັນທີ 02 ສິງຫາ 2023; ໄດ້ຈັດຝຶກອົບຮົມຄູຝຶກການນຳໃຊ້ຄູ່ມືການປົກປ້ອງ, ຊ່ວຍເຫຼືອ ແລະ ການສົ່ງຕໍ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ 02 ຄັ້ງ: ວັນທີ 03-05 ກໍລະກົດ 2023 ທີ່ນະຄອນຫຼວງວຽງຈັນ ແລະ ວັນທີ 28 ສິງຫາ ຫາ ວັນທີ 02 ກັນຍາ 2023 ແຂວງຫຼວງນ້ຳທາ ມີຜູ້ເຂົ້າຮ່ວມ 76 ຄົນ, 60 ຄົນ; ໄດ້ຈັດຝຶກອົບຮົມການກຳນົດຕົວ, ການປົກປ້ອງຊ່ວຍເຫຼືອ ແລະ ສົ່ງຕໍ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈຳນວນ 03 ຄັ້ງ: ວັນທີ 09-10 ຕຸລາ 2023 ແລະ ວັນທີ 12-13 ຕຸລາ 2023 ທີ່ແຂວງຈຳປາສັກ ແລະ ວັນທີ 15-16 ຕຸລາ 2023 ທີ່ແຂວງສະຫວັນນະເຂດ ມີຜູ້ເຂົ້າຮ່ວມ 127 ຄົນ, ຍິງ 53 ຄົນ;

**1.4.3.** **ຂະແໜງການຕ່າງປະເທດ** ໃນວັນທີ 23 ເມສາ 2023 ໄດ້ໂທລະສານທາງລັດຖະການຫາສະຖານກົງສູນໃຫຍ່ລາວ ທີ່ແຂວງຂອນແກ່ນ ປະເທດໄທ ເພື່ອຊ່ວຍເຫຼືອ ທ້າວໄຊຍະວັດ ພຸດຜ່ອງ ອາຍຸ 07 ປີ ອອກຈາກສູນເດັກອານາຖາ ເພື່ອກັບຄືນປະເທດ; ວັນທີ 16 ພຶດສະພາ 2023 ໄດ້ເຮັດໂທລະສານທາງລັດຖະການແຈ້ງຫາສະຖານທູດລາວ ປະຈຳ ມຽນມາ ກ່ຽວກັບການຊ່ວຍເຫລືອພົນລະເມືອງລາວ ຊື່ ນາງ ແອນລີ ອຸ່ນມະນີ ອາຍຸ 24 ປີ ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍການຖືກຕົວະຍົວະໄປເຮັດວຽກຕອບແຊັດຢູ່ປະເທດມຽນມາ; ວັນທີ 05 ມິຖຸນາ 2023 ໄດ້ເຮັດໂທລະສານທາງການເຖິງສະຖານທູດ ລາວ ທີ່ ນະຄອນຊາງຊາ, ສປ ຈີນ ກ່ຽວກັບການຊ່ວຍເຫລືອ ພົນລະເມືອງລາວ ຊື່ ນ. ໃບ, ອາຍຸ 20 ປີ, ຢູ່ບ້ານໂພນໄຊ, ເມືອງພູຄູນ, ແຂວງຫຼວງພະບາງ ຜູ້ກ່ຽວໄດ້ຖືກຊັກຊວນໄປເຮັດວຽກຢູ່ຈີນ ແລະ ໄດ້ແຕ່ງດອງແບບບໍ່ຖືກກົດໝາຍ; ວັນທີ 08 ມິຖຸນາ 2023 ໄດ້ເຮັດໂທລະສານທາງການເຖິງສະຖານທູດ ລາວ ປະຈຳ ມຽນມາ ກ່ຽວກັບການຂໍໃຫ້ປະສານໄປຍັງພາກສ່ວນກ່ຽວຂ້ອງຂອງ ມຽນມາ ຊ່ວຍເຫລືອພົນລະເມືອງລາວ ຊື່ ທ້າວ ນ້ອຍ ວັດທະນາ, ອາຊີບກຳມະກອນ ຢູ່ບ້ານຫ້ວຍໝົ້, ເມືອງວັງວຽງ, ແຂວງວຽງຈັນ ທີ່ເຂົ້າໄປເຮັດວຽກຢູ່ເມືອງທ່າຂີ້ເຫລັກ ປະເທດມຽນມາ ແລະ ວັນທີ **23** ສິງຫາ **2023** ໄດ້ປະສານກັບສະຖານເອກອັກຄະລັດຖະທູດ ແຫ່ງ ສປປ ລາວ ທີ່ຢາງກຸ້ງ ເພື່ອຊ່ວຍເຫຼືອພົນລະເມືອງລາວທີ່ເປັນກຸ່ມສ່ຽງ ແລະ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ

ຈຳນວນ 08 ຄົນ, ຍິງ 01 ຄົນ ກັບຄືນ ສປປ ລາວ; ວັນທີ 18 ຕຸລາ 2023 ໄດ້ເຮັດໂທລະສານ ທາງລັດຖະການ ແຈ້ງຫາສະຖານທູດລາວ ປະຈຳ ສປ ຈີນ ເພື່ອຊ່ວຍເຫລືອນາງ ຫລ້າຫລິ້ງ ເນົາວະຈັນ, ອາຍຸ 32 ປີ ຊຶ່ງຖືກຕົວະຍົວະ ແລະ ບັງຄັບໃຫ້ແຕ່ງງານກັບຄົນຈີນ, ວັນທີ 13 ພະຈິກ 2023 ໄດ້ເຮັດໂທລະສານທາງລັດຖະການແຈ້ງຫາສະຖານທູດລາວ ປະຈຳ ມຽນມາ ເພື່ອຊ່ວຍເຫຼືອ ທ້າວ ວິພາກ ອາຍຸ 24 ປີ, ເຊື້ອຊາດ-ສັນຊາດ ລາວ, ອາຊີບ ກຳມະກອນ, ເປັນປະຊາຊົນຢູ່ບ້ານ ບໍ່ປຽດ, ເມືອງ ຫລວງນໍ້າທາ, ແຂວງ ຫລວງນໍ້າທາ ກັບ ນາງ ຊິວ ວ່າ, ອາຍຸ 27 ປີ, ເປັນປະຊາຊົນຢູ່ບ້ານ ປາງທຶກຫ້ວຍຈຸ, ເມືອງ ໃຫມ່, ແຂວງ ຜົ້ງສາລີ ຜູ້ກ່ຽວໄດ້ເຂົ້າໄປເຮັດວຽກຢູ່ເມືອງ ຕົ້ນເຜິ້ງ, ແຂວງ ບໍ່ແກ້ວ ແລະ ຖືກຕວົະຍວົະໃຫ້ຂ້າມໄປເຮັດວຽກຢູ່ຮ້ານອາຫານປະເທດ ມຽນມາ, ວັນທີ 29 ພະຈິກ 2023 ໄດ້ເຮັດໂທລະສານ ທາງລັດຖະການ ແຈ້ງຫາສະຖານທູດລາວ ປະຈຳ ສປ ຈີນ ນາງ ສຸວະນັນ ສຸດທະວິໄລ ອາຍຸ 17 ປີ, ເຊື້ອຊາດ-ສັນຊາດ ລາວ, ເປັນປະຊາຊົນຢູ່ບ້ານ ສີວິໄລ, ເມືອງ ໂພນໂຮງ, ແຂວງ ວຽງຈັນ, ຖືກຕົວະຍົວະໃຫ້ແຕ່ງງານກັບຄົນຈີນ, ແລະ ນາງ ອ່ອນ ຕະມອງ, ອາຍຸ 30 ປີ, ເກີດວັນທີ 02 ສິງຫາ 1993, ເຊື້ອຊາດ-ສັນຊາດ ລາວ, ເປັນປະຊາຊົນຢູ່ບ້ານ ຜາເຈົ້າ, ເມືອງ ກາສີ, ແຂວງ ວຽງຈັນ ຊຶ່ງຖືກນາງ ນົກ (ບໍ່ຮູ້ທີ່ຢູ່ບ້ານ, ເມືອງ ແລະ ແຂວງ) ຕົວະຍົວະໃຫ້ແຕ່ງງານກັບຄົນຈີນ, ພ້ອມທັງໄດ້ເຮັດໂທລະສານທາງລັດຖະການ ແຈ້ງຫາສະຖານທູດລາວປະຈຳ ມາເລເຊຍ ເພື່ອຊ່ວຍເຫລືອຜູ້ຖືກສົງໄສຕົກເປັນຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ຊຶ່ງເປັນພົນລະເມືອງລາວຈຳນວນ 09 ຄົນ ແລະ ຖືກນຳສົ່ງຕົວໄປສະຖານທີ່ປອດໄພໃນ Rumah Perlindungan Wanita Johor Kempas (ສູນພັກພິງຜູ້ເຄາະຮ້າຍ) ລັດ ໂຈໂຮ ບາຣູ, ວັນທີ 08 ທັນວາ 2023 ໄດ້ເຮັດໂທລະສານທາງລັດຖະການແຈ້ງຫາສະຖານທູດລາວ ປະຈຳ ສປ ຈີນ ເພື່ອຊ່ວຍເຫລືອຜູ້ຖືກສົງໄສຕົກເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຊື່ ນາງ ຄອນສະຫວັນ, ອາຍຸ 31 ປີ, ເຊື້ອຊາດ-ສັນຊາດ ລາວ, ເປັນປະຊາຊົນຢູ່ບ້ານ ທ່ານາຂາມ, ເມືອງ ສັງທອງ, ນະຄອນຫລວງວຽງຈັນ ແລະ ນາງ ຄຳສອນ ການສອນ, ອາຍຸ 32 ປີ, ເຊື້ອຊາດ-ສັນຊາດ ລາວ, ເປັນປະຊາຊົນຢູ່ບ້ານ ດົງຫມາກຄາຍ, ເມືອງ ໄຊທານີ, ນະຄອນຫລວງວຽງ ຖືກຕົວະຍົວະໃຫ້ແຕ່ງງານກັບຄົນຈີນ, ແລະ ວັນທີ 25 ທັນວາ 2023 ໄດ້ເຮັດໂທລະສານທາງລັດຖະການແຈ້ງຫາສະຖານທູດລາວ ປະຈຳ ມຽນມາ ເພື່ອຊ່ວຍເຫລືອຜູ້ຖືກສົງໄສຕົກເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຊື່ ນາງ ອັນຊັນ ກັນທານຸ ອາຍຸ 22 ປີ, ເປັນປະຊາຊົນຢູບ້ານ ດອນສ້າງໄຜ່, ເມືອງ ປາກງື່ມ, ນະຄອນຫລວງວຽງຈັນ ໄດ້ຖືກກຸ່ມຄົນບໍ່ດີຊັກຊວນໄປເຮັດວຽກຢູ່ຮ້ານອາຫານ ໂຄໂຄ້, ແລະ ບັງຄັບໃຫ້ຂາຍບໍລິການທາງເພດ ຢູ່ເມືອງ ລ້າ, ປະເທດ ມຽນມາ ກັບ ນາງ ນ້ອຍທັນວາ ແກ້ວອຸດົມພົງ, ອາຍຸ 22 ປີ, ເປັນປະຊາຊົນຢູ່ບ້ານ ວັງໄຊ, ເມືອງ ໄຊ, ແຂວງ ອຸດົມໄຊ ຖືກຕວົະຍວົະໃຫ້ຂ້າມໄປເຮັດວຽກຢູ່ ຄາຊິໂນ, ເມືອງ ຫມີງ, ປະເທດ ມຽນມາ.

1.4.4. **ຂະແໜງການສາທາລະນະສຸກ** ໄດ້ຈັດຝຶກອົບຮົມການປິ່ນປົວສຸຂະພາບຈິດ ແລະ ຈິດບຳບັດ ໃຫ້ພະນັກງານແພດໝໍທີ່ເຮັດວຽກການບໍລິການຊ່ວຍເຫຼືອ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຢູ່ສະຖານທີ່ບໍລິການສາທາລະນະສຸກ ໃນວັນທີ 04-06 ມັງກອນ 2023 ທີ່ແຂວງສະຫວັນນະເຂດ ມີຜູ້ເຂົ້າຮ່ວມ 72 ຄົນ, ຍິງ 40 ຄົນ; ກອງປະຊຸມປຶກສາຫາລື ປັບປຸງລະບົບການປະສານງານດ້ານການຄ້າມະນຸດຂອງຂະແໜງສາທາລະນະສຸກ ຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຊ່ວຍເຫຼືອ ແລະ ສົ່ງຕໍ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃຫ້ 08 ແຂວງພາກເໜືອ ໃນວັນທີ 26-27 ມັງກອນ 2023 ທີ່ແຂວງວຽງຈັນ ມີຜູ້ເຂົ້າຮ່ວມ 70 ຄົນ, ຍິງ 30 ຄົນ; ສຳເລັດການເປີດໜ່ວຍງານໃຫ້ຄຳປຶກສາແມ່ຍິງ ແລະ ເດັກນ້ອຍ ສຳລັບຜູ້ລອດຊີວິດຈາກການໃຊ້ຄວາມຮຸນແຮງພ້ອມທັງເປີດໂຕສາຍດ່ວນ 1527 ສຳລັບການໃຫ້ບໍລິການຊ່ວຍເຫຼືອດ້ານສຸຂະພາບແກ່ຜູ້ຖືກເຄາະຮ້າຍ ໃນວັນທີ 07 ສິງຫາ 2023 ທີ່ໂຮງໝໍມະໂຫສົດ ມີຜູ້ເຂົ້າຮ່ວມ 101 ຄົນ, ຍິງ 77 ຄົນ; ຝຶກອົບຮົມການປິ່ນປົວສຸຂະພາບຈິດ ແລະ ຈິດບຳບັດ ໃຫ້ພະນັກງານແພດໝໍທີ່ເຮັດວຽກການບໍລິການຊ່ວຍເຫຼືອ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຢູ່ສະຖານທີ່ບໍລິການສາທາລະນະສຸກ ໃຫ້ 08 ແຂວງພາກເໜືອ ໃນວັນທີ 06-07 ທັນວາ 2023 ທີ່ ແຂວງວຽງຈັນ ມີຜູ້ເຂົ້າຮ່ວມ 49 ຄົນ, ຍິງ 22 ຄົນ; ແຕ່ລະໂຮງໝໍໄດ້ມີທີມງານ

ຢູ່ທຸກໆໂຮງໝໍຂັ້ນສູນກາງຮອດຂັ້ນແຂວງ ເພື່ອບໍລິການຜູ້ຖືກເຄາະຮ້າຍ, ລວມທັງໃຫ້ຄຳປຶກສາແນະນຳດ້ານສຸຂະພາບຈິດ ແລະ ການບຳບັດຈິດ, ສຳລັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ກໍລະນີຜູ້ທຸກຍາກແມ່ນອີງໃສ່ນະໂຍບາຍຕາມລະບຽບກົດໝາຍວ່າດ້ວຍການປິ່ນປົວ, ກອງທຶນປະກັນສຸຂະພາບ ແລະ ກອງທຶນຊ່ວຍເຫຼືອຜູ້ທຸກຍາກ, ໄດ້ສະໜອງຢາປິ່ນປົວພະຍາດຂັ້ນພື້ນຖານ ເພື່ອດູແລເບື້ອງຕົ້ນ ໃຫ້ສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ ຈຳນວນ 26 ລາຍການ ໃນວັນທີ 28 ມີນາ 2023, ນອກນັ້ນ ໄດ້ບໍລິການກວດສຸຂະພາບໃຫ້ແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ສົ່ງມາກວດ ລວມທັງໝົດມີ 92 ຄົນ, ຍິງ 91 ຄົນ (ອາຍຸ 15 ປີລົງມາ ມີ 21 ຄົນ ເປັນຍິງທັງໝົດ, ອາຍຸ 15 ປີ ຂຶ້ນໄປມີ 71 ຄົນ, ຍິງ 70 ຄົນ);

**1.4.5.** **ສູນກາງສະຫະພັນກຳມະບານລາວ** ໄດ້ຈັດກອງປະຊຸມປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງໃນການຊ່ວຍເຫຼືອແມ່ຍິງລາວທີ່ຖືກຫຼອກລວງໄປແຕ່ງງານກັບຄົນຕ່າງປະເທດ ໃນວັນທີ 28 ກຸມພາ 2023 ມີຜູ້ເຂົ້າຮ່ວມ 12 ຄົນ, ຍິງ 06 ຄົນ; ໄດ້ຈັດກອງປະຊຸມປຶກສາຫາລືແລກປ່ຽນວຽກງານສູນ MRC ແຕ່ເດືອນມັງກອນ ຫາ ເດືອນ ພຶດສະພາ 2023 ທີ່ແຂວງສະຫວັນນະເຂດ, ຫຼວງພະບາງ ແລະ ບໍ່ແກ້ວ ມີຜູ້ເຂົ້າຮ່ວມ 19 ຄົນ, ຍິງ 10 ຄົນ; ໄດ້ຈັດກອງປະຊຸມແລກປ່ຽນບົດຮຽນ ແລະ ປຶກສາຫາລືກ່ຽວກັບການເກັບກຳ ແລະ ລາຍງານສະຖິຕິຈຳນວນຫົວໜ່ວຍແຮງງານ ແລະ ຜູ້ອອກແຮງງານທີ່ເຮັດວຽກຢູ່ຫົວໜ່ວຍແຮງງານພາກວິສາຫະກິດ ຢູ່ ສປປ ລາວ ວັນທີ 02 ສິງຫາ 2023 ທີ່ນະຄອນຫຼວງວຽງຈັນ ມີຜູ້ເຂົ້າຮ່ວມ 39 ຄົນ, ຍິງ 13 ຄົນ; ໄດ້ຈັດກອງປະຊຸມເຜີຍແຜ່ເອກະສານແຈ້ງການແນະນຳ, ການຈັດຕັ້ງປະຕິບັດ ກ່ຽວກັບການປັບປຸງຄ່າແຮງງານຂັ້ນຕ່ຳສຸດ (ໃໝ່) ສຳລັບຜູ້ອອກແຮງງານຢູ່ ສປປ ລາວ ທີ່ລັດຖະບານປະກາດໃຊ້ຈາກ 1,300,000 ກີບ (ໜຶ່ງລ້ານສາມແສນກີບ) ຕໍ່ຄົນຕໍ່ເດືອນ ມາເປັນ 1,600,000 ກີບ (ໜຶ່ງລ້ານຫົກແສນກີບ) ເລີ່ມຈັດຕັ້ງປະຕິບັດແຕ່ວັນທີ 01 ຕຸລາ 2023 ສະບັບເລກທີ 1016/ສກລ ນະຄອນຫລວງວຽງຈັນ ວັນທີ 06 ກັນຍາ 2023 ໃຫ້ສະຫະພັນກຳມະບານກະຊວງ, ອົງການ, ນະຄອນຫຼວງວຽງຈັນ ແລະ ສະຫະພັນກຳມະບານແຂວງ ຄັ້ງວັນທີ 2 ຕຸລາ 2023;

**1.4.6.** **ອັນພົ້ນເດັ່ນ** ນັບແຕ່ໄດ້ສ້າງຕັ້ງກອງບັນຊາການປ້ອງກັນຄວາມສະຫງົບເຂດເສດຖະກິດພິເສດສາມຫຼ່ຽມຄຳ ແຂວງບໍ່ແກ້ວ ແມ່ນໄດ້ໃຫ້ການຊ່ວຍເຫຼືອຜູ້ທີ່ມີຄວາມສ່ຽງຈາກການຄ້າມະນຸດ ທີ່ເປັນຄົນລາວ ແລະ ຕ່າງປະເທດ ໄດ້ທັງໝົດ 4,416 ຄົນ, ຍິງ 1,432 ຄົນ ໃນນີ້ຄົນລາວ 1,674 ຄົນ, ຍິງ 878 ຄົນ, ຄົນຕ່າງປະເທດ 2,742 ຄົນ, ຍິງ 554 ຄົນ ແລະ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈຳນວນ 25 ຄົນ, ຍິງ 08 ຄົນ;

**1.4.7.** **ຄະນະກຳມະການຕ້ານການຄ້າມະນຸດ ແຂວງ ແລະ ນະຄອນຫຼວງວຽງຈັນ ໄດ້ຈັດກິດຈະກຳໃຫ້ການຊ່ວຍເຫຼືອ ແລະ ປົກປ້ອງ ກຸ່ມສ່ຽງ ແລະ ຜູ້ຖືກເຄາະຮ້າຍຄື:**

**1.4.8.** ໄດ້ລົງກວດກາຫົວໜ່ວຍແຮງງານ 27 ຫົວໜ່ວຍ ໃນນີ້ມີ 15 ຫົວໜ່ວຍມີກົດລະບຽບພາຍໃນບໍລິສັດ, ມີແຮງງານທັງໝົດ 2,276 ຄົນ, ຍິງ 1,602 ຄົນ, ແຮງງານລາວ 2,217 ຄົນ, ຍິງ 962 ຄົນ, ແຮງງານຕ່າງປະເທດ 59 ຄົນ, ຍິງ 26 ຄົນ, ໄດ້ເຂົ້າປະກັນສັງຄົມ 1,602 ຄົນ, ຍິງ 1,143 ຄົນ ແລະ ມີສັນຍາ 1,847 ຄົນ, ຍິງ 1,375 ຄົນ, ໄດ້ສົ່ງລວມຕົວເລກຝຶກ ແລະ ການພັດທະນາສີມືແຮງງານ ກ່ອນເຂົ້າເຮັດວຽກຢູ່ 06 ຫົວໜ່ວຍແຮງງານ ແລະ 01 ໂຄງການ ມີຈຳນວນ 516 ຄົນ, ຍິງ 302 ຄົນ, ມີຜູ້ເຮັດວຽກຈຳນວນ 445 ຄົນ, ຍິງ 265 ຄົນ;

**1.4.9.** ໄດ້ຈັດຝຶກອົບຮົມມາດຕະຖານການດຳເນີນງານການປົກປ້ອງ, ການຊ່ວຍເຫຼືອທາງສັງຄົມ, ການຄຸ້ມຄອງການປະສານງານ ແລະ ການສົ່ງຕໍ່ແກ່ແມ່ຍິງ ແລະ ເດັກຍິງ ທີ່ຖືກຄວາມຮຸນແຮງໃນ ສປປ ລາວ, ຈັດຝຶກອົບຮົມກ່ຽວກັບການພັດທະນາ ແລະ ປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງແມ່ຍິງ ແລະ ເດັກນ້ອຍ, ຈັດຝຶກອົບຮົມສ້າງຄວາມເຂັ້ມແຂງໃຫ້ແກ່ຄະນະຕາໜ່າງປົກປ້ອງເດັກ ແລະ ຊ່ວຍເຫຼືອເດັກຂັ້ນບ້ານ, ຈັດຝຶກອົບຮົມກ່ຽວກັບການປົກປ້ອງສັງຄົມ ໃຫ້ກຳມະບານແຂວງ, ເມືອງ ແລະ ກຸ່ມແຮງງານນອກລະບົບກ່ຽວກັບວຽກງານປົກປ້ອງສັງຄົມ, ຈັດຝຶກອົບຮົມສ້າງຄວາມເຂັ້ມແຂງໃນການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍຄວາມສະເໝີພາບຍິງ-ຊາຍ ແລະ ນິຕິກຳອື່ນໆ ມີຜູ້ເຂົ້າຮ່ວມທັງໝົດ 600 ຄົນ, ຍິງ 365 ຄົນ;

**1.4.10.** ໄດ້ຊ່ວຍເຫຼືອພົນລະເມືອງລາວທີ່ໄປອອກແຮງງານຢູ່ປະເທດມຽນມາ ຈຳນວນ 58 ຄົນ, ຍິງ 18 ຄົນ ແລະ ຄົນຈີນ ຈຳນວນ 137 ຄົນ, ຍິງ 13 ຄົນ, ເດັກນ້ອຍ 01 ຄົນ ໄດ້ມອບໃຫ້ທາງການຈີນທີ່ມາລາດຕະເວນຕາມແມ່ນ້ຳຂອງກັບຄືນປະເທດແລ້ວ ແລະ ໄດ້ລົງເຮັດວຽກງານການປົກປ້ອງແຮງງານ ແລະ ກຳມະກອນຢູ່ບັນດາບໍລິສັດ, ໂຮງຈັກ, ໂຮງງານ ແລະ ຫົວໜ່ວຍທຸລະກິດທົ່ວແຂວງ ມີຜູ້ເຂົ້າຮ່ວມ 814 ຄົນ, ຍິງ 156 ຄົນ;

**1.4.11.** ໄດ້ໃຫ້ຄຳປຶກສາ, ແກ້ໄຂບັນຫາ ແລະ ເປັນຕົວແທນໃຫ້ແກ່ການປົກປ້ອງສິດ ແລະຜົນປະໂຫຍດອັນຊອບທຳຂອງແມ່ຍິງ ແລະ ເດັກນ້ອຍ ແລະ ສະໜອງຂໍ້ມູນຂ່າວສານໃຫ້ແກ່ແຮງງານທີ່ຈະໄປອອກແຮງງານຢູ່ຕ່າງປະເທດແບບບໍ່ຖືກຕ້ອງ ໄດ້ 178 ຄົນ, ຍິງ 100 ຄົນ;

**1.4.12.** ໄດ້ຈັດກອງປະຊຸມຄະນະກຳມະການສາມຝ່າຍ ໃນການປຶກສາຫາລືກ່ຽວກັບ ວິທີການໂຄສະນາເພື່ອການປົກປ້ອງແຮງງານລາວເຄື່ອນຍ້າຍໄປອອກແຮງງານຢູ່ຕ່າງປະເທດ ແລະ ໄດ້ຈັດກອງປະຊຸມປຶກສາຫາລືກ່ຽວກັບການສົ່ງເສີມຜູ້ທີ່ມີຄວາມສ່ຽງ, ຜູ້ດ້ອຍໂອກາດ ແລະ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃຫ້ໄດ້ຮັບການຝຶກອົບຮົມວິຊາຊີບ ຊອກວຽກເຮັດງານທຳ ມີຜູ້ເຂົ້າຮ່ວມ 52 ຄົນ, ຍິງ 18 ຄົນ;

1.5. <u>**ດ້ານການພົວພັນຮ່ວມມືກັບຕ່າງປະເທດ**</u>

**1.5.1. ການຮ່ວມມືສອງຝ່າຍ ລະຫວ່າງ ສປປ ລາວ-ສສ ຫວຽດນາມ**

- **ຂະແໜງການປ້ອງກັນຄວາມສະຫງົບ** ໄດ້ຈັດກອງປະຊຸມສະຫຼຸບການຈັດຕັ້ງປະຕິບັດສັນຍາ ລະຫວ່າງລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ສາທາລະນະລັດ ສັງຄົມນິຍົມຫວຽດນາມ ວ່າດ້ວຍການຮ່ວມມືສະກັດກັ້ນ, ຕ້ານການຄ້າມະນຸດ ແລະ ປົກປ້ອງຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໄລຍະແຕ່ປີ 2010-2022 ໃນວັນທີ 20-24 ກຸມພາ 2023 ທີ່ ແຂວງ ຫຼວງພະບາງ ມີຜູ້ເຂົ້າຮ່ວມ 57 ຄົນ; ໄດ້ເຂົ້າຮ່ວມຝຶກອົບຮົມ ກ່ຽວກັບວຽກງານການສືບສວນ-ສອບສວນ ໃຫ້ແກ່ເຈົ້າໜ້າທີ່ສະກັດກັ້ນ ແລະ ຕ້ານການຄ້າມະນຸດ ຈຳນວນ 10 ສະຫາຍ ກຳນົດເວລາ 45 ວັນ ໃນວັນທີ 30 ຕຸລາ 2023 ຫາ 13 ທັນວາ 2023 ທີ່ ສສ ຫວຽດນາມ;

**1.5.2. ການຮ່ວມມືສອງຝ່າຍ ລະຫວ່າງ ສປປ ລາວ-ຣາຊະອານາຈັກໄທ**

- **ຂະແໜງການປ້ອງກັນຄວາມສະຫງົບ** ໄດ້ສຳເລັດການເປັນເຈົ້າພາບຈັດກອງປະຊຸມທົບທວນແຜນປະຕິບັດງານ (POA) ລາວ-ໄທ ໄລຍະປີ 2019-2021 ແລະ ທິດທາງແຜນການໃນຕໍ່ໜ້າ ລະຫວ່າງ ລັດຖະບານ ສປປ ລາວ ແລະ ຣາຊາອານາຈັກໄທ ລະຫວ່າງ ວັນທີ 12-15 ມີນາ 2023 ທີ່ໂຮງແຮມລາວພາຊາ ມີຜູ້ເຂົ້າຮ່ວມ 48 ຄົນ, ຍິງ 14 ຄົນ; ເຂົ້າຮ່ວມຝຶກອົບຮົມກ່ຽວກັບການສະແຫວງຫາຜົນປະໂຫຍດທາງເພດຈາກເດັກ ຫຼື ການຂູດຮີດທາງເພດເດັກ ໃນວັນທີ 27-31 ມີນາ 2023 ທີ່ບາງກອກປະເທດໄທ ມີຜູ້ເຂົ້າຮ່ວມ 25 ຄົນ, ຍິງ 05 ຄົນ; ໄດ້ເຂົ້າຮ່ວມກອງປະຊຸມລະດັບພາກພື້ນກ່ຽວກັບຕ້ານການຂູດຮີດທາງເພດ 24-26 ຕຸລາ 2023 ທີ່ປະເທດໄທ; ໄດ້ເຂົ້າຮ່ວມຝຶກວຽກງານຕ້ານການຄ້າມະນຸດ ໃນການບັງຄັບໃຊ້ກົດໝາຍ ທີ່ສູນຝຶກອົບຮົມລະຫວ່າງປະເທດ ວ່າດ້ວຍການດຳເນີນການບັງຄັບໃຊ້ກົດໝາຍ-ກຸງເທບ ປະເທດໄທ ຈຳນວນ 05 ຄັ້ງ;

- **ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ** ໄດ້ເຂົ້າພົບປະ ແລະ ປຶກສາຫາລື ຮ່ວມກັບ ສະຖານເອກອັກຄະລັດຖະທູດ ຣາຊະອານາຈັກໄທ ປະຈຳ ສປປ ລາວ ກ່ຽວກັບການອອກວີຊ່າໃຫ້ແກ່ແຮງງານລາວໄວຂຶ້ນ ໃນວັນທີ 21 ມີນາ 2023 ແລະ ໄດ້ສຳເລັດການຈັດຕັ້ງປະຕິບັດແກ້ໄຂບັນຫາແຮງງານລາວທີ່ເຮັດວຽກແບບຜິດກົດໝາຍຢູ່ໄທ ນັບແຕ່ວັນທີ 11 ກັນຍາ 2022 ຫາ ວັນທີ 23 ມີນາ 2023 ຊຶ່ງສາມາດສັງລວມເອກະສານສະເໜີປ່ຽນໜັງສືຜ່ານແດນໄດ້ 4,273 ຄົນ, ຍິງ 2,493 ຄົນ ແລະ ອອກໃບອະນຸຍາດໃຫ້ບັນຊີລາຍຊື່ແຮງງານ ຈຳນວນ 3,836 ຄົນ, ຍິງ 2,244 ຄົນ;

- **ສູນກາງສະຫະພັນແມ່ຍິງລາວ** ໄປທັດສະນະສຶກສາແລກປ່ຽນບົດຮຽນກ່ຽວກັບການຄຸ້ມຄອງບໍລິຫານສູນ ແລະ ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ຢູ່ປະເທດໄທ ໃນລະຫວ່າງວັນທີ 07-11 ສິງຫາ 2023 ຈຳນວນ 05 ຄົນ;

- **ຂະແໜງການຕ່າງປະເທດ** ໄດ້ປະສານກັບເອກອັກຄະລັດຖະທູດ ແຫ່ງ ສປປ ລາວ ທີ່ ປະຈໍາຢູ່ບາງກອກ ເພື່ອຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຊຶ່ງປະຈຸບັນພວກກ່ຽວຢູ່ຄ້າຍຄຸມຂັງຄົນຕ່າງດ້າວ, ອໍາເພີແມ່ສອນ, ແຂວງ ຕາກ, ປະເທດໄທ; ເຂົ້າຮ່ວມກອງປະຊຸມປຶກສາຫາລືລະດັບສູງ ກ່ຽວກັບການແກ້ໄຂບັນຫາອາຊະຍາກໍາ, ການຄ້າມະນຸດທີ່ຕິດພັນກັບຄາສິໂນ ແລະ Online Scams ໃນພາກພື້ນອາຊີປາຊີຟິກສຽງໃຕ້ ເຊິ່ງຈັດຢູ່ບາງກອກ, ປະເທດໄທ ໃນວັນທີ 28 ມິຖຸນາ 2023;
- **ສູນກາງສະຫະພັນກໍາມະບານລາວ** ຈັດກອງປະຊຸມປະຈໍາປີ 2023 ສະຫຼຸບຖອດຖອນບົດຮຽນ ແລະ ວາງແຜນໃນການຈັດຕັ້ງປະຕິບັດວຽກງານສະກັດກັ້ນ ແລະ ຕ້ານການຄ້າມະນຸດ ລະຫວ່າງສູນກາງສະຫະພັນກໍາມະບານລາວ ແລະ ອົງການມູນລະນິທິພິທັກສະຕິແຫ່ງປະເທດໄທ (AAT) ໃນຕົ້ນເດືອນກັນຍາ 2023 ທີ່ ແຂວງວຽງຈັນ ມີຜູ້ເຂົ້າຮ່ວມ 25 ຄົນ, ຍິງ 10 ຄົນ;

**1.5.3. ການຮ່ວມມືສອງຝ່າຍ ລະຫວ່າງ ສປປ ລາວ-ສ. ເກົາຫຼີ**

- **ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ** ໄດ້ຈັດກອງປະຊຸມປຶກສາຫາລືກ່ຽວກັບການຈັດສົ່ງແຮງງານລາວໄປເຮັດວຽກທີ່ ສ.ເກົາຫຼີ ຕາມລະບົບການຈ້າງງານ (EPS) ຮ່ວມກັບ ອົງການບໍລິການພັດທະນາຊັບພະຍາກອນມະນຸດຂອງ ປະເທດ ສາທາລະນະລັດ ເກົາຫຼີ ລະຫວ່າງວັນທີ 23-24 ກຸມພາ 2023 ທີ່ນະຄອນຫຼວງວຽງຈັນ ມີຜູ້ເຂົ້າຮ່ວມ 18 ຄົນ, ຍິງ 04 ຄົນ; ສໍາເລັດການລົງນາມບົດບັນທຶກຄວາມເຂົ້າໃຈກ່ຽວກັບການຈັດສົ່ງແຮງງານລາວ ໄປເຮັດວຽກຕາມລະດູການ ສ. ເກົາຫຼີ ລະຫວ່າງ ກົມການຈັດຫາງານ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ເຈົ້າເມືອງ ຂອງ ສ.ເກົາຫຼີ ຈໍານວນ 46 ເມືອງ ໃນວັນທີ 04 ມັງກອນ 2023 ຫາ ວັນທີ 13 ທັນວາ 2023 ໃນນັ້ນເປັນເມືອງທີ່ຮ່ວມມືໃໝ່ຈໍານວນ 42 ເມືອງ, ປັບປຸງເນື້ອໃນເພີ່ມເຕີມແລ້ວເຊັນຄືນ ຈໍານວນ 04 ເມືອງ, ມາຮອດປັດຈຸບັນໄດ້ມີບົດບັນທຶກຮ່ວມກັນແລ້ວຈໍານວນ 53 ເມືອງ;

**1.5.4. ການຮ່ວມມືສອງຝ່າຍ ລະຫວ່າງ ສປປ ລາວ-ຍີປຸ່ນ**

- **ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ** ໄດ້ເຂົ້າຮ່ວມກອງປະຊຸມທາງໄກ ຮ່ວມກັບ ກະຊວງຍຸຕິທໍາ, ກະຊວງສາທາລະນະສຸກ, ກະຊວງແຮງງານ, ກະຊວງການຕ່າງປະເທດ ແລະ ພາກສ່ວນກ່ຽວຂ້ອງອື່ນໆ ຂອງປະເທດ ຍີ່ປຸ່ນ ກ່ຽວກັບຂັ້ນຕອນການຈັດສົ່ງແຮງງານລາວທີ່ມີທັກສະ ໄປເຮັດວຽກທີ່ປະເທດ ຍີ່ປຸ່ນ ໃນວັນທີ 17 ກຸມພາ 2023 ແລະ ໄດ້ປະສານງານກັບບໍລິສັດ ONODERA USER RUN ແຫ່ງປະເທດຍີ່ປຸ່ນ ເພື່ອກະກຽມການສ້າງສູນຝຶກອົບຮົມໃຫ້ແກ່ແຮງງານລາວ ເພື່ອສອບເສັງ ໄປເຮັດວຽກທີ່ປະເທດ ຍີ່ປຸ່ນ ພາຍໃຕ້ລະບົບແຮງງານທີ່ມີທັກສະ ສະເພາະດ້ານ “Specified Workers”; ໄດ້ສໍາເລັດພິທີເຊັນບົດບັນທຶກການຮ່ວມມື ລະຫວ່າງ ກົມການຈັດຫາງານ ແລະ ບໍລິສັດ ໂອໂນເດລາ ຢູຊີລັນ ຈໍາກັດ ກ່ຽວກັບການຈັດສົ່ງແຮງງານທີ່ມີສີມືໄປເຮັດວຽກຢູ່ປະເທດຍີປຸ່ນ ໃນວັນທີ 04 ກໍລະກົດ 2023 ທີ່ ໂຮງແຮມຄຣາວພລາຊາ.

**1.5.5. ການຮ່ວມມືຫຼາຍຝ່າຍ**

- **ຂະແໜງການຕ່າງປະເທດ** ໄດ້ເຂົ້າຮ່ວມກອງປະຊຸມສຸດຍອດ ກ່ຽວກັບ ການເປັນຂ້າທາດແບບໃໝ່ ແລະ ການຄ້າມະນຸດຂອງພາກພື້ນອາຊີ (Pan-Asia Modern Slavery and Human Trafficking Summit), ໃນວັນທີ 01-02 ມີນາ 2023, ທີ່ ບາງກອກ, ປະເທດໄທ; ໄດ້ປະສານສົມທົບກັບສະຖານທູດອາເມລິກາ ປະຈໍາ ສປປ ລາວ ເພື່ອຈັດກອງປະຊຸມເຜີຍແຜ່ບົດລາຍງານຕ້ານການຄ້າມະນຸດຂອງ ສ. ອາເມລິກາ ໃນວັນທີ 17 ມີນາ 2023 ມີຜູ້ເຂົ້າຮ່ວມ 48 ຄົນ, ຍິງ 18 ຄົນ;

**1.5.6. ການຮ່ວມມືໃນກອບຄອມມິດ (6 ປະເທດ)**

- **ກອງເລຂາຄະນະກໍາມະການຕ້ານການຄ້າມະນຸດລະດັບຊາດ** ສໍາເລັດການເຂົ້າຮ່ວມກອງປະຊຸມໃນກອບຄອມມິດ 06 ປະເທດ ກ່ຽວກັບການຮ່ວມມືຕ້ານການຄ້າມະນຸດ ຂອງຄະນະປະຕິບັດງານພາກພື້ນ (RTF)

ແລະ ເຈົ້າໜ້າທີ່ອາວຸໂສຂະບວນການຄອມມິດ ຄັ້ງທີ 15 (SOM COMMIT 15) ແບບອອນລາຍ ທີ່ປະເທດກຳປູເຈຍ ເປັນເຈົ້າພາບ ໃນວັນທີ 23-24 ພະຈິກ 2023.

**1.5.7. ການຮ່ວມມືໃນກອບອາຊຽນ (10 ປະເທດ)**

- **ກະຊວງການປ້ອງກັນຄວາມສະຫງົບ** ເຂົ້າຮ່ວມກອງປະຊຸມສຳມະນາພາກພື້ນອາຊຽນ-ສະຫະພາບເອີຣົບ ວ່າດ້ວຍການພັດທະນາ ແນວທາງການປະຕິບັດທີ່ກ່ຽວຂ້ອງກັບວຽກງານການຫຼຸດຜ່ອນການໃຊ້ຄວາມຮຸນແຮງ ການຟື້ນຟູ ແລະ ກັບຄືນສູ່ສັງຄົມ ໃນວັນທີ 28 ກຸມພາ ຫາ 03 ມີນາ 2023, ທີ່ ບາຫຼີ, ອິນໂດເນເຊຍ; ເຂົ້າຮ່ວມກອງປະຊຸມສຳມະນາວຽກງານຕ້ານການຄ້າມະນຸດ ໃນວັນທີ 23-27 ຕຸລາ 2023 ທີ່ ປະເທດສິງກະໂປ;
- **ກະຊວງການແຮງງານ ແລະ ສະຫວັດດີການສັງຄົມ** ສຳເລັດກອງປະຊຸມກະກຽມເນື້ອໃນໃຫ້ແກ່ກອງປະຊຸມແຮງງານເຄື່ອນຍ້າຍອາຊຽນ ຄັ້ງທີ 16 ໃນວັນທີ 22 ກັນຍາ 2023 ທີ່ໂຮງແຮມ ວຽງຈັນພລາຊາ, ມີຜູ້ເຂົ້າຮ່ວມທັງໝົດ 49 ຄົນ, ຍິງ 19 ຄົນ (ລວມຜູ້ເຂົ້າຮ່ວມອອນລາຍ). ພ້ອມນີ້ ໄດ້ເຂົ້າຮ່ວມກອງປະຊຸມດັ່ງກ່າວທີ່ຈາກາຕາ, ປະເທດອິນໂດເນເຊຍ ໃນວັນທີ 25-26 ຕຸລາ 2023;
- **ສູນກາງສະຫະພັນແມ່ຍິງລາວ** ໄດ້ເຂົ້າຮ່ວມກອງປະຊຸມປຶກສາຫາລືກ່ຽວກັບການພັດທະນາລະບົບການຕິດຕາມ ແລະ ປະເມີນຜົນວຽກງານບົດບາດຍິງ-ຊາຍ, ຄວາມອ່ອນໄຫວທາງດ້ານເພດ ແລະ ຜູ້ຖືກເຄາະຮ້າຍເປັນຈຸດໃຈກາງ ເພື່ອຕ້ານການຄ້າມະນຸດ ຄັ້ງທີ 04 ໃນວັນທີ 08-10 ຕຸລາ 2023 ທີ່ອິນໂດເນເຊຍ;

**1.5.8. ການຮ່ວມມືໃນຂະບວນການບາຫຼີ**

- **ກະຊວງການປ້ອງກັນຄວາມສະຫງົບ** ເຂົ້າຮ່ວມກອງປະຊຸມຄູ່ຮ່ວມມືວ່າດ້ວຍການເຄື່ອນຍ້າຍຖິ່ນຖານທີ່ຜິດກົດໝາຍຕ້ານການລັກລອບເອົາຄົນເຂົ້າ-ອອກເມືອງ ແລະ ບັນຫາທີ່ຕິດພັນກັບອາຊະຍາກຳຂ້າມຊາດຂອງ RSO (ກອບວຽກຂະບວນການບາຫຼີພາກພື້ນ) ໃນວັນທີ 10-11 ຕຸລາ 2023 ທີ່ ຣາຊະອານາຈັກໄທ;

**1.5.9. ການຮ່ວມມືກັບສາກົນ**

- **ກະຊວງການປ້ອງກັນຄວາມສະຫງົບ** ເຂົ້າຮ່ວມກອງປະຊຸມລະດັບລັດຖະມົນຕີຂອງຂະບວນການບາລີ (Bali Process) ວ່າດ້ວຍການຕ້ານການເຂົ້າອອກເມືອງຜິດກົດໝາຍ, ການຄ້າມະນຸດ ແລະ ອາຊະຍາກຳຕ່າງໆທີ່ກ່ຽວຂ້ອງ ຄັ້ງທີ 08 ໃນວັນທີ 08-10 ກຸມພາ 2023 ທີ່ປະເທດອົດສະຕາລີ; ເຂົ້າຮ່ວມກອງປະຊຸມຕ້ານອາຊະຍາກຳທີ່ເກີດຂຶ້ນກັບເດັກທາງອອນລາຍ 07-11 ສິງຫາ 2023 ທີ່ປະເທດອິນໂດເນເຊຍ; ເຂົ້າຮ່ວມຝຶກອົບຮົມການຕ້ານການຄ້າມະນຸດ ໃນວັນທີ 18-22 ກັນຍາ 2023 ທີ່ສູນບັງຄັບໃຊ້ກົດໝາຍ ທີ່ບາງກອກ ປະເທດໄທ, ມີຜູ້ເຂົ້າຮ່ວມ 48 ຄົນ, ຍິງ 12 ຄົນ;
- **ສູນກາງສະຫະພັນແມ່ຍິງລາວ** ເຂົ້າຮ່ວມກອງປະຊຸມກ່ຽວກັບບັນຫາການເປັນຂ້າທາດແບບໃໝ່ ແລະ ການຄ້າມະນຸດ ໃນວັນທີ 23-30 ມິຖຸນາ 2023 ທີ່ ປະເທດອົດສະຕາລີ; ເຂົ້າຮ່ວມຝຶກອົບຮົມການເປັນຄູຝຶກລະດັບພາກພື້ນ ຄັ້ງທີ 01 ກ່ຽວກັບການເອົາໃຈໃສ່ບົດບາດຍິງຊາຍ ແລະ ວິທີເອົາຜູ້ຖືກເຄາະຮ້າຍເປັນໃຈກາງໃຫ້ແກ່ພະນັກງານທີ່ເຮັດໜ້າທີ່ຊ່ວຍເຫຼືອຜູ້ຖືກເຄາະຮ້າຍຂອງບັນດາປະເທດອາຊຽນ ໃນວັນທີ 09-14 ກໍລະກົດ 2023 ທີ່ບາງກອກ, ປະເທດໄທ;

**1.5.10. ການຮ່ວມມືກັບອົງການຈັດຕັ້ງສາກົນ**

- **ກະຊວງການປ້ອງກັນຄວາມສະຫງົບ** ຮ່ວມມືກັບແຜນງານອາຊຽນ-ອົດສະຕາລີ ເພື່ອຕ້ານການຄ້າມະນຸດ (Asean-ACT) ຈັດກອງປະຊຸມສ້າງຮ່າງປຶ້ມຄູ່ມືຝຶກອົບຮົມວຽກງານສືບສວນ-ສອບສວນຄະດີຄ້າມະນຸດ ໃນວັນທີ 21-24 ມີນາ 2023 ທີ່ແຂວງວຽງຈັນ ມີຜູ້ເຂົ້າຮ່ວມ 17 ຄົນ, ຍິງ 06 ຄົນ; ໄດ້ຈັດກອງປະຊຸມປຶກສາຫາລື ເພື່ອແລກປ່ຽນຂໍ້ມູນກ່ຽວກັບຄະດີຄ້າມະນຸດ ໃນກະຊວງການຍຸຕິທຳ ແລະ ຜູ້ບັງຄັບໃຊ້ກົດໝາຍ ໃນວັນທີ 20 ມິຖຸນາ 2023 ທີ່ໂຮງແຮມລາວພຣາຊາ ມີຜູ້ເຂົ້າຮ່ວມ 21 ຄົນ, ຍິງ 08 ຄົນ; ຈັດກອງປະຊຸມປຶກສາຫາລືກ່ຽວກັບແຜນງານ ອາຊຽນ-ອົດສະຕາລີ ເພື່ອຕ້ານການຄ້າມະນຸດໄລຍະທີ II ໃນວັນທີ 21-22 ສິງຫາ 2023 ທີ່ນະຄອນຫຼວງວຽງຈັນ ມີຜູ້ເຂົ້າຮ່ວມ 29 ຄົນ, ຍິງ 12 ຄົນ; ຈັດກອງປະຊຸມຝຶກ

ອົບຮົມວຽກງານຫຼັກຖານດ້ານດິຈິຕ໋ອນ ໃນຄະດີຄ້າມະນຸດ ວັນທີ 23-25 ສິງຫາ 2023 ທີ່ນະຄອນຫຼວງວຽງຈັນ; ຮ່ວມມືກັບອົງການວິນຣ໋ອກສາກົນ (Winrock International) ຈັດກອງປະຊຸມຝຶກອົບຮົມ ກ່ຽວກັບການສ້າງແຜນງານ ວ່າດ້ວຍຕ້ານການຄ້າມະນຸດຂັ້ນແຂວງ ແລະ ຂັ້ນເມືອງເປົ້າໝາຍ ວັນທີ 19-22 ມີນາ 2023 ທີ່ແຂວງຈຳປາສັກ ມີຜູ້ເຂົ້າຮ່ວມ 63 ຄົນ, ຍິງ 21 ຄົນ; ເຂົ້າຮ່ວມກອງປະຊຸມແລກປ່ຽນບົດຮຽນກ່ຽວກັບວຽກງານຕ້ານການຄ້າມະນຸດ ລະຫວ່າງ ສະຖານທູດອາເມລິກາ ປະຈຳ ສປປ ລາວ ແລະ ກອງເລຂາຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ ໃນວັນທີ 17 ມີນາ 2023 ທີ່ນະຄອນຫຼວງວຽງຈັນ ມີຜູ້ເຂົ້າຮ່ວມ 48 ຄົນ, ຍິງ 18 ຄົນ; ຮ່ວມມືກັບມູນນິທິເອເຊຍ (Asia foundation) ເຂົ້າຮ່ວມກອງປະຊຸມປະເມີນການຈັດຕັ້ງປະຕິບັດໂຄງການສ້າງຄວາມເຂັ້ມແຂງໃຫ້ເຄືອຂ່າຍຕ້ານການຄ້າມະນຸດລະດັບຊາດ ແລະ ເຂົ້າເຖິງຂະບວນການຍຸຕິທຳ ໃນວັນທີ 06 ມັງກອນ ຫາ 01 ກຸມພາ 2023 ທີ່ແຂວງສະຫວັນນະເຂດ, ຈັດກອງປະຊຸມປຶກສາຫາລືກ່ຽວກັບການຈັດກອງປະຊຸມສ້າງປຶ້ມຄູ່ມືຄູຝຶກການກຳນົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນວັນທີ 07 ກຸມພາ 2023; ຈັດກອງປະຊຸມຝຶກອົບຮົມຄູຝຶກວຽກງານການກຳນົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ວັນທີ 20-24 ພະຈິກ 2023 ທີ່ແຂວງຫຼວງພະບາງ ຜູ້ເຂົ້າຮ່ວມ 40 ຄົນ, ຍິງ 22 ຄົນ; ຮ່ວມມືກັບອົງການຈັດຕັ້ງສາກົນ ເພື່ອການເຄື່ອນຍ້າຍຖິ່ນຖານ ( IOM ) ໄດ້ຮັບການສະໜັບສະໜູນ ຈັດສື່ສິ່ງພິມຕ້ານການຄ້າມະນຸດ ຂອງຫ້ອງການກອງເລຂາ ຄຕມຊ ປະກອບມີ ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ພາສາລາວ-ພາສາອັງກິດ ຈຳນວນ 1,000 ຫົວ, ໂປູດເຕີ້ຕ້ານການຄ້າມະນຸດ 1,000 ແຜ່ນ, ແຜ່ນພັບຕ້ານການຄ້າມະນຸດ 1,000 ແຜ່ນ, ປ້າຍຕັ້ງໂຕະໂຄສະນາພັບເກັບໄດ້ ພາສາລາວ-ພາສາອັງກິດ 60 ອັນ, (ພາສາລາວ 30, ພາສາອັງກິດ 30) ແລະ ຈັດຝຶກອົບຮົມວຽກງານການຕ້ານການຄ້າມະນຸດ ແລະ ການລັກລອບເຂົ້າເມືອງຜິດກົດໝາຍ ໃຫ້ເຈົ້າໜ້າທີ່ກວດຄົນເຂົ້າ-ອອກເມືອງ ປກສ ແຂວງຫຼວງນໍ້າທາ, ອຸດົມໄຊ, ບໍ່ແກ້ວ, ຜົ້ງສາລີ, ຊຽງຂວາງ ແລະ ຫົວພັນ ໃນວັນທີ 08 ທັນວາ 2023 ທີ່ໂຮງແຮມລາວພຣາຊາ ມີຜູ້ເຂົ້າຮ່ວມ 32 ຄົນ, ຍິງ 08 ຄົນ; ຮ່ວມມືກັບມູນນິທິເອເຊຍ ຈັດກອງປະຊຸມປະກອບຄຳເຫັນໃສ່ຮ່າງຄູ່ມືຝຶກອົບຮົມຄູຝຶກວຽກງານການກຳນົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນວັນທີ 22-24 ສິງຫາ 2023 ທີ່ແຂວງວຽງຈັນ ຜູ້ເຂົ້າຮ່ວມ 18 ຄົນ, ຍິງ 06 ຄົນ;

- **ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ** ຮ່ວມມືກັບອົງການວິນຣອກສາກົນ (Winrock International) ໄດ້ສຳເລັດການລົງນາມບົດບັນທຶກຄວາມເຂົ້າໃຈ ລະຫວ່າງ ກົມສັງຄົມສົງເຄາະ ກັບ ອົງການວິນຣອກສາກົນ ໂຄງການຫຼຸດຜ່ອນຄວາມສ່ຽງຈາກການຄ້າມະນຸດ ວັນທີ 11 ມັງກອນ 2023 ທີ່ນະຄອນຫຼວງວຽງຈັນ ມີຜູ້ເຂົ້າຮ່ວມ 98 ຄົນ, ຍິງ 37 ຄົນ; ໄດ້ຈັດກອງປະຊຸມນຳສະເໜີໂຄງການ ແລະ ວາງແຜນກິດຈະກຳ ປະຈຳປີ 2023 ໂຄງການຫຼຸດຜ່ອນຄວາມສ່ຽງຈາກການຄ້າມະນຸດ ໃຫ້ແກ່ຄະນະກຳມະການຄຸ້ມຄອງການຈັດຕັ້ງປະຕິບັດໂຄງການຂັ້ນເມືອງ ແລະ ອຳນາດການປົກຄອງບ້ານເປົ້າໝາຍ ໃນວັນທີ 11-12 ມັງກອນ 2023, ທີ່ແຂວງຫຼວງນໍ້າທາ ມີຜູ້ເຂົ້າຮ່ວມ 81 ຄົນ, ຍິງ 25 ຄົນ; ໄດ້ຈັດກອງປະຊຸມ ກ່ຽວການສົ່ງເສີມຜູ້ທີ່ມີຄວາມສ່ຽງ, ຜູ້ດ້ອຍໂອກາດ ແລະ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນການຝຶກອົບຮົມວິຊາຊີບ, ມີວຽກເຮັດ, ມີອາຊີບ ແລະ ໂອກາດທາງດ້ານເສດຖະກິດ ຈຳນວນ 04 ຄັ້ງ: ໃນວັນທີ 20 ກຸມພາ 2023 ທີ່ແຂວງສະຫວັນນະເຂດ, ໃນວັນທີ 22 ກຸມພາ 2023 ທີ່ແຂວງ ສາລະວັນ, ວັນທີ 23 ກຸມພາ 2023 ທີ່ແຂວງຈຳປາສັກ ແລະ ວັນທີ 15-25 ພຶດສະພາ 2023 ທີ່ແຂວງ ຫຼວງນໍ້າາ ແລະ ແຂວງອຸດົມໄຊ ມີຜູ້ເຂົ້າຮ່ວມ 104 ຄົນ, ຍິງ 38 ຄົນ; ໄດ້ສຳເລັດຈັດກອງປະຊຸມນຳສະເໜີໂຄງການ ແລະ ວາງແຜນກິດຈະກຳປະຈຳປີ 2023 ໂຄງການຫຼຸດຜ່ອນຄວາມສ່ຽງຈາກການຄ້າມະນຸດ ໃຫ້ແກ່ຄະນະກຳມະການຄຸ້ມຄອງການຈັດຕັ້ງປະຕິບັດໂຄງການຂັ້ນເມືອງ ແລະ ອຳນາດການປົກຄອງບ້ານເປົ້າໝາຍ 03 ຄັ້ງ: ວັນທີ 11-12 ມັງກອນ 2023 ທີ່ນະຄອນຫຼວງວຽງຈັນ, ໃນວັນທີ 13 ກຸມພາ 2023 ທີ່ແຂວງ ອຸດົມໄຊ ແລະ ວັນທີ 24 ກຸມພາ

2023 ທີ່ແຂວງ ຫຼວງນໍ້າທາ ມີຜູ້ເຂົ້າຮ່ວມທັງໝົດ 235 ຄົນ, ຍິງ 69 ຄົນ; ໄດ້ສໍາເລັດການລົງຖ່າຍທໍາ ແລະ ປັບປຸງ, ຕັດຕໍ່ ວິດີໂອເລື່ອງສັ້ນກຸ່ມເປົ້າໝາຍທີ່ໄດ້ຮັບການຊ່ວຍເຫຼືອຈາກໂຄງການ ຈໍານວນ 03 ເລື່ອງ ຢູ່ ນະຄອນຫຼວງວຽງຈັນ ແລະ ສະຫວັນນະເຂດ; ໄດ້ສໍາເລັດການຈັດຝຶກອົບຮົມ ກ່ຽວກັບ ການເຄື່ອນຍ້າຍ ແບບປອດໄພ, ສິດ ແລະ ຜົນປະໂຫຍດຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃຫ້ແກ່ຄະນະກໍາມະການ ປົກປ້ອງ ແລະ ຊ່ວຍເຫຼືອເດັກຂັ້ນເມືອງ ແລະ ຂັ້ນບ້ານ ຈໍານວນ 08 ຄັ້ງ ວັນທີ 13-18 ມີນາ 2023 ທີ່ ນະຄອນຫຼວງວຽງຈັນ, ວັນທີ 25-27 ເມສາ 2023 ທີ່ແຂວງ ຈໍາປາສັກ, ວັນທີ 16-18 ພຶດສະພາ 2023 ທີ່ ແຂວງສາລະວັນ, ວັນທີ 18-23 ກັນຍາ 2023 ທີ່ແຂວງຫຼວງນໍ້າທາ ແລະ ວັນທີ 09-14 ຕຸລາ 2023 ທີ່ ແຂວງອຸດົມໄຊ ມີຜູ້ເຂົ້າຮ່ວມ 487 ຄົນ, ຍິງ 162 ຄົນ; ໄດ້ສໍາເລັດມອບທຶນໃຫ້ແກ່ກຸ່ມເປົ້າໝາຍ ຈໍານວນ 02 ຄັ້ງ ວັນທີ 06-07 ເມສາ 2023 ແລະ ວັນທີ 19-26 ມິຖຸນາ 2023 ຜູ້ທີ່ໄດ້ຮັບທຶນທັງໝົດ 129 ຄົນ, ຍິງ 64 ຄົນ ເປັນເງິນທັງໝົດ 1,020,631,770 ກີບ ໃນນີ້ ນະຄອນຫຼວງວຽງຈັນ ຈໍານວນ 27 ຄົນ, ຍິງ 13 ຄົນ ລວມມູນຄ່າທັງໝົດ 172.416.100 ກີບ; ແຂວງສະຫວັນນະເຂດ ຈໍານວນ 52 ຄົນ, ຍິງ 31 ຄົນ ລວມມູນ ຄ່າທັງໝົດ 412.274.910 ກີບ, ແຂວງສາລະວັນ 32 ຄົນ, ຍິງ 18 ຄົນ ລວມມູນຄ່າທັງໝົດ 266.418.020 ກີບ ແລະ ແຂວງຈໍາປາສັກ ຈໍານວນ 18 ຄົນ, ຍິງ 12 ຄົນ ລວມມູນຄ່າ 169,481,740 ກີບ; ໄດ້ມອບ ໃບຢັ້ງຢືນ ໃຫ້ແກ່ຜູ້ທີ່ມີຄວາມສ່ຽງ, ແຮງງານເຄື່ອນຍ້າຍ ແລະ ຜູ້ດ້ອຍໂອກາດ ທີ່ສໍາເລັດການຝຶກອົບຮົມ ວິຊາຊີບ (ຕັດຜົມ, ເສີມສວຍ, ຕັດຫຍິບ, ປຸງແຕ່ງ, ສ້ອມແປງລົດຈັກ ແລະ ສ້ອມແປງລົດໃຫຍ່) ຈໍານວນ 46 ຄົນ ວັນທີ 15 ມິຖຸນາ 2023 ທີ່ນະຄອນຫຼວງວຽງຈັນ; ໄດ້ສໍາເລັດ ລົງປະເມີນກຸ່ມເປົ້າໝາຍ ແລະ ປະ ເມີນຄວາມຕ້ອງການຝຶກວິຊາຊີບຂອງກຸ່ມເປົ້າໝາຍ ເພື່ອສ້າງອາຊີບ, ຝຶກອົບຮົມວິຊາຊີບ ແລະ ມີວຽກເຮັດ ງານທໍາ 02 ຄັ້ງ: ໃນວັນທີ 23 ມີນາ-07 ເມສາ 2022 ທີ່ແຂວງອຸດົມໄຊ ແລະ ວັນທີ 02-13 ເມສາ 2023 ທີ່ແຂວງຫຼວງນໍ້າທາ ຈໍານວນ 367 ຄົນ, ຍິງ 148 ຄົນ. ຜ່ານການປະເມີນຜູ້ທີ່ຖືກເງື່ອນໄຂທີ່ຈະໄດ້ຮັບການ ຊ່ວຍເຫຼືອເຂົ້າຝຶກວິຊາຊີບ ຈໍານວນ 87 ຄົນ, ຍິງ 31 ຄົນ; ໄດ້ສໍາເລັດຝຶກອົບຮົມການກໍານົດຕົວຜູ້ຖືກເຄາະ ຮ້າຍຈາກການຄ້າມະນຸດ ຂັ້ນຕົ້ນ ໃຫ້ແກ່ຄະນະກໍາມະການປົກປ້ອງ ແລະ ຊ່ວຍເຫຼືອເດັກຂັ້ນເມືອງ ແລະ ຂັ້ນ ບ້ານ ຈໍານວນ 04 ຄັ້ງ: ວັນທີ 10-12 ກໍລະກົດ 2023 ຢູ່ ແຂວງ ສະຫັວນນະເຂດ, ວັນທີ 09-11 ສິງຫາ 2023 ຢູ່ ແຂວງ ຈໍາປາສັກ, ວັນທີ 16-18 ສິງຫາ 2023 ຢູ່ ແຂວງ ສາລະວັນ ແລະ ວັນທີ 28-30 ສິງຫາ 2023 ຢູ່ ນະຄອນຫຼວງວຽງຈັນ ມີຜູ້ເຂົ້າຮ່ວມທັງໝົດ 281 ຄົນ, ຍິງ 105 ຄົນ; ໄດ້ນໍາສົ່ງນັກຮຽນເຂົ້າຮຽນ ການສ້ອມແປງລົດໃຫ່ຍ ຈໍານວນ 05 ຄົນ, ຍິງ 0 ຄົນ ຂອງແຂວງ ຫຼວງນໍ້າທາ; ໃຫ້ການຊ່ວຍເຫຼືອກຸ່ມເປົ້າ ໝາຍເຂົ້າຝຶກອົບຮົມວິຊາຊີບ 284 ຄົນ, ຍິງ 163 ຄົນ ໃນນີ້ ຝຶກອົບຮົມວິຊາຊີບເສີມສວຍ 29 ຄົນ ເປັນຍິງ ທັງໝົດ, ຕັດຫຍິບ 71 ຄົນ ເປັນຍິງທັງໝົດ, ສ້ອມແປງລົດຈັກ 63 ຄົນ, ຍິງ 0 ຄົນ, ສ້ອມແປງລົດໃຫຍ່ 05 ຄົນ, ຍິງ 0 ຄົນ, ຕັດຜົມຊາຍ 23 ຄົນ ຍິງ 0 ຄົນ, ປຸງແຕ່ງອາຫານ 22 ຄົນ, ຍິງ 13 ຄົນ, ປູກເຫັດ 20 ຄົນ, ຍິງ 09 ຄົນ, ເຮັດເຂົ້າໜົມລາວ 28 ຄົນ ເປັນຍິງທັງໝົດ, ເຮັດຝຸ່ນຊີວະພາບ 11 ຄົນ, ຍິງ 04 ຄົນ ແລະ ສານ ກະຕ່າ 01 ຄົນ ເປັນຍິງທັງໝົດ; ຮ່ວມມືກັບອົງການບ້ານຈຸດສຸມ (VFI) ຈັດກອງປະຊຸມວາງແຜນກິດຈະກໍາ ປະຈໍາປີ 2023 ໃນວັນທີ 18 ມັງກອນ 2023, ທີ່ ແຂວງຈໍາປາສັກ ມີຜູ້ເຂົ້າຮ່ວມ 63 ຄົນ, ຍິງ 24 ຄົນ; ໄດ້ຈັດ ຝຶກອົບຮົມ ກ່ຽວກັບການນໍາໃຊ້ຖານຂໍ້ມູນແຮງງານເຄື່ອນຍ້າຍໃຫ້ແກ່ຂັ້ນບ້ານ ໃນວັນທີ 07-12 ກຸມພາ 2023 ທີ່ແຂວງຫຼວງພະບາງ ມີຜູ້ເຂົ້າຮ່ວມ 47 ຄົນ, ຍິງ 04 ຄົນ; ໄດ້ຈັດຝຶກອົບຮົມ ກ່ຽວກັບການຄ້າມະນຸດ ແລະ ການເຄື່ອນຍ້າຍທີ່ປອດໄພໃຫ້ແກ່ຄະນະກໍາມະການປົກປ້ອງ ແລະ ຊ່ວຍເຫຼືອເດັກຂັ້ນແຂວງ ແລະ ຂັ້ນ ເມືອງ ໃນວັນທີ 13-14 ມີນາ 2023 ທີ່ແຂວງຫຼວງພະບາງ ມີຜູ້ເຂົ້າຮ່ວມ 35 ຄົນ, ຍິງ 07 ຄົນ; ໄດ້ຈັດຝຶກ ອົບຮົມວຽກງານປ້ອງກັນ ແລະ ຊ່ວຍເຫຼືອຜູ້ທີ່ມີຄວາມສ່ຽງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃຫ້ແກ່ ຄະນະກໍາມະການປົກປ້ອງ ແລະ ຊ່ວຍເຫຼືອເດັກຂັ້ນ, ຂັ້ນເມືອງ 04 ເມືອງ ແລະ ຄະນະຕາໜ່າງປົກປ້ອງເດັກ ຂັ້ນບ້ານ 39 ບ້ານ ຈໍານວນ 04 ຄັ້ງ: ໃນວັນທີ 16-18 ມີນາ 2023 ທີ່ແຂວງ ຫຼວງພະບາງ, ໃນ ວັນທີ 09-16 ສິງຫາ 2023 ແລະ ວັນທີ 11-13 ກັນຍາ 2023 ທີ່ແຂວງ ຈໍາປາສັກ ມີຜູ້ເຂົ້າຮ່ວມທັງໝົດ 269 ຄົນ, ຍິງ 75 ຄົນ; ໄດ້ສໍາເລັດການຈັດຝຶກອົບຮົມການກໍານົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃຫ້ແກ່ ຄະນະກໍາມະການປົກປ້ອງ ແລະ ຊ່ວຍເຫຼືອເດັກຂັ້ນແຂວງ ແລະ ຂັ້ນເມືອງ 03 ຄັ້ງ: ໃນວັນທີ 06-07 ເມສາ

2023 ທີ່ແຂວງຈຳປາສັກ ແລະ ວັນທີ 23-25 ພຶດສະພາ 2023 ແລະ 26-28 ມິຖຸນາ 2023 ທີ່ແຂວງຫຼວງພະບາງ ມີຜູ້ເຂົ້າຮ່ວມທັງໝົດ 108 ຄົນ, ຍິງ 36 ຄົນ; ໄດ້ນຳສົ່ງເດັກ-ແມ່ຍິງຜູ້ດ້ອຍໂອກາດ ຜູ້ທີ່ມີຄວາມສ່ຽງ ທີ່ສຳເລັດການຝຶກອົບຮົມວິຊາຊີບໄລຍະສັ້ນ ຈຳນວນ 24 ຄົນ (ຕັດຫຍິບ 15 ຄົນ, ເສີມສວຍ 04 ຄົນ ແລະ ຮຽນປຸງແຕ່ງ 05 ຄົນ) ກັບຄືນສູ່ຄອບຄົວ ໃນວັນທີ 26 ພຶດສະພາ ຫາ 31 ສິງຫາ2023 ທີ່ແຂວງ ຫຼວງພະບາງ; ໄດ້ສຳເລັດການລົງໂຄສະນາ ວຽກງານການເຄື່ອນຍ້າຍແບບປອດໄພ, ວຽກງານປົກປ້ອງເດັກ ທີ່ຕ້ອງການ ການປົກປ້ອງພິເສດ ແລະ ວຽກງານຕ້ານການຄ້າມະນຸດ ຈຳນວນ 09 ຄັ້ງ: ໄດ້ 30 ບ້ານ, 03 ເມືອງ ທີ່ແຂວງ ຈຳປາສັກ ແລະ ໄດ້ 30 ບ້ານ, 03 ເມືອງ ທີ່ແຂວງຫຼວງພະບາງ ມີຜູ້ເຂົ້າຮ່ວມທັງໝົດ 2,430 ຄົນ, ຍິງ 1,198 ຄົນ; ໃນວັນທີ 27 ພຶດສະພາ 2023 ໄດ້ຮັບເອົາເດັກ-ໄວໜຸ່ມກຸ່ມເປົ້າໝາຍ ຈຳນວນ 09 ຄົນ ເປັນຍິງທັງໝົດ ເຂົ້າຝຶກອົບຮົມວິຊາຊີບ ປະກອບມີ ເສີມສວຍ 02 ຄົນ, ປຸງແຕ່ງ 05 ຄົນ, ຕັດຫຍິບ 02 ຄົນ (ປະຈຸບັນກຳລັງຝຶກ); ໄດ້ຈັດກອງປະຊຸມສະຫຼຸບການຈັດຕັ້ງປະຕິບັດ 06 ເດືອນຕົ້ນປີ ແລະ ວາງທິດທາງແຜນການ 06 ເດືອນທ້າຍປີ 2023 ຂອງໂຄງການປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແລະ ຜູ້ຕົກຢູ່ໃນຄວາມສ່ຽງທີ່ຈະຖືກຄ້າມະນຸດ 02 ຄັ້ງ: ວັນທີ 29 ມິຖຸນາ 2023 ຢູ່ແຂວງ ຫຼວງພະບາງ ແລະ ວັນທີ 08 ສິງຫາ 2023 ທີ່ແຂວງ ຈຳປາສັກ ມີຜູ້ເຂົ້າຮ່ວມ 54 ຄົນ, ຍິງ 18 ຄົນ; ຮ່ວມມືກັບສະມາຄົມແສງສະຫວ່າງ ໃຫ້ການຊ່ວຍເຫຼືອເບິ່ງແຍງລ້ຽງດູເດັກ ແລະ ແມ່ຍິງຜູ້ດ້ອຍໂອກາດ 73 ຄົນ ເປັນຍິງທັງໝົດ ໃນນີ້ຝຶກອົບຮົມວິຊາຊີບເສີມສວຍ 27 ຄົນເປັນຍິງທັງໝົດ, ຕັດຫຍິບ 53 ຄົນເປັນຍິງທັງໝົດ, ຕໍ່າຫູກ 01 ຄົນເປັນຍິງທັງໝົດ; ສົ່ງເສີມຮຽນລະບົບສາມັນພັກຢູ່ໃນສູນ 29 ຄົນເປັນຍິງທັງໝົດ, ສົ່ງເສີມຮຽນມະຫາວິທະຍາໄລພັກຢູ່ໃນສູນ 02 ຄົນເປັນຍິງທັງໝົດ; ຝຶກອົບຮົມສ້ອມແປງລົດຈັກຢູ່ໃນຊຸມຊົນ 13 ຄົນ, ຍິງ 0 ຄົນ; ປະກອບທຶນຕັດຫຍິບ 08 ຄົນເປັນຍິງທັງໝົດ, ປະກອບທຶນເສີມສວຍ 03 ຄົນເປັນຍິງທັງໝົດ, ປະກອບທຶນສ້ອມແປງລົດຈັກ 18 ຄົນ, ຍິງ 0 ຄົນ; ໃຫ້ການຊ່ວຍເຫຼືອສົ່ງກັບຄືນບ້ານ 11 ຄົນ ເປັນຍິງທັງໝົດ. ປະຈຸບັນໃຫ້ການຊ່ວຍເຫຼືອເບິ່ງແຍງລ້ຽງດູເດັກ ແລະ ແມ່ຍິງຜູ້ດ້ອຍໂອກາດ ຢູ່ໃນສູນ 31 ຄົນ ເປັນຍິງທັງໝົດ; ຮ່ວມມືກັບອົງການແຮງງານສາກົນ (ILO) ໄດ້ຈັດກອງປະຊຸມຮັບຮອງປຶ້ມຄູ່ມືປະຕິບັດງານສຳລັບສາມ ກະຊວງ ກ່ຽວກັບການຄຸ້ມຄອງແຮງງານເຄື່ອນຍ້າຍ (ກະຊວງ ຮສສ, ກະຊວງ ປກສ ແລະ ກະຊວງການຕ່າງປະເທດ) ໃນວັນທີ 30 ມັງກອນ 2023 ທີ່ນະຄອນຫຼວງວຽງຈັນ ມີຜູ້ເຂົ້າຮ່ວມ 34 ຄົນ, ຍິງ 13 ຄົນ; ຈັດກອງປະຊຸມຄະນະກຳມະການຊີ້ນຳໂຄງການເຄື່ອນຍ້າຍແຮງງານແບບປອດໄພ ແລະ ຍຸຕິທຳ ຄວາມເຂົ້າໃຈດ້ານສິດທິ ແລະ ກາລະໂອກາດຂອງແຮງງານເຄື່ອນຍ້າຍເພດຍິງໃນພາກພື້ນອາຊຽນ (Safe and Fair Programme) ໃນວັນທີ 15 ມີນາ 2023 ທີ່ນະຄອນຫຼວງວຽງຈັນ ມີຜູ້ເຂົ້າຮ່ວມ 43 ຄົນ, ຍິງ 20 ຄົນ; ໄດ້ຈັດກອງປະຊຸມການສ້າງຄວາມເຂັ້ມແຂງດ້ານນິຕິກຳຂອງ ສປປ ລາວ ໃນການຈ້າງງານແຮງງານເຄື່ອນຍ້າຍ ຂະແໜງປະມົງ ແລະ ປຸງແຕ່ງອາຫານທະເລ ພາຍໃຕ້ໂຄງການຮັບປະກັນສິດທິຂອງແຮງງານເພື່ອສົ່ງເສີມການເຄື່ອນຍ້າຍແຮງງານທີ່ປອດໄພ ໃນຂອບເຂດອາຊີຕາເວັນອອກສຽງໃຕ້ (Ship to Shore Rights South East Asia Programme) ໃນວັນທີ 31 ມີນາ 2023 ທີ່ນະຄອນຫຼວງວຽງຈັນ ມີຜູ້ເຂົ້າຮ່ວມ 45 ຄົນ, ຍິງ 16 ຄົນ; ໄດ້ການຈັດພິມ ແລະ ຈັດສົ່ງແຜ່ນພັບການໄປເຮັດວຽກຢູ່ຕ່າງປະເທດແບບບໍ່ຖືກຕ້ອງ ໃນຂະແໜງການປະມົງ ແລະ ປຸງແຕ່ງອາຫານທະເລ ຈຳນວນ 20,000 ສະບັບ ເພື່ອມອບໃຫ້ແກ່ສູນຂໍ້ມູນຂ່າວສານສຳລັບແຮງງານເຄື່ອນຍ້າຍ (MRCs) 06 ແຂວງ: ບໍ່ແກ້ວ, ໄຊຍະບູລີ, ຫລວງພະບາງ, ບໍລິຄຳໄຊ, ສະຫວັນນະເຂດ ແລະ ຈຳປາສັກ ແລະ ຈຸດບໍລິການຈັດຫາງານ 18 ແຂວງ ພາຍໃຕ້ໂຄງການຮັບປະກັນສິດທິຂອງແຮງງານ ເພື່ອສົ່ງເສີມການເຄື່ອນຍ້າຍແຮງງານທີ່ປອດໄພ ໃນຂອບເຂດອາຊີຕາເວັນອອກສຽງໃຕ້ (Ship to Shore Rights South East Asia Programme); ໄດ້ຈັດກອງປະຊຸມຄະນະກຳມະການຊີ້ນຳໂຄງການ ຮ່ວມມືສາມຝ່າຍໃນອາຊຽນ (TRIANGLE in ASEAN) ໃນວັນທີ 30 ສິງຫາ 2023 ທີ່ ໂຮງແຮມ ລາວພລາຊາ ມີຜູ້ເຂົ້າຮ່ວມ 34 ຄົນ, ຍິງ 09 ຄົນ; ສຳເລັດກອງປະຊຸມເຄືອຄ່າຍແຮງງານເຄື່ອນຍ້າຍ ໃນວັນທີ 01 ກັນຍາ 2023 ທີ່ ໂຮງແຮມ ລາວພລາຊາ, ມີຜູ້ເຂົ້າຮ່ວມ 47 ຄົນ, ຍິງ 20 ຄົນ; ໄດ້ຈັດກອງປະຊຸມຄົ້ນຄວ້າການແປຄວາມໝາຍຄຳສັບການເຄື່ອນຍ້າຍແຮງງານເພດຍິງ ແລະ ການຍຸດຕິການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ (ຄັ້ງທີ 02) ໃນວັນທີ 07-08 ກັນຍາ 2023 ແລະ ວັນທີ 6 ຕຸລາ 2023 ທີ່

ໂຮງແຮມ ລາວພລາຊາ 55 ຄົນ, ຍິງ 27 ຄົນ; ຮ່ວມກັບອົງການຈັດຕັ້ງສາກົນ ເພື່ອການເຄື່ອນຍ້າຍຖິ່ນຖານ (IOM) ໄດ້ຈັດກອງປະຊຸມທົບທວນການສຶກສາກ່ຽວກັບການປັບປຸງການບໍລິການສໍາລັບແຮງງານເຄື່ອນຍ້າຍ ທີ່ເດີນທາງກັບຄືນປະເທດຂອງ ປະເທດ ກໍາປູເຈຍ ໃນວັນທີ 21 ມິຖຸນາ 2023 ທີ່ ໂຮງແຮມ ຄລາວພລາຊາ, ມີຜູ້ເຂົ້າຮ່ວມ 12 ຄົນ, ຍິງ 05 ຄົນ; ໄດ້ຈັດກອງປະຊຸມຄະນະກໍາມະການຊີ້ນໍາໂຄງການຫລຸດຜ່ອນຄວາມທຸກຍາກ ໂດຍຜ່ານການເຄື່ອນຍ້າຍທີ່ປອດໄພ, ການພັດທະນາສີມືແຮງງານ ແລະ ການບັນຈຸວຽກເຮັດງານທໍາໃນ ສປປ ລາວ ໄລຍະທີ 02 ໃນວັນທີ 23 ສິງຫາ 2023 ທີ່ ໂຮງແຮມ ລາວພລາຊາ ມີຜູ້ເຂົ້າຮ່ວມ 28 ຄົນ, ຍິງ 11 ຄົນ;

- **ສູນກາງສະຫະພັນແມ່ຍິງລາວ** ຮ່ວມມືກັບມູນິທິເອເຊຍ ຈັດກອງກອງປະຊຸມປຶກສາຫາລືກະກຽມ ແລະ ກອງປະຊຸມປະເມີນການຈັດຕັ້ງປະຕິບັດໂຄງການສ້າງຄວາມເຂັ້ມແຂງໃຫ້ເຄືອຂ່າຍຕ້ານການຄ້າມະນຸດລະດັບຊາດ ແລະ ການເຂົ້າເຖິງຂະບວນຍຸຕິທໍາ ໃນວັນທີ 26 ມັງກອນ ຫາ 01 ກຸມພາ 2023 ທີ່ ແຂວງສະຫວັນນະເຂດ ມີຜູ້ເຂົ້າຮ່ວມ 73 ຄົນ, ຍິງ 44 ຄົນ; ໄດ້ຈັດກອງປະຊຸມເຜີຍແຜ່ວຽກງານຕ້ານການຄ້າມະນຸດຄະນະນໍາ, ສະມາຊິກກອງເລຂາຄະນະກໍາມະການຕ້ານການຄ້າມະນຸດ ຂັ້ນແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ 07 ແຂວງໃນວັນທີ 31 ກໍລະກົດ 2023 ທີ່ແຂວງຫຼວງນໍ້າທາ ມີຜູ້ເຂົ້າຮ່ວມ 92 ຄົນ, ຍິງ 51 ຄົນ; ໄດ້ຈັດພິທີລະນຶກວັນສາກົນຕ້ານການຄ້າມະນຸດ ປະຈໍາປີ 2023 ໃນວັນທີ 02 ສິງຫາ 2023 ທີ່ວິທະຍາໄລດົງຄໍາຊ້າງ ມີຜູ້ເຂົ້າຮ່ວມ 819 ຄົນ, ຍິງ 670 ຄົນ; ຮ່ວມມືກັບແຜນງານອາຊຽນ-ອົດສະຕຣາລີ ເພື່ອຕ້ານການຄ້າມະນຸດ ຈັດກອງປະຊຸມແລກປ່ຽນວຽກງານປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຮ່ວມກັບຂະແໜງ ຍຸຕິທໍາຂອງແຂວງຄໍາມ່ວນ, ແຂວງສະຫວັນນະເຂດ, ແຂວງຈໍາປາສັກ ໃນວັນທີ 18-19 ກຸມພາ 2023 ທີ່ ນະຄອນຫຼວງວຽງຈັນ ຜູ້ເຂົ້າຮ່ວມ 52 ຄົນ, ຍິງ 29 ຄົນ; ໄດ້ຈັດກອງປະຊຸມແລກປ່ຽນເຕັກນິກການບໍລິການສະເພາະກໍລະນີ ແລະ ກໍລະນີບໍາບັດແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນວັນທີ 03-05 ພຶດສະພາ 2023 ທີ່ ໂຮງແຮມລາວເທວ ມີຜູ້ເຂົ້າຮ່ວມ 21 ຄົນຍິງທັງໝົດ ແລະ ໄດ້ຈັດຝຶກອົບຮົມຈິດຕະສັງຄົມໃຫ້ແກ່ນັກສັງຄົມສົງເຄາະ, ຜູ້ດູແລ ແລະ ຜູ້ໃຫ້ບໍລິການໃຫ້ການຊ່ວຍເຫຼືອ ແລະ ປົກປ້ອງຜູ້ທີ່ມີຄວາມສ່ຽງ ແລະ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈໍານວນ 02 ຄັ້ງ: ວັນທີ 15-19 ພຶດສະພາ 2023 ແລະ ວັນທີ 19-23 ມິຖຸນາ 2023 ທີ່ ໂຮງແຮມລາວພຣາຊ່າ ຜູ້ເຂົ້າຮ່ວມ 100 ຄົນ, ຍິງ 80 ຄົນ; ໄດ້ຈັດຝຶກອົບຮົມການປົກປ້ອງ, ຊ່ວຍເຫຼືອ ແລະ ສົ່ງຕໍ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃຫ້ແກ່ສະຫະພັນແມ່ຍິງແຂວງ, ເມືອງ ແລະ ພາກສ່ວນກ່ຽວຂ້ອງ ໃນວັນທີ 25-28 ກໍລະກົດ 2023 ທີ່ແຂວງບໍ່ແກ້ວ ມີຜູ້ເຂົ້າຮ່ວມ 40 ຄົນ, ຍິງ 27 ຄົນ; ຮ່ວມມືກັບອົງການຈັດຕັ້ງສາກົນເພື່ອການເຄື່ອນຍ້າຍຖິ່ນຖານ (IOM) ຈັດກອງປະຊຸມປຶກສາຫາລືໃນການຊ່ວຍເຫຼືອຜູ້ຖືກເຄາະຮ້າຍກັບຄືນປະເທດ ວັນທີ 09-14 ກຸມພາ 2023 ການຊ່ວຍເຫຼືອຄືນສັນຊາດມາເລເຊຍ, ວັນທີ 17 ພຶດສະພາ 2023 ການຊ່ວຍເຫຼືອຄືນປະເທດອູການດາ ແລະ ຈັດກອງປະຊຸມແກ້ໄຂກໍລະນີຂອງຜູ້ມາຂໍຄໍາປຶກສາ ແລະ ຜູ້ຖືກເຄາະຮ້າຍ ໃນວັນທີ 07 ຕຸລາ 2023 ທີ່ ນະຄອນຫຼວງວຽງຈັນ ມີຜູ້ເຂົ້າຮ່ວມ 16 ຄົນ, ຍິງ 10 ຄົນ; ຮ່ວມມືກັບອົງການວິນຣ໋ອກສາກົນ (Winrock International) ຈັດກອງປະຊຸມເຜີຍແຜ່ການປົກປ້ອງ, ການຊ່ວຍເຫຼືອ ແລະ ການສົ່ງຕໍ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃຫ້ແກ່ພະນັກງານສູນກາງສະຫະພັນແມ່ຍິງລາວ ວັນທີ 11 ສິງຫາ 2023 ທີ່ນະຄອນຫຼວງວຽງຈັນ ມີຜູ້ເຂົ້າຮ່ວມ 220 ຄົນ, ຍິງ 198 ຄົນ;
- **ຂະແໜງການ ການຕ່າງປະເທດ** ໄດ້ຕ້ອນຮັບການເຂົ້າພົບປະຂອງອົງການ IOM ແລະ UNRCO ເພື່ອປຶກສາຫາລືກ່ຽວກັບວຽກງານຕ້ານການຄ້າມະນຸດຢູ່ ສປປ ລາວ ໃນວັນທີ 31 ມີນາ 2023 ທີ່ນະຄອນຫຼວງວຽງຈັນ; ໄດ້ສໍາເລັດການຈັດກອງປະຊຸມໜ່ວຍງານວິຊາການຕ້ານການຄ້າມະນຸດ ຄັ້ງທີ 01 ປີ 2023 ໃນວັນທີ 12 ພຶດສະພາ 2023 ທີ່ ໂຮງແຮມດອນຈັນພາເລດ ແລະ ຄັ້ງທີ 02 ວັນທີ 10 ພະຈິກ 2023 ທີ່ໂຮງແຮມເໜືອງແທງ ມີຜູ້ເຂົ້າຮ່ວມ 100 ຄົນ, ຍິງ 43 ຄົນ;
- **ຂະແໜງການຍຸຕິທໍາ** ຮ່ວມກັບມູນິທິເອເຊຍ ສໍາເລັດການຝຶກອົບຮົມວຽກງານຊ່ວຍເຫຼືອທາງດ້ານກົດໝາຍລົງເລິກທາງດ້ານເຕັກນິກການໃຫ້ບໍລິການ, ການຂຶ້ນແຜນ ແລະ ການສະຫຼຸບວຽກງານທາງດ້ານການເງິນ

08 ແຂວງ ໃນວັນທີ 06-09 ມິຖຸນາ 2023 ຢູ່ແຂວງວຽງຈັນ, ວັນທີ 27-30 ມິຖຸນາ 2023 ທີ່ແຂວງບໍລິຄໍາໄຊ, ວັນທີ 10-13 ກໍລະກົດ 2023 ທີ່ແຂວງບໍ່ແກ້ວ ແລະ ແຂວງ ຫຼວງນໍ້າທາ, ວັນທີ 27-30 ມິຖຸນາ 2023 ທີ່ແຂວງຫຼວງພະບາງ, ວັນທີ 22-25 ສິງຫາ 2023 ທີ່ແຂວງຈໍາປາສັກ, ວັນທີ 28 ສິງຫາ ຫາ 01 ກັນຍາ 2023 ທີ່ແຂວງອຸດົມໄຊ, ວັນທີ 28 ສິງຫາ ຫາ 01 ກັນຍາ 2023 ແຂວງສະຫວັນນະເຂດ ມີຜູ້ເຂົ້າຮ່ວມທັງໝົດ 392 ຄົນ ຍິງ 171; ສໍາເລັດການສ້າງວີດີໂອສັ້ນ ກ່ຽວກັບ ການຊ່ວຍເຫຼືອທາງດ້ານກົດໝາຍ ມີຢູ່ 03 ຫົວຂໍ້ຄື: ການລະເມີດກົດຈະລາຈອນພາໃຫ້ເກີດອຸບັດຕິເຫດ, ການຂູດຮີດແຮງງານ, ການຢ່າຮ້າງຈາກສາຍຜົວພັນຜົວ-ເມຍ ແລະ ໄດ້ສ້າງແຜ່ນຂໍ້ມູນທາງດ້ານກົດໝາຍ ເລື່ອງການຢ່າຮ້າງ ທັງໄດ້ຈັດພິມຈໍານວນ 10,000 ເຫຼັ້ມ ໄດ້ຈັດພິມປຶ້ມຄໍາລັດການຊ່ວຍເຫຼືອທາງດ້ານກົດໝາຍ ຈໍານວນ 5,000 ຫົວ; ສໍາເລັດການລົງຢ້ຽມຢາມຫ້ອງການຊ່ວຍເຫຼືອທາງດ້ານກົດໝາຍ ທີ່ແຂວງວຽງຈັນ, ບໍລິຄໍາໄຊ ແລະ ຄໍາມ່ວນ;

- **ຂະແໜງການຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ** ໄດ້ຮ່ວມກັບອົງການວິນຣອກສາກົນ (Winrock international) ໃນການເປີດໂຕສື່ສິ່ງພິມໃນການປ້ອງກັນການຕ້ານການຄ້າມະນຸດ ໃຫ້ຂະ ແໜງການທ່ອງທ່ຽວ ວັນທີ 03 ມີນາ 2023 ທີ່ໂຮງແຮມດອນຈັນພາເລດ ມີຜູ້ເຂົ້າຮ່ວມ 113 ຄົນ, ຍິງ 76 ຄົນ, ໄດ້ສໍາເລັດການແຈກຢາຍສື່ສິ່ງພິມ ການຕ້ານການຄ້າມະນຸດ ວັນທີ 06 ມີນາ 2023 ຢູ່ 03 ແຂວງພາກໃຕ້ (ສະຫວັນນະເຂດ, ສາລະວັນ ແລະ ຈໍາປາສັກ) ທີ່ແຂວງຈໍາປາສັກ ວັນທີ 13-17 ມີນາ 2023 ມີຜູ້ເຂົ້າຮ່ວມ 57 ຄົນ, ຍິງ 13 ຄົນ; ໄດ້ສໍາເລັດການຝຶກອົບຮົມ ໃຫ້ນັກຂ່າວ, ຜູ້ປະກອບການສະຖານທີ່ທ່ອງທ່ຽວ, ໂຮງແຮມ, ເຮືອນພັກ ແລະ ແຈກຢາຍສື່ສິ່ງພິມວຽກງານຕ້ານການຄ້າມະນຸດ ໃນວັນທີ 13-17 ມີນາ 2023 ແລະ ວັນທີ 13-17 ກໍລະກົດ 2023 ທີ່ແຂວງອຸດົມໄຊ ແລະ ຫຼວງນໍ້າທາ ມີຜູ້ເຂົ້າຮ່ວມທັງໝົດ 286 ຄົນ, ຍິງ 105 ຄົນ; ຮ່ວມກັບມູນນິທິເອເຊຍ ໄດ້ສໍາເລັດການລົງເກັບກໍາຂໍ້ມູນເພື່ອສ້າງສາລະຄະດີການຕ້ານການຄ້າມະນຸດ ໃນວັນທີ 21-27 ກໍລະກົດ 2023 ທີ່ແຂວງຈໍາປາສັກ ແລະ ສະຫວັນນະເຂດ; ໄດ້ສໍາເລັດການຜ່ານເນື້ອໃນການສ້າງສາລະຕະດີ ແລະ ຮັບຮອງເອົາສາລະຄະດີ ກ່ຽວກັບວຽກງານຕ້ານການຄ້າມະນຸດ; ລົງເກັບກໍາຂໍ້ມູນ ເພື່ອສ້າງສາລະຄະດີ ກ່ຽວກັບວຽກງານຕ້ານການຄ້າມະນຸດ ຢູ່ສູນບ້ານຈຸດສຸມສາກົນ VFI ແຂວງຈໍາປາສັກ, ມູນນິທິແສງສະຫວ່າງ ແຂວງສະຫວັນນະເຂດ, ສູນປົກປ້ອງ ແລະ ໃຫ້ຄໍາປຶກສາແມ່ຍິງ-ເດັກນ້ອຍ ແລະ ຫ້ອງການກອງເລຂາຕ້ານການຄ້າມະນຸດລະດັບຊາດ ໃນລະຫວ່າງວັນທີ 21-27 ສິງຫາ 2023; ສໍາເລັດການສ້າງສາລະຄະດີ ກ່ຽວກັບວຽກງານຕ້ານການຄ້າມະນຸດ ໂດຍມີຊື່ເລື່ອງ: ຊີວິດໃໝ່ຂອງຕານ້ອຍ ມີຄວາມຍາວ 05 ນາທີ;
- **ຂະແໜງການສຶກສາທິການ ແລະ ກິລາ** ໄດ້ຮັບການສະໜັບສະໜູນຈາກອົງການວິນຣ໋ອກສາກົນ ຈັດກອງປະຊຸມສ້າງຄວາມເຂັ້ມແຂງ ໃຫ້ແກ່ຜູ້ບໍລິຫານການສຶກສາຂັ້ນແຂວງ, ຂັ້ນເມືອງ ແລະ ສະຖານການສຶກສາ ກ່ຽວກັບການແຊກຊ້ອນເອົາວຽກງານຕ້ານການຄ້າມະນຸດ ເຂົ້າໃນຫຼັກສູດການຮຽນ-ການສອນ ຊັ້ນມັດທະຍົມສຶກສາ ຈໍານວນ 06 ຄັ້ງ: ວັນທີ 23-24 ມີນາ 2023 ທີ່ແຂວງສາລະວັນ, ວັນທີ 24-25 ກໍລະກົດ 2023 ທີ່ແຂວງສະຫວັນນະເຂດ, ວັນທີ 27-28 ກໍລະກົດ 2023 ທີ່ແຂວງຈໍາປາສັກ, ວັນທີ 21-25 ສິງຫາ 2023 ທີ່ນະຄອນຫຼວງວຽງຈັນ ແລະ ວັນທີ 20-21 ພະຈິກ 2023 ທີ່ແຂວງ ອຸດົມໄຊ ມີຜູ້ເຂົ້າຮ່ວມທັງໝົດ 641 ຄົນ, ຍິງ 271 ຄົນ, ໄດ້ຈັດພິທີລະນຶກວັນສາກົນເພື່ອຕ້ານການຄ້າມະນຸດ ປະຈໍາປີ 2023 ໃນວັນທີ 02 ສິງຫາ 2023 ທີ່ນະຄອນຫຼວງວຽງຈັນ ມີຜູ້ເຂົ້າຮ່ວມ 519 ຄົນ, ຍິງ 370 ຄົນ;
- **ສູນກາງສະຫະພັນກໍາມະບານລາວ** ຮ່ວມກັບອົງການມູນລະນິທິພິທັກສັດຕິແຫ່ງປະເທດໄທ (AAT) ໄດ້ຈັດກອງປະຊຸມປະຈໍາປີ 2023 ສະຫຼຸບຖອດຖອນບົດຮຽນ ແລະ ວາງແຜນໃນການຈັດຕັ້ງປະຕິບັດວຽກງານສະກັດກັ້ນ ແລະ ຕ້ານການຄ້າມະນຸດ ໃນຕົ້ນເດືອນກັນຍາ 2023;
- **ອົງການໄອຍະການປະຊາຊົນສູງສຸດ** ຮ່ວມມືກັບແຜນງານອາຊຽນ-ອົດສະຕາລີ ຈັດກອງປະຊຸມຝຶກອົບຮົມວຽກງານການດໍາເນີນຄະດີ ໂດຍຖືເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ໃນວັນທີ 05-07 ກັນຍາ 2023 ທີ່ແຂວງຫຼວງພະບາງ ມີຜູ້ເຂົ້າຮ່ວມ 37 ຄົນ, ຍິງ 14 ຄົນ; ຮ່ວມມືກັບອົງການ IOM ຈັດກອງປະຊຸມທາບທາມປຶ້ມຄູ່ມື ວ່າດ້ວຍການສໍາພາດ ແລະ ການເອົາຄໍາໃຫ້ການ ຜູ້ຮ່ວມຄະດີຄ້າມະນຸດ ເປັນຕົ້ນຜູ້ຖືກເຄາະ

ຮ້າຍ, ພະຍານ ແລະ ການຕິດຕາມກວດກາຂອງອົງການໄອຍະການປະຊາຊົນໃຫ້ບັນດາອົງການໄອຍະການປະຊາຊົນແຂວງ ພາກເໜືອ, ພາກກາງ ແລະ ພາກໃຕ້ ໃນວັນທີ 20 ມິຖຸນາ 2023;

- **ສານປະຊາຊົນສູງສຸດ** ໄດ້ຮ່ວມກັບແຜນງານອາຊຽນ-ອົດສະຕຣາລີ ເພື່ອຕ້ານການຄ້າມະນຸດ (ASEAN-ACT) ໄດ້ສຳເລັດການສ້າງປຶ້ມຄູ່ມືດຳເນີນຄະດີຄ້າມະນຸດຢູ່ສານທີ່ຄຳນຶງເຖິງຜູ້ຖືກເຄາະຮ້າຍໂດຍສະເພາະ 08 ຕົວຊີ້ວັດທີ່ກຳນົດໃນປຶ້ມຄູ່ມືຂອງອາຊຽນ ແລະ ໄດ້ຈັດພິທີປະກາດນຳໃຊ້ປຶ້ມຄູ່ມືຢ່າງເປັນທາງການໃນວັນທີ 18 ກັນຍາ 2023; ໄດ້ຈັດຝຶກອົບຮົມຄູຝຶກໃຫ້ແກ່ຜູ້ພິພາກສາ ໃນວັນທີ 19-22 ກັນຍາ 2023 ມີຜູ້ເຂົ້າຮ່ວມ 15 ຄົນ ແລະ ໄດ້ຈັດຝຶກອົບຮົມເຜີຍແຜ່ການນຳໃຊ້ປຶ້ມຄູ່ມືໃຫ້ແກ່ຜູ້ພິພາກສາ 03 ພາກຄື: ພາກເໜືອ ວັນທີ 01-03 ພະຈິກ 2023 ທີ່ແຂວງຫຼວງພະບາງ, ພາກໃຕ້ ວັນທີ 22-24 ພະຈິກ 2023 ທີ່ແຂວງຈຳປາສັກ ແລະ ພາກກາງ ວັນທີ 06-08 ທັນວາ 2023 ທີ່ແຂວງວຽງຈັນ ມີຜູ້ເຂົ້າຮ່ວມທັງໝົດ 116 ຄົນ;
- **ຄະນະກຳມະການຕ້ານການຄ້າມະນຸດ ແຂວງ ແລະ ນະຄອນຫຼວງວຽງຈັນ ໄດ້ຈັດກິດຈະກຳຮ່ວມກັບອົງການຈັດຕັ້ງສາກົນ ໃນການເຮັດວຽກງານຕ້ານການຄ້າມະນຸດ ຄື:**
- ໄດ້ຮ່ວມກັບອົງການຈັດຕັ້ງສາກົນ Friends International ຈັດກິດຈະກຳໂຄງການ ເດັກ-ໄວໜຸ່ມ ອາຍຸ 08-24 ປີ ປະຈຳເດືອນ ລວມທັງໝົດ 1,058 ຄົນ, ຍິງ 540 ຄົນ; ຮ່ວມກັບອົງການວິນຣ໋ອກສາກົນ ຈັດຝຶກອົບຮົມວິຊາຊີບໃຫ້ກຸ່ມເປົ້າໝາຍທີ່ໄດ້ຮັບທຶນ ຈຳນວນ 35 ຄົນ, ມີ 04 ສາຂາ ຄື: ເສີມສວຍ, ຕັດຫຍິບ, ຕັດຜົມ ແລະ ສ້ອມແປງ; ຮ່ວມກັບມູນນິທິພິທັກສະຕີໄທ ລົງໂຄສະນາການຕ້ານການຄ້າມະນຸດ ຢູ່ບັນດາເມືອງ ແລະ ບ້ານ ມີຜູ້ເຂົ້າຮ່ວມ 72 ຄົນ, ຍິງ 38 ຄົນ; ຮ່ວມກັບໂຄງການ OXFAM ໄດ້ຈັດຝຶກອົບຮົມໃຫ້ແກ່ໄວໜຸ່ມທີ່ເປັນຕົວແທນມາຈາກ 04 ເມືອງ 02 ຄັ້ງ ມີຜູ້ເຂົ້າຮ່ວມ 264 ຄົນ; ໄດ້ຮັບງົບປະມານໃນການລົງໂຄສະນາ ໃຫ້ຄວາມຮູ້ປະຊາຊົນ, ເພື່ອສົ່ງເສີມການເດີນທາງທີ່ປອດໄພຂອງໂຄງການແມ່ຍິງ ແລະ ເດັກນ້ອຍ ຈາກການຄ້າມະນຸດ ໃຫ້ 04 ບ້ານ, 04 ເມືອງເປົ້າໝາຍ ຈາກມູນນິທິພິທັກສະຕີ ແລະ ເດັກນ້ອຍຈາກການຄ້າມະນຸດ (AAT) ຈຳນວນ 26,580,000 ກີບ; ໄດ້ຮ່ວມກັບອົງການວິນຣ໋ອກສາກົນ ຊ່ວຍເຫຼືອເດັກຜູ້ຖືກເຄາະຮ້າຍ, ຜູ້ທີ່ມີຄວາມສ່ຽງ ແລະ ເດັກຜູ້ດ້ອຍໂອກາດ ຈຳນວນ 116 ຄົນ, ຍິງ 101 ຄົນ, ໃນນັ້ນຊ່ວຍເຫຼືອທຶນການສຶກສາຮຽນຢູ່ສາມັນ ແລະ ວິທະຍາໄລ 41 ຄົນ, ຊ່ວຍເຂົ້າຝຶກວິຊາຊີບໄລຍະສັ້ນສາຂາວິຊາຕັດຫຍິບ, ເສີມຄວາມງາມ, ສ້ອມແປງລົດຈັກ ແລະ ຕ່ຳຫູກ ລວມທັງໝົດ 75 ຄົນ, ຍິງ 60 ຄົນ; ໄດ້ຈັດຝຶກອົບຮົມຄວາມຮູ້ພື້ນຖານກ່ຽວກັບແຮງງານລາວ, ການປະຕິບັດເຈລະຈາ, ຕໍ່ລອງສິດຜົນປະໂຫຍດຂອງຜູ້ອອກແຮງງານໃຫ້ແກ່ 15 ຫົວໜ່ວຍບໍລິສັດທີ່ເປັນຄູ່ຮ່ວມງານໃນການປົກປ້ອງ ແລະ ຊ່ວຍເຫຼືອຜູ້ທີ່ມີຄວາມສ່ຽງຈາກການຄ້າມະນຸດ 01 ຄັ້ງ ມີຜູ້ເຂົ້າຮ່ວມ 38 ຄົນ, ຍິງ 16 ຄົນ; ມອບການທຶນຊ່ວຍເຫຼືອອຸປະກອນໃຫ້ແກ່ຜູ້ທີ່ມີຄວາມສ່ຽງ ແລະ ຜູ້ດ້ອຍໂອກາດ ທີ່ສຳເລັດຝຶກອົບຮົມວິຊາຊີບຕັດຫຍິບ, ເສີມຄວາມງາມ, ປຸງແຕ່ງອາຫານ, ໄຟຟ້າໃນອາຄານ, ສ້ອມແປງລົດຈັກ-ລົດໃຫຍ່ ແລະ ຊ່າງຕັດຜົມຈຳນວນ 59 ຄົນ, ຍິງ 26 ຄົນ; ໄດ້ຮ່ວມກັບບ້ານແສງສະຫວ່າງ ໃນການຊ່ວຍເຫຼືອເດັກທີ່ດ້ອຍໂອກາດ, ເດັກທີ່ຢູ່ໃນກຸ່ມສ່ຽງຈາກການຄ້າມະນຸດ ໃນການຊອກວຽກເຮັດງານທຳ, ຝຶກອົບຮົມວິຊາຊີບ ແລະ ຊ່ວຍໃຫ້ທຶນການສຶກສາເຂົ້າຮຽນໃນໂຮງຮຽນສາມັນ ແລະ ວິຊາຊີບ ໄດ້ ຈຳນວນ 124 ຄົນ, ຍິງ 109 ຄົນ ແລະ ໄດ້ເຜີຍແຜ່ຄວາມຮູ້ເບື້ອງຕົ້ນທາງດ້ານກົດໝາຍ ແລະ ນິຕິກຳຕ່າງໆກ່ຽວກັບການຕ້ານການຄ້າມະນຸດ ໃຫ້ແກ່ເດັກ ແລະ ໄວໜຸ່ມ ຈຳນວນ 11 ຄັ້ງ ມີຜູ້ເຂົ້າຮ່ວມ 156 ຄົນ, ຍິງ 156 ຄົນ; ມອບການທຶນຊ່ວຍເຫຼືອອຸປະກອນໃຫ້ແກ່ກຸ່ມສ່ຽງ ແລະ ຜູ້ດ້ອຍໂອກາດ ທີ່ຮຽນໜັງສືຢູ່ສາຍສາມັນ ແລະ ວິທະຍາໄລ ຈຳນວນ 41 ຄົນ, ຍິງ 41 ຄົນ; ຮ່ວມມືກັບອົງການບ້ານຈຸດສຸມສາກົນ (VFI) ລົງເຄື່ອນໄຫວເຜີຍແຜ່ຂໍ້ມູນການເຄື່ອນຍ້າຍແຮງງານທີ່ປອດໄພ ແລະ ໄພອັນຕະລາຍຂອງການຄ້າມະນຸດ ບັນດາບ້ານເປົ້າໝາຍ 03 ເມືອງ ແລະ ຢູ່ດ່ານສາກົນວັງເຕົ່າ ໄດ້ 27 ຄັ້ງ ມີຜູ້ເຂົ້າຮ່ວມ 3,342 ຄົນ, ຍິງ 1,669 ຄົນ; ໄດ້ລົງຕິດຕາມບັນດາຄອບຄົວທີ່ສຳເລັດການຝຶກອົບຮົມວິຊາຊີບແລ້ວ ຈຳນວນ 15 ຄົນ, ຍິງ 09 ຄົນ; ໄດ້ສົ່ງເດັກກັບບ້ານພາຍຫຼັງສຳເລັດການຝຶກອົບຮົມແລ້ວ ຈຳນວນ 04 ຄົນ ເປັນຍິງທັງໝົດ; ໄດ້ຮັບການຊ່ວຍເຫຼືອຈາກອົງການວິນຣ໋ອກສາກົນ ຈັດຝຶກ

ອົບຮົມໃນການລ້ຽງໄກ່ ໃຫ້ແກ່ກຸ່ມເປົ້າໝາຍແຮງງານເຄື່ອນຍ້າຍ ທີ່ກັບຄືນບ້ານ ແລະ ຈັດຝຶກອົບຮົມການເລີ່ມຕົ້ນທຸລະກິດຂະໜາດນ້ອຍ ໃຫ້ແກ່ຜູ້ໄດ້ຮັບຜົນປະໂຫຍດຂອງໂຄງການຫຼຸດຜ່ອນຄວາມສ່ຽງຈາກການຄ້າມະນຸດ ມີຜູ້ເຂົ້າຮ່ວມທັງໝົດ 76 ຄົນ, ຍິງ 64 ຄົນ, ຫຼັງຈາກນັ້ນກໍ່ໄດ້ລົງປະເມີນກຸ່ມທີ່ສຳເລັດການຝຶກອົບຮົມລ້ຽງໄກ່;

**2. ສິ່ງທ້າທາຍ**

ຄຽງຄູ່ກັບດ້ານດີຜົນງານທີ່ກ່າວມານັ້ນ, ແຕ່ກໍ່ຍັງມີບາງຂໍ້ຄົງຄ້າງ ຈະຕ້ອງໄດ້ສືບຕໍ່ປັບປຸງແກ້ໄຂ ໃນຕໍ່ໜ້າດັ່ງນີ້:

2.1. ພວກກໍ່ອາຊະຍາກຳການຄ້າມະນຸດ ມີການເຄື່ອນໄຫວທີ່ເລິກແລບ, ມີລັກສະນະສັບສົນກວ່າເກົ່າ, ມີລັກສະນະຂ້າມຊາດ, ການນຳໃຊ້ເຄື່ອງມືທີ່ທັນສະໄໝ ເຂົ້າໃນການສື່ສານຕິດຕໍ່ພົວພັນເຄື່ອນໄຫວ ກະທຳຜິດ ເຊິ່ງມີຄວາມຫຍຸ້ງຍາກໃນການຕິດຕາມ ຊອກຫາ ເປົ້າໝາຍຜູ້ກະທຳຜິດມາດຳເນີນຄະດີໄດ້ທັນເວລາ.

2.2. ສະພາບເສດຖະກິດຂອງໂລກ, ພາກພື້ນ ແລະ ພາຍໃນ ມີການເໜັງຕີງ, ອັດຕາເງິນຕ່າງປະເທດແຂ່ງຄ່າ, ເງິນກີບອ່ອນຕົວ, ຄ່າຄອງຊີບສູງ ແລະ ອື່ນໆ ເຊິ່ງເປັນຜົນກະທົບຕໍ່ການເຄື່ອນໄຫວເຮັດໜ້າທີ່ວຽກງານ ແລະ ດຳລົງຊີວິດຂອງປະຊາຊົນ ຫຼາຍສົມຄວນ.

2.3. ການໂຄສະນາ ປູກຈິດສຳນຶກ ຍັງບໍ່ໄດ້ກ້ວາງຂວາງເຂົ້າເຖິງກຸ່ມເປົ້າໝາຍເທົ່າທີ່ຄວນ ແລະ ການຄົ້ນຄວ້າສ້າງສື່ໂຄສະນາ ບໍ່ທັນມີຫຼາຍຮູບຫຼາຍສີ ແລະ ການໂຄສະນາ ບໍ່ທັນປົກກະຕິ-ຕໍ່ເນື່ອງ;

2.4. ລະດັບຄວາມຮູ້, ຄວາມເຂົ້າໃຈຂອງປະຊາຊົນຈຳນວນໜຶ່ງ ຕໍ່ກັບການໂຄສະນາຕົວະຍົວະຫຼອກລວງ, ຊັກຊວນຂອງພວກກຸ່ມຄ້າມະນຸດ ຍັງບໍ່ທັນດີ ຈຶ່ງເຮັດໃຫ້ຕົນເອງຕົກເປັນຜູ້ຖືກເຄາະຮ້າຍ, ກຸ່ມສ່ຽງ ຈາກການຄ້າມະນຸດ;

2.5. ການຮ່ວມມືສອງຝ່າຍ, ສາມຝ່າຍ ໃນການຈັດຕັ້ງປະຕິບັດຕາມແຜນການທີ່ສອງຝ່າຍໄດ້ຕົກລົງກັນບາງປະເທດ ຍັງບໍ່ທັນສາມາດຈັດຕັ້ງປະຕິບັດໄດ້ ຍ້ອນການແຜ່ລະບາດຂອງພະຍາດໂຄວິດ-19; ການຊ່ວຍເຫຼືອຫຼ້າຂອງອົງການຈັດຕັ້ງສາກົນຕ່າງໆ ສ່ວນຫຼາຍແມ່ນຊ່ວຍເຫຼືອດ້ານການຈັດກອງປະຊຸມ, ສຳມະນາ, ຝຶກອົບຮົມ ສ້າງຄວາມເຂັ້ມແຂງດ້ານບຸກຄະລາກອນ, ແຕ່ການຊ່ວຍເຫຼືອດ້ານພື້ນຖານໂຄງລາງ, ວັດຖຸອຸປະກອນ, ພາຫະນະຮັບໃຊ້ວຽກງານຕ້ານການຄ້າມະນຸດ ແມ່ນມີໜ້ອຍ.

**3. ສາເຫດທີ່ພາໃຫ້ມີດ້ານດີ, ດ້ານອ່ອນຄົງຄ້າງ ແລະ ບາງບົດຮຽນທີ່ຖອດຖອນໄດ້**

3.1. **ສາເຫດທີ່ພາໃຫ້ມີດ້ານດີ**

**3.1.1** ຍ້ອນລັດຖະບານ ເຫັນໄດ້ຄວາມສຳຄັນ ແລະ ຄວາມຈຳເປັນຕໍ່ວຽກງານຕ້ານການຄ້າມະນຸດ ຊຶ່ງໄດ້ກຳນົດແນວທາງ, ແຜນນະໂຍບາຍອັນຖືກຕ້ອງ, ມີແຜນງານແຫ່ງຊາດ, ມີກົດໝາຍ, ມີນິຕິກຳລຸ່ມກົດໝາຍ, ມີງົບປະມານ ຕອບສະໜອງໃຫ້ແກ່ວຽກງານດັ່ງກ່າວ ເປັນແຕ່ລະໄລຍະ;

**3.1.2** ຍ້ອນຄວາມເອົາໃຈໃສ່ຊີ້ນຳ-ນຳພາຂອງປະທານ, ຮອງປະທານ, ຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ ແລະ ທ້ອງຖິ່ນ ຕະຫຼອດຮອດສະມາຊິກກອງເລຂາ ໃນການຈັດຕັ້ງເຄື່ອນໄຫວເຮັດວຽກງານຕາມພາລະບົດບາດຢ່າງຕັ້ງໜ້າ ແລະ ມີໝາກຜົນຕົວຈິງ;

**3.1.3** ຍ້ອນມີການຮ່ວມມື ແລະ ປະກອບສ່ວນຂອງປະຊາຊົນບັນດາເຜົ່າໃນສັງຄົມ ໃນການສະກັດກັ້ນ ແລະ ຕ້ານການຄ້າມະນຸດ;

**3.1.4** ຍ້ອນມີການປະສານສົມທົບ ແລະ ຮ່ວມມື ເຊິ່ງກັນ ແລະ ກັນ ໃນການສະກັດກັ້ນ ແລະ ຕ້ານການຄ້າມະນຸດຢູ່ພາຍໃນ ແລະ ຕ່າງປະເທດ ຢ່າງຕໍ່ເນື່ອງ.

3.2. **ສາເຫດທີ່ພາໃຫ້ມີຂໍ້ຄົງຄ້າງ**

**3.2.1** ຄວາມຮັບຮູ້ ຄວາມເຂົ້າໃຈຢ່າງກ້ວາງຂວາງ ແລະ ເລິກເຊິ່ງຕໍ່ພາລະບົດບາດ, ໜ້າທີ່, ຄວາມຮັບຜິດຊອບໃນສະກັດກັ້ນ ແລະ ຕ້ານການຄ້າມະນຸດ ຂອງພະນັກງານຈຳນວນໜຶ່ງ ຢູ່ໃນບາງຂະແໜງການນັບທັງຢູ່ສູນກາງ ແລະ ທ້ອງຖິ່ນ ຍັງຈຳກັດ;

**3.2.2** ຍ້ອນພວກກໍ່ອາຊະຍາກຳຕ່າງໆ ນຳໃຊ້ເທັກໂນໂລຊີຂໍ້ມູນຂ່າວສານໃນການໂຄສະນາຊວນເຊື່ອຜູ້ຖືກເຄາະຮ້າຍ, ຕິດຕໍ່ປະສານກັນໃນການກໍ່ກະທຳຜິດ ເຊິ່ງມີຄວາມຫຍຸ້ງຍາກນຳເອົາຕົວມານຳເນີນຄະດີ, ຫົວໂປ່ໂຕ

ການກະທຳຜິດເປັນຄົນຕ່າງປະເທດຢູ່ຕ່າງປະເທດ ບັນຊາກຸ່ມແກ້ງເຄື່ອນໄຫວໃນລາວ, ສ່ວນຜູ້ຖືກຈັບມາດຳເນີນຄະດີ ສ່ວນຫຼາຍແມ່ນລູກຈ້າງ ທີ່ຖືກຊື້ຈ້າງມາກະທຳຜິດເທົ່ານັ້ນ.

**3.2.3** ການໂຄສະນາຜົນຮ້າຍຂອງການຄ້າມະນຸດ ຍັງບໍ່ທັນເຖິງກຸ່ມເປົ້າໝາຍຢ່າງທົ່ວເຖິງ. ນອກຈາກນີ້, ລະບົບການຄຸ້ມຄອງແຮງງານລາວຢູ່ພາຍໃນ ແລະ ໄປອອກແຮງງານຢູ່ຕ່າງປະເທດ ແລະ ແຮງງານຕ່າງປະເທດມາອອກແຮງງານຢູ່ປະເທດເຮົາ ຍັງເຮັດບໍ່ທັນໄດ້ດີ, ບໍ່ທັນຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ ເຮັດໃຫ້ຜູ້ອອກແຮງງານຈຳນວນໜຶ່ງຕົກເປັນຜູ້ຖືກເຄາະຮ້າຍ;

**III. ຕີລາຄາຜົນໄດ້ຮັບ ໃນ 01 ປີ ຜ່ານມາ.**

- ສັງລວມແລ້ວ, ຕະຫຼອດໄລຍະຂອງການຈັດຕັ້ງປະຕິບັດວຽກງານການສະກັດກັ້ນ ແລະ ຕ້ານການຄ້າມະນຸດໃນປີ 2023 ຜ່ານມາ, ເຖິງວ່າ ສປປລາວ ໄດ້ປະເຊີນໜ້າກັບຫຼາຍບັນຫາທ້າທາຍຫຼາຍຢ່າງກໍ່ຕາມ ເປັນຕົ້ນແມ່ນ: ບັນຫາທາງດ້ານເສດຖະກິດຄ່າຄອງຊີບສູງ, ອັດຕາເງິນຕາຕ່າງປະເທດແຂງຄ່າ, ເງິນກີບອ່ອນຕົວ, ບັນຫາໄພພິບັດທຳມະຊາດ ກໍ່ເກີດຂຶ້ນຢ່າງຕໍ່ເນື່ອງລຽນຕິດ ແລະ ມີລັກສະນະຖີ່ຂຶ້ນ, ຊີວິດການເປັນຢູ່ຂອງປະຊາຊົນທີ່ຖືກກະທົບ ຢ່າງໜັກໜ່ວງພໍສົມຄວນ;
- ແຕ່ເຖິງຢ່າງໃດກໍ່ຕາມ ພາຍໃຕ້ການຊີ້ນຳ-ນຳພາຢ່າງໃກ້ຊິດຂອງລັດຖະບານ ແລະ ການເຄື່ອນໄຫວຢ່າງຕັ້ງໜ້າ ແລະ ມີຄວາມຮັບຜິດຊອບສູງຂອງຂະແໜງການທີ່ຮັບຜິດຊອບວຽກງານຕ້ານການຄ້າມະນຸດຂັ້ນສູນກາງ ແລະ ທ້ອງຖິ່ນ ໂດຍໄດ້ຮັບການສະໜັບສະໜູນເປັນຢ່າງດີຂອງປະຊາຊົນ ແລະ ຄູ່ຮ່ວມພັດທະນາ ສາມາດຈັດຕັ້ງປະຕິບັດວຽກງານຕ້ານການຄ້າມະນຸດ ໄດ້ມີຜົນສຳເລັດເປັນຢ່າງດີ;
- ເຮັດໃຫ້ມີກົງຈັກການຈັດຕັ້ງ, ມີບຸກຄະລາກອນທີ່ໜັ້ນໜາ ແລະ ເປັນລະບົບ, ມີບັນດານິຕິກຳ, ຄູ່ມື, ສື່ສິ່ງພິມໂຄສະນາຕ່າງໆ ແລະ ອຸປະກອນຮັບໃຊ້ວຽກງານຕ້ານການຄ້າມະນຸດ, ເຮັດໃຫ້ບຸກຄະລາກອນຂອງບັນດາຂະແໜງການຕ່າງໆທາງພາກລັດ ແລະ ເອກະຊົນຕະຫຼອດເຖິງພໍ່ແມ່ປະຊາຊົນ ມີຄວາມຮັບຮູ້, ເຂົ້າໃຈຕໍ່ວຽກງານຕ້ານການຄ້າມະນຸດ ແລະ ມີສະຕິປ້ອງກັນຕົວເອງ ແລະ ປະກອບສ່ວນເຂົ້າໃນວຽກງານສະກັດກັ້ນ ແລະ ຕ້ານການຄ້າມະນຸດ ຢ່າງກວ້າງຂວາງພໍສົມຄວນ;
- ເຮັດໃຫ້ບັນຫາການຄ້າມະນຸດ ໄດ້ຮັບການສະກັດກັ້ນ ແລະ ແກ້ໄຂຢ່າງທັນການແຕ່ຫົວທີ, ສາມາດນຳເອົາຜູ້ກະທຳຜິດມາລົງໂທດຕາມລະບຽບກົດໝາຍ ໄດ້ຢ່າງເດັດຂາດ, ສາມາດກອບກູ້ ປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍທີ່ເປັນຄົນລາວ, ຕ່າງປະເທດໄດ້ຈຳນວນຫຼາຍ ເຊິ່ງສະແດງອອກດັ່ງຕົວເລກຜົນງານທີ່ໄດ້ກຳນົດຂ້າງເທິງ;
- ເຮັດໃຫ້ ສປປລາວ ມີສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ, ລະບົບການບໍລິຫານປົກຄອງ ໄດ້ກ້າວເຂົ້າສູ່ລະບຽບກົດໝາຍ ແລະ ມີຄວາມທັນສະໄໝຫຼາຍຂຶ້ນ, ສັງຄົມ ນັບມື້ນັບມີຄວາມເທົ່າທຽມ ແລະ ຍຸດຕິທຳເປັນກ້າວໆ.

**ຫົວໜ້າກອງເລຂາ**

**ຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ**

ກອງເລຂາ

**ແກ່ນຈັນ ພົມມະຈັກ**